# ສ້ອຍສາຍຄຳ

ລິດຈະນາ ໂດຍ

ສຳລິດ ບົວສີສະຫວັດ

ໂຄງການປະລິວັດກົດໝາຍບູຮານລາວ

1992

# ສ້ອຍສາຍຄຳ

ຊຳລະ ແລະ ລິດຈະນາ

**ສຳລິດ ບົວສີສະຫວັດ**

ຈັດພິມໂດຍ

ໂຄງການປະລິວັດ ກົດຫມາຍບູຮານລາວ
ດ້ວຍທຶນອຸປະຖຳ ຈາກ ມູນນິທິໂຕໂຍຕາ ປະເທດຍີ່ປຸ່ນ

1992

ອຸທິນ ບຸນຍາວົງ

# ສ້ອຍສາຍຄຳ

ຊຳຣະ ແລະ ລິດຈະນາ
ໂດຍ ສຳລິດ ບົວສີສະຫວັດ

ຈັດທຳ ໂດຍ ທອງໃບ ໂພທິສານ
ອຳພອນ ຂັນທະວິໄລ

ທບ. 363/ພປ. 060792

ພິມເທື່ອທີ່ໜຶ່ງ 1992
ຈຳນວນ 2.000 ຫົວ
ສະຫງວນ ລິຂະສິດ

Sponsored by
THE TOYOTA FOUNDATION

# ຄຳນຳ

## ຂອງ

## ຜູ້ຊຳຣະ ແລະ ລິດຈະນາ

ເນື່ອງຈາກ ຂ້າພະເຈົ້າໄດ້ຊຳຣະ ແລະ ລິດຈະນາ ໜັງສື ມູລະຕັນໄຕ ອັນເປັນກົດໝາຍບູຮານ ຊຶ່ງໄດ້ຈັດພິມໄປແລ້ວ ປາກົດວ່າມີຜູ້ສົນໃຈ ຢ່າງກວ້າງຂວາງ. ດັ່ງນັ້ນ ຈຶ່ງມາຄິດວ່າຄວນຈະຊອກຫາກົດໝາຍບູຮານອື່ນໆມາລິດຈະນາ ແລະ ພິມເຜີຍແຜ່ ເພື່ອຕອບສະໜອງ ກັບຄວາມຮຽກຮ້ອງຕ້ອງການ ຂອງຜູ້ມີຄວາມປະສົງຢາກຄົ້ນຄວ້າຕື່ມອີກ. ເພາະກົດໝາຍບູຮານລາວນັ້ນ ມີຢູ່ຫລາຍຜູກຫລາຍມັດ ເຊັ່ນ: ກົດໝາຍພະທຳມະສາດຫລວງ, ມູລະຕັນໄຕ, ສ້ອຍສາຍຄຳ, ຄະດີໂລກຄະດີທຳ ແລະ ອື່ນໆອີກ. ສະນັ້ນ ຈຶ່ງໄດ້ເຮັດໂຄງການປະລິວັດ ກົດໝາຍລາວບູຮານຂຶ້ນ ແລະ ສະເໜີຂໍຄວາມອຸປະກຳຈາກ ມູນນິທິໂຕໂຍຕາ (TOYOTA FOUNDATION) ປະເທດຍີ່ປຸ່ນ ເພື່ອພິມເຜີຍແຜ່ ໜັງສືສ້ອຍສາຍຄຳ ທີ່ທ່ານເຫັນຢູ່ດຽວນີ້.

ເຖິງຢ່າງໃດກໍດີ ຫາກບໍ່ມີອຸປະສັກ ຫວັງວ່າຈະພະຍາຍາມຄົ້ນຄວ້າຊຳຣະ ແລະ ປະລິວັດແລ້ວພິມເຜີຍແຜ່ກົດໝາຍບູຮານອື່ນໆ

ອີກຕໍ່ໄປ ທັງນີ້ ກໍເພື່ອອະນຸລັກປົກປັກຮັກສາເອກະສານບູຮານດ້ານ ກົດໝາຍແລະເຜີຍແຜ່ ເພື່ອເປັນເຄື່ອງມືຄົ້ນຄວ້າຂອງນັກວິຊາການ ແລະຜູ້ສົນໃຈທົ່ວໄປ.

ອັນທີ່ຈິງ ບັນດາຄຳພີໃບລານຫລືໜັງສືຜູກໃບລານທີ່ນັກປາດ ບຸບພາຈານໃນອະດີດໄດ້ແຕ່ງແປງ ແລະ ຈານ (ຂຽນໃສ່ໃບລານ) ໄວ້ຫລາຍເລື່ອງຫລາຍລາຍ ເປັນທີ່ໜ້າສົນໃຈສຶກສາຄົ້ນຄວ້າ, ນັບ ວ່າເປັນສົມບັດຫລືມູນມໍລະດົກ ອັນມີຄ່າມະຫາສານ. ໃນປັດຈຸບັນມີຜູ້ ສຶກສາຄົ້ນຄວ້າເພີ່ມຂຶ້ນເລື້ອຍໆ ເພາະວ່າໃນເອກະສານເຫລົ່ານັ້ນຊົງ ໄວ້ເຊິ່ງສາຣະປະໂຫຍດຫລວງຫລາຍ ກາຍເປັນວັດທະນະທຳທີ່ສຳ ຄັນອັນໜຶ່ງ ຜູ້ສຶກສາຄົ້ນຄວ້າຈະໄດ້ຄວາມຮູ້ທາງບູຮານຄະດີ, ສົມ ຄວນທີ່ເຮົາອະນຸຊົນຈະອະນຸຮັກຄຸ້ມຄອງປົກປັກຮັກສາໄວ້ເປັນສົມບັດຄູ່ ບ້ານຄູ່ເມືອງລາວ. ແມ່ນແຕ່ຊາວຕ່າງປະເທດເຂົາເຈົ້າກໍຍັງສົນໃຈ ໃຫ້ການສະໜັບສະໜູນ ທັງນີ້ ກໍເພາະວ່າຄຳພີໃບລານ ທີ່ເພິ່ນ ຈານໄວ້ນັ້ນ ໄດ້ບັນຈຸໄວ້ເຊິ່ງສາຣະເນື້ອໃນ ທັງທາງຄະດີໂລກ ແລະຄະດີທຳ ຕະຫລອດຮອດສາຣະຄະດີຫລາຍຮູບຫລາຍສີ ມີທັງປະ ຫວັດສາດ, ຕຳນານ, ນິທານ, ອັກະຄະດີ, ຮີດຄອງປະເພນີສາ ລະພັດຢ່າງ ລວມທັງຕຳຣາໂຫລະສາດ, ຕຳຣາຢາບູຮານ, ສາຣະ ຄະດີດ້ານພະທຳຄຳສັ່ງສອນ ກໍມີພ້ອມບໍລິບູນ ທີ່ເປັນເຂັມທິດຊີ້ນຳປະ ຕິບັດທາງກາຍ ວາຈາ ໃຈ ເຊັ່ນ: ຫລັກຂອງສິນ, ສະມາທິ, ປັນ ຍາເປັນຕົ້ນ.

ສຳລັບຄຳພີສ້ອຍສາຍຄຳ ທີ່ລຶດຈະນານີ້ ໄດ້ຕົ້ນສະບັບໃບ

ລານຈາກຫໍສະໝຸດແຫ່ງຊາດ , ວຽງຈັນ . ມີ 37ໃບປາຍໜຶ່ງໜ້າ ກັບສອງແກວ . ໜ້າໜຶ່ງມີຫ້າບັນທັດ . ບອກໄວ້ວ່າ ສັງກະຣາດຣາ ຊາໄດ້ 1233 ຕົວ ປີມະແມ ຕີນິສົກ ເດືອນ 10 ແຮມ 5 ຄໍ່າ ວັນຈັນ . ມື້ເປີກສັນ ຂະໜັບທໍາມະວົງສາ ເປັນຜູ້ຂຽນ . ສະແດງ ວ່າໄດ້ຈານກ່າຍມາເປັນເວລາຮ້ອຍກວ່າປີແລ້ວ . ສະພາບພໍ່ອ່ານໄດ້ ຢູ່ແຕ່ຕົກຫລົ່ນຫລາຍ ທັງການກ່າຍກໍຜິດພາດຫລາຍ ຈຶ່ງຮູ້ສຶກຫຍຸ້ງ ຍາກໃນການຊໍາຣະ ແລະ ປະລິວັດ ແກ້ໄຂໄດ້ເປັນ ສ່ວນຫລາຍທີ່ ສຸດ ທີ່ຍັງສົງໄສມີໜ້ອຍຍັງຄົງໄວ້ຕາມເດີມ ເພື່ອໃຫ້ໂອກາດຄົນຮຸ່ນ ໃໝ່ໄດ້ຄົ້ນຄວ້າສືບຕໍ່ໄປ .

ເນື້ອໃນສາຣະຂອງຄໍາພີນີ້ ມີລັກສະນະແຕກຕ່າງ ຈາກມູລະ ຕັນໄຕ ເພາະກີຫລັກວິໄນ ປາຕິໂມກເປັນເກນສໍາລັບປຽບທຽບແລະ ໄດ້ວາງອັດຕາ ຂັນຄາຄໍ , ຂັນໄໝ , ຂັນສີມມາໄວ້ຕາມການະໜັກ ເບົາຂອງອາບັດພິກຂຸສົງ ໂດຍນໍາມາປຽບທຽບກັນ . ນອກຈາກນີ້ກໍມີ ຫລັກການປົກຄອງຂອງບູຮານແຊກໄວ້ເປັນບາງຕອນ (ລາຍລະອຽດ ເບິ່ງໃນປຶ້ມ) .

ທີ່ຈັດວ່າມີລັກສະນະພິເສດ ກໍຄືວ່າ ໄດ້ບອກຈະແຈ້ງວ່າແຕ່ງ ໃນຣັດຊະການ ພະເຈົ້າໂພທິສາຣະຣາດ ປະມານທ້າຍສະຕະວັດ ທີ 13 ຕົ້ນສະຕະວັດທີ 14 ນັບວ່າໄດ້ຮັບອິດທິພົນທາງພຸດທະສາດ ສະ ໜາໆຫລາຍທີ່ສຸດ . ເພາະໃນຍຸກນີ້ ພະພຸດທະສາດສະໜາ ຈະເລີນ ຮຸ່ງເຮືອງເຫລືອງເຫລື້ອມຫລາຍໃນເມືອງລາວ ກ່າວຕາມທີ່ປາກົດ ໃນປະຫວັດສາດບອກໄວ້ .

ບຸນກຸສົນຫລືຄຸນງາມຄວາມດີໃດໆ ຫາກເພິງມີຈາກການຊຳ
ຣະ ປະລິວັດ ແລະ ຈັດພິມປຶ້ມຫົວນີ້ ຂ້າພະເຈົ້າຂໍນ້ອມອຸທິດເປັນ
ເຄື່ອງບູຊາຄຸນເຫລົ່າບຸບພາຈານເຈົ້າ ບັນພະບຸຣຸດຂອງຊາດລາວ ທີ່
ໄດ້ສ້າງສົມ ມູນມໍລະດົກ ອັນລ້ຳຄ່າໄວ້ໃຫ້ອະນຸຊົນພາຍຊ້ອຍ ໄດ້ຄົ້ນ
ຄວ້າ ແລະ ສຶກສາ ດ້ວຍຄວາມເຄົາຣົບຢ່າງສູງ ແລະຮູ້ບຸນຄຸນຢ່າງ
ສຸດຊຶ້ງ.

ຂ້າພະເຈົ້າຂໍຂອບໃຈ ມູນນິທິໂຕໂຢຕາ ປະເທດຍີ່ປຸ່ນທີ່ເປັນ
ຜູ້ອຸບປະກຳໂຄງການ ປະລິວັດ ກົດຫມາຍບູຮານລາວ ໂດຍການໃຫ້
ທຶນໃນການຄົ້ນຄວ້າ ປະລິວັດ ແລະ ຈັດພິມປຶ້ມເຫລັ້ມດັ່ງກ່າວ ມາ
ນະໂອກາດນີ້ດ້ວຍ. ຫາກວ່າປາດສະຈາກ ການຊ່ວຍເຫລືອອັນເຕັມ
ໄປດ້ວຍຄຸນຄ່ານີ້ແລ້ວ ປຶ້ມຫົວນີ້ ຄົງຈະບໍ່ປາກົດໃນບັນນະໂລກເປັນ
ແນ່ແທ້.

ໂຄງການປະລິວັດກົດຫມາຍບູຮານລາວ

ສຳລິດ ບົວສີສະຫວັດ

# ສ້ອຍສາຍຄຳ

ສຸວິຣະກະ ມະຫາອຸປາລີເຖຣະເຈົ້າ ຍົກຍັງອະພິທັມມາ 7 ຄຳພີ ອອກມາເທດສະໜາປານະສັດທັງຫລາຍແລ ໂສຕຸຊະນະເຈົ້າທັງຫລາຍແລ ໂຍຄາວະຈະຣະເຈົ້າ ອັນຈັກເອົາຕົນຂ້າມນ້ຳອະມຸດຕະມະຫານະຄອນ ຈົ່ງຟັງຄຳສອນແຫ່ງພະຕະກາຕະຕະ໌ ອັນມະຫາອຸປາລີເຖຣະເຈົ້າ ກ່າວແຕ່ພາຍຫລັງນີ້ເທີ້ນ.

ບັດນີ້ ຈັກກ່າວປະຣາຊິກພິກຂຸ ພ່າຍຈາກສາດສະໜາພະພຸດທະເຈົ້າ ມີ 4 ປະການແລ ຄືວ່າເມຖຸນນັງທັມມັງປະຣາຊິກ 1 ອະທິນນັງໄກຍະປະຣາຊິກ 2 ສັນຈິດຈະມະນຸດສະວິຄະຫັງ ປະຣາຊິກ 3 ອຸດຕະຣິມະນຸດສະທັມມັງ ປະຣາຊິກ 4 ແລ. ເມື່ອວ່າ ເມຖຸນັງທັມມັງປະຣາຊິກນັ້ນ ຄືວ່າພິກຂຸໄປເສັບເມຖຸນທຳໃນຍິງ 3 ປະການ ຄື ຍິງຄົນ 1 ຍິງຜີ 1 ຍິງສັດ 1 ໃນຍິງ 3 ປະການນີ້ ມີມັກຄະ 3 ແຫ່ງ ຄືວ່າ ວັດຈະມັກຄະ ແລະ ປັດສາມັກຕະ ມຸກຂະມັກຕະແລ ເມື່ອວ່າ ວັດຈະມັກຄະນັ້ນ ໃນຮູກົ້ນແລ ເມື່ອວ່າປັດສາມັກຄະນັ້ນໃນຮູຢ່ຽວແລ ເມື່ອວ່າ ມຸກຂະມັກຄະນັ້ນ ໃນຮູປາກແລ ພິກຂຸກະທຳອີງ

ຄະຊາດແຫ່ງຕົນ ເຂົ້າໄປໃນມັກຄະ 3 ປະການນີ້ ຄືວ່າ ທະວານ ທັງ 3 ແຫ່ງ ຜູ້ຍິງ 3 ປະການນີ້ ແມ່ນມີປະຫມານທີ່ເສັ້ນຜົມ 1 ກໍ ເປັນເມຖຸນທຳປະຣາຊິກຂາດຄອງພິກຂຸເສຍແລ. ຍິງ 3 ປະການນີ້ ບໍ່ວ່າໃຫຍ່ ບໍ່ວ່ານ້ອຍ ແມ່ນວ່າຈິດເກີດມາຍາມນັ້ນ ອັນມີອັນແດງ ເຫມືອນດັ່ງຕ່ອນຊີ້ນນັ້ນກໍດີ ຄັນວ່າພິກຂຸໃຫ້ອົງຄະຊາດແຫ່ງຕົນ ເຂົ້າ ໄປທວານ 3 ປະການແຫ່ງຍິງນ້ອຍນັ້ນ ມາດຕາວ່າທີ່ເສັ້ນຜົມກໍເປັນ ປະຣາຊິກແລ ບໍ່ທີ່ແຕ່ຜູ້ຍິງແມ່ນຜູ້ຊາຍກໍດີມີມັກຄະ 2 ແຫ່ງ ຄືວ່າ ຮູກົ້ນ ຮູປາກ 2 ອັນນີ້ ຄັນວ່າ ພິກຂຸກະທຳໃຫ້ອົງຄະຊາດແຫ່ງຕົນ ເຂົ້າໄປໃນມັກຄະທວານ 2 ແຫ່ງ ຜູ້ຊາຍກໍເປັນເມຖຸນທຳປະຣາຊິກ ຂາດຄອງພິກຂຸເສຍແລ. ເມື່ອວ່າ ອະທິນນາປະຣາຊິກນັ້ນ ຄືວ່າພິກ ຂຸລັກຂອງທ່ານ ອັນມີເງິນ ແລະ ຄຳເປັນເຄົ້າ ລັກຂອງອັນໃດກໍດີ ມີປະຫມານຊິກຄຳ 1 ກໍດີ ເປັນອະທິນນາປະຣາຊິກແລ ພະພຸດທະ ເຈົ້າເທດສະຫນາວ່າ ປາທັງວາ ປາທະຣະທັງວາດັ່ງນີ້ແລ ຜີວ່າຄະ ທະປະນະມີຄ່າທີ່ບາດ 1 ເປັນເງິນບາດລອງກໍດີ ກໍເປັນອະທິນນາ ປະຣາຊິກກ້ອນ 2 ຂາດຄອງພິກຂຸແລ. ເມື່ອວ່າ ສັນຈິດຈະມະນຸດ ສະວິຄະທັງປະຣາຊິກນັ້ນ ພິກຂຸຂ້າຄົນ ຕັ້ງແຕ່ພໍກືພາຄັບພະໃນທ້ອງ ແມ່ ເປັນນ້ຳແຫລວທີ່ຕ່ອມນ້ຳມັນ ອັນຍ້ອຍຢູ່ປາຍຫາງທວາຍ ອັນຜ່າ 7 ສ່ວງນັ້ນ ພິກຂຸໃດຂ້າຄົນ ຄືລູກໃນທ້ອງນັ້ນ ເປັນສັນຈິດຈະປະຣາ ຊິກກ້ອນ 3 ຂາດຄອງພິກຂຸແລ. ເມື່ອວ່າ ອຸດຕະຣິມະນຸດສະທຳມະ ປະຣາຊິກນັ້ນໃດ ພິກຂຸກ່າວວ່າ ຕົນໄດ້ເກີງຊານແລ ຄືວ່າໂມກຂະ ທຳ 8 ແລ ສະມາທິແລ ສະມາປັດຕິແລ ມັກຄະ 4 ຜະລະ 4 ແລ

ວ່າດັ່ງນັ້ນເປັນອຸດຕະຣິມະນຸດສະທຳມັງ ປະຣາຊິກກ້ອນ 4 ຊາດ ຄອງພິກຂຸ ຈາກສາດສະໜາ ມີ 4 ປະການນີ້ແລ. ຄືວ່າໂທດແຫ່ງ ປະຣາຊິກ 4 ນີ້ ທີ່ນໂລກຊາວເມືອງວ່າເປັນຂັນຄາຄໍ 4 ຮ້ອຍແລ ມີຍົດພໍຜ່ານທາງໂທດ 8 ຮ້ອຍ ຜູ້ມີຍົດໃຫຍ່ແທ້ໃຫ້ໃສ່ 16ຮ້ອຍແລ. ຜິວ່າຂ້ອຍທ່ານ 2 ຮ້ອຍ ຜິວ່າກະຣຸນາກັນໃຫ້ຜ່າກ່ອງ ເປັນອັນຊອບ ຄອງສິກຂາບົດແລ.

ຈາກປະກົມປະຣາຊິກກ້ອນ 1 ພິກຂຸເສບເມກຸນະທຳມີສຸທິນ ເກຸນເສບເມຍເກົ່າ ກໍເປັນອາທິກຳບໍ່ຄວນເປັນຄອງພິກຂຸ. ທຸຕິຍະ ປະຣາຊິກກ້ອນ 2 ນັ້ນ ພິກຂຸລັກ ລັກທຳອິດເປັນອາທິກຳແລ. ຕະ ຕິຍະປະຣາຊິກ ກ້ອນ 3 ນັ້ນ ພິກຂຸຂ້າຄົນ ສຸກຸນະເກຸນກໍເປັນອາ ທິກຳແລ. ຈະຕຸດກະປະຣາຊິກຕົວກ້ອນ 4 ນັ້ນ ພິກຂຸ ຢູ່ແທບຫລິ່ງ ນ້ຳ ມຸດທາກ່າວອຸດຕະຣິມະນຸດສະທຳຕົວບໍ່ເກີງຊານວ່າ ຕົວເກີງ ຊານ ຕົວບໍ່ແກ່ວ່າຕົວແກ່ນັ້ນ ບໍ່ຄວນເປັນພິກຂຸແລ ເປັນປະຣາຊິກ ຕົວກ້ອນ 4 ນັ້ນແລ. ທີ່ນໂລກໃຫ້ໃສ່ຂັນຄາຄໍແລ ທົວພັນທົວຮ້ອຍ ໃຫ້ໃສ່ 8 ຮ້ອຍ ຂຸນກວານນ້ອຍໃຫຍ່ຫລວງມະຫລັດນາ ຄົນຝູງນີ້ ຂັນຄາຄໍ 6 ຮ້ອຍ ຫລວງເມືອງ ຫລວງແພງນາ ຄົນຝູງນີ້ ຂັນຄາຄໍ 5 ຮ້ອຍ ຫລວງຄ້ງງາ 5 ຮ້ອຍ ຊາວບ້ານຊາວເມືອງນັກບຸນຊຸບຄ້າ ຂັນຄາຄໍ 4 ຮ້ອຍ ຍິງຂັນຄາຄໍ 2 ຮ້ອຍ ຂ້ອຍຊາຍທ່ານຂັນຄາຄໍ ຮ້ອຍ 1 ຂ້ອຍຍິງຂັນຄາຄໍ 5 ບາດ ອັນນີ້ຄັນຄາຄໍທັງມວນແລ.

ບັດນີ້ ຈັກກ່າວສັງຄາທິເສດພິກຂຸ 13 ຕົວກ່ອນແລ. ສັນເຈ ຕະນິກາສຸກກະວິສັດຖິ ພິກຂຸສວ່າງອອກຍັງນ້ຳອະສຸຈິຕົນ ເໝືອນໄສ

ຍະສັກກະເກຸນເປັນສຸກກະວິສັດກີ ສັງຄາທິເສດກ້ອນ 1 ກາຍະສັງສັກຄັງ ພິກຂຸລູບບາຍຍັງກາຍະເນື້ອຕົນແຫ່ງຍິງນັ້ນ ຄືວ່າກະຫນິມອາພອນກໍດີ ປັດນ້ອຍສ້ອຍສັງວານກໍດີ ກາຍະສັງສັກຄັງສັງຄາທິເສດກ້ອນ 2ແລ. ທຸດກຸນລາຫິວາຈາທີ ພິກຂຸກ່າວຄໍາອັນທໍກຫນາເຊິ່ງຜູ້ຍິງມີ ຕົ້ນວ່າ ອົງຄະຊາດເປັນເລືອດເປັນຫນອງ ຄືວ່າຈາເກີ້ງກົ້ນເກີ້ງຫີນັ້ນ ເປັນທຸດກຸນລາຫິວາຈາທີ ສັງຄາທິເສດກ້ອນ 3. ອັດຕະກາມະປະຣິຈາຣິຍາ ພິກຂຸກ່າວຍ້ອງຍໍອົງຄະແຫ່ງຜູ້ຍິງ ໃຫ້ເຂົາມັກຕົນດັ່ງນັ້ນເປັນອັດຕະມາມະປະຣິຈະຣິຍາ ສັງຄາທິເສດກ້ອນ 4. ສັນຈະຣິຕັງ ພິກຂຸເປັນພໍ່ສື່ ນໍາຄໍາຜູ້ຊາຍໄປຫາຍິງໃຫ້ຂາເປັນຊູ້ເປັນເມຍກັນ ເປັນສັນຈະຣິຕັງ ສັງຄາທິເສດກ້ອນຫ້າ. ສັນຍາຈິ, ກຸຕິງພິກຂຸໄປເອົາຂວານ ສິ່ວຊິດອມຄົນທັງຫລາຍ ມາສ້າງກຸຕິນັ້ນເປັນສັນຍາກຸຕິງ ສັງຄາທິເສດກ້ອນ 6 ແລ. ມະຫັນລະກັງ, ພິກຂຸສ້າງວິຫານອັນໃຫຍ່ ອັນຂ້າມລ່ວງຍິ່ງ ປະຫມານໃນທີ່ອັນສົງບໍ່ໄດ້ສໍາເພາະອັນເປັນກັບດ້ວຍ ອຸບປັດທະຣົບອົນຕາຍອັນຫນຶ່ງບໍ່ມີ ປະຫມານບໍ່ພິກຂຸນວອຸນໄດ້ນັ້ນ ເປັນມະຫັນລະກັງ ສັງຄາທິເສດກ້ອນ 7. ທຸດໂກ ພິກຂຸກ່າວຫາພິກຂຸ ອັນເປັນປະຣາຊິກ ອັນຫາເຄົ້າຫາມູນບໍ່ໄດ້ດັ່ງນັ້ນ ທູດໂກ ສັງຄາທິເສດກ້ອນ 8. ອະໂທ, ພິກຂຸເອົາອັນອື່ນມາເປັນເລດ ເຫມືອນດັ່ງພິກຂຸສັບພັກຄີທັງຫລາຍ ກ່າວໃຫ້ເຈົ້າຕິສສະເກຸນ ພິກຂຸສັບພັກຄີນັ້ນ ລົງມາຈາກດອຍຄິດສະກູດເຫັນແພະເຊິ່ງກັບຈຶ່ງເອົາມາເປັນເລດວ່າ ແພະຕົວຜູ້ນັ້ນເປັນເຈົ້າຕິດສະເກຸນແພະຕົວແມ່ນັ້ນເປັນພິກຂຸນີແລ້ວ ວ່າເຈົ້າຕິດສະເກຸນເສບເມກຸນະທໍາ

ກັບພິກຂຸນີນັ້ນ ເປັນອະໂກ-ສັງຄາທິເສດກ້ອນ 9 ແລ. ເພທາບະ ພິກຂຸມ້າງສິງເໝືອນດັ່ງເທອະທັດມ້າງສິງນັ້ນ ເປັນສັ່ງຄະເພທາບະສັງຄາທິເສດກ້ອນ 10. ຕັດເສສັງຄະເພໂທພິກຂຸກັບຕາມ ຄືວ່າພິກຂຸອັນມ້າງສິງເໝືອນດັ່ງສັງຄະເພໂທ ເປັນສັງຄາທິເສດກ້ອນ 11. ພິກຂຸ-ມາອະວະຈຸຕິກະ ພິກຂຸສອນຍາກຄືວ່າ ອຸບປັດຊາກ່າວສັ່ງສອນ ດ້ວຍຄອນແກ່ສິກຂາບົດພະເຈົ້າຕັ້ງໄວ້ນັ້ນ ບໍ່ກໍເອົາເໝືອນສັນນະເກຣະເຈົ້າ ພິກຂຸທັງຫລາຍສອນບໍ່ຟັງ ເປັນອະວະຈຸດກະ ສັງຄາທິເສດກ້ອນ 12. ພິກຂຸປະເນ-ກຸລະທຸດສະໂກ ພິກຂຸປູກໝາກໄມ້ທັງຫລາຍ ແລ້ວທຳລາຍແກ່ກະກຸນນັ້ນ ເປັນກຸລະທຸດສະໂກສັງຄາທິເສດກ້ອນ 13. ສັງຄາທິເສດ 13 ຕົວນີ້ ຜີວ່າຂຸນພິຈາລະນາຕາມທົນໂລກໃຫ້ໃສ່ 2 ຮ້ອຍນັ້ນເທີ້ນຊອບແລ. ເຈົ້າຂຸນພິຈາລະນາໃຫ້ຫລິງດູບຸກຄະລະຜູ້ບໍ່ທຍາບຊ້າ ກ້າແຂງນັ້ນ ທາກອ່ອນໂຍມຈັກຕັ້ງຢູ່ໃນຄຳສອນແທ້ໂທດແຫ່ງບຸກຄະລະຜູ້ນັ້ນກໍເບົາ ໃຫ້ໃສ່ 3 ບາດແກ່ມັນຊອບຄອງແລ ເປັນດັ່ງພິກຂຸ ແລະ ສາມເນນ ອັນໄດ້ກະທຳຜິດເມື່ອພາຍລຸນແລ ຕັ້ງຢູ່ໃນຄອງສິກຂາບົດ ພະພຸດທະເຈົ້າຍັງໃຫ້ອະນຸຍາດແລ ຈາທ້ອງສັງຄາແລ້ວເທົ່ານີ້ແລ. ອາບັດອານິຍັດມີ 2 ຕົວນີ້ມາເປັນກຸລລະໄຈ ປະຣາຊິກກໍເປັນ ກຸນລະໄຈສັງຄາກໍເປັນແລ.

ອາບັດນິດສັກຄີ ມີ 30 ທົນໂລກ ໃຫ້ໃສ່ຂັນແປງຮ້ອຍໝື່ງກໍຊອບແລ ອາບັດປາຈິດຕີນີ້ 92 ຕົວ ທົນໂລກໃຫ້ໃສ່ 5 ບາດກໍຊອບແລ. ອາບັດປະຕິເທດສະນີ 4 ທົນໂລກໃຫ້ໃສ່ຂັນສີມມາ 2 ບາດແລ. ອາບັດເສກຂິຍາວັດ 75 ຕົວ ທົນໂລກໃຫ້ໃສ່ຂັນສີມມາ ດອກ

ໄມ້ເຜິ້ງຫອຍ ເຟືອງສ້ຽວສະຫລຶງໜຶ່ງ ກໍຊອບຄອງສິກຂາບົດແລ. ສິນພິກຂຸເຈົ້າທັງຫລາຍ ມີເກົ້າພັນໂກດປາຍແປດຮ້ອຍໂກດໜຶ່ງປາຍ ສີ່ລ້ານສາມພັນຫົກຕົວແລ. ອາບັດພິກຂຸເຈົ້າທັງຫລາຍນີ້ 7 ຕົວແລ. ປະຣາຊິກ ສັງຄາທິເສດ ອະນິຍັດນິດສັກຄີປາຈິດຕີ ປາຕີເທດສະນີ ເສກຂິຍະວັດທັງຫລາຍ ຕະໜມອນເອົາມານີ 7 ຕົວແລ.

ຈັກກ່າວ ສັງຄາທິເສດ 13 ຕົວ ພິກຂຸໃດຕ້ອງນັ້ນ ຄວນໃສ່ ທັນຕະກຳ ຄືວ່າໃຫ້ຂັບໜີແລ້ວ ຈຶ່ງສຳແດງເອົາພາຍລຸນ ກໍຍັງຄວນ ໄດ້ແລ. ຫົນໂລກໃຫ້ໃສ່ຂັບໄທມ ຫົວພັນຫົວຮ້ອຍແລ ຂຸນກວານນ້ອຍ ໃຫຍ່ ໃຫ້ໃສ່ 3 ຮ້ອຍແລ. ຫລວງມະຫລັດໃຫ້ໃສ່ 3 ຮ້ອຍ ຫລວງ ເມືອງ ຫລວງແພງນາໃສ່ 2 ຮ້ອຍ 2 ບາດ ຫລວງຄັງງາ 2ຮ້ອຍ 2 ບາດ ນັກບຸນຂຸນຄ້າໃສ່ 2 ຮ້ອຍ ຍິງໃສ່ຮ້ອຍໜຶ່ງ ຊາຍທ່ານໃສ່ 5 ບາດ ຍິງທ່ານໃສ່ 10 ສະຫລຶງ ຊອບຄອງສິກຂາບົດແລ ອັນນີ້ ຈາທ້ອງສັງຄາ 13 ຕົວງໃດ ກໍດັ່ງດຽວກັນແລ. ບັດນີ້ ຈັກກ່າວອາ ບັດກ່ອນແລ. ອາບັດນິດສັກຄີ 30 ອາບັດປາຈິດຕີ 92 ຕົວ ປະສົມ ເຂົ້າກັນເປັນ 122 ຕົວ ພິກຂຸຕົນໃດຕ້ອງອາບັດ 122 ຕົວນີ້ ຄວນ ສັ່ງສອນແລ ຫົນໂລກໃຫ້ໃສ່ຂັບຕູ້ກໍດີ ຂັບຕີກໍດີແລ ຫົວພັນ ຫົວຮ້ອຍ ໃຫ້ໃສ່ 2 ຮ້ອຍ ຂຸນກວານໃຫຍ່ນ້ອຍ 5 ບາດ ຊາວບ້ານ ຊາວ ເມືອງ ນັກບຸນຂຸນຄ້າ ໃຫ້ໃສ່ 5 ບາດ ຊາຍທ່ານໃສ່ 5 ສະຫລຶງ ຍິງທ່ານໃສ່ 2 ສະຫລຶງເຟືອງແລ. ຍິງຊາວເມືອງໃສ່ 10ສະຫລຶງ ອາບັດປາຕິເທດສະນີ 75 ຕົວ ອາບັດເສກຂິຍະວັດ 57 ຕົວ ຕະ ໜມອນເຂົ້າກັນມີ 132 ຕົວ ຕະໜມອນເຂົ້າກັນເປັນ 2 ຕົວພິກຂຸໃດ

ຕ້ອງອາບັດ 2 ຕົວນີ້ ຄວນສັ່ງສອນ ໃຫ້ຕັ້ງຢູ່ໃນຄອງສະຣະນາຄົມ ເທີ້ນ. ຫົນໂລກໃສ່ຂັບສົມມາ ຫົວພັນ ຫົວຮ້ອຍ ໃສ່ຮ້ອຍໜຶ່ງ ຂຸນກວານໃຫຍ່ນ້ອຍໃສ່ 5 ບາດ ຊາວເມືອງ ນັກບຸນຂຸນຄ້າ ໃສ່ 10 ສະຫລຶງ ຍິງຊາວເມືອງໃສ່ 5 ສະຫລຶງ ຊາຍທ່ານໃສ່ 2 ສະຫລຶງ ຍິງທ່ານໃສ່ສະຫລຶງແລ. ບັດນີ້ຈັກຈາທ້ອງສົມມາກ່ອນແລ ຊອບຄອງສິກຂາບົດມີດັ່ງນີ້: ພະພຸດທະເຈົ້າຫາກເທດສະໜາໄວ້ ຢ່າສົງກາເທີ້ນ. ກາຍະກໍາ 3 ວະຈີກໍາ 4 ມະໂນກໍາ 3ແລ. ກາຍະກໍາ 3 ນັ້ນ ທ້າວພະຍາເວົ້າກັນຢູ່ຕົວຢ່າງກາຍບໍ່ຂຶທາງໜຶ່ງ ຄູບາອາຈານເວົ້າກັນຢູ່ຕົວຢ່າງກາຍ ບໍ່ຂຶທາງໜຶ່ງ, ກາຍເມຍທ່ານບໍ່ຂຶທາງໜຶ່ງອັນໜຶ່ງ ຂຶ້ນຄອບພໍ່ບ້ານນັ່ງກາຍອານາເຂດໜຶ່ງ, ຂຶ້ນຄອບພໍ່ວັດນັ່ງກາຍອານາເຂດໜຶ່ງ, ອັນໜຶ່ງ ປິດໝາກໄມ້ ສົມຫວານຂອງວັດຂອງບ້ານບໍ່ຄອບເຈົ້າຂອງ ໂທດຝູງນີ້ຖືກທຸກກົດແລ. ສັງຄາຫົນໂລກໃຫ້ໃສ່ 10 ສະຫລຶງເທີ້ນ. ວະຈີກໍານັ້ນ ຜູ້ໃດໄດ້ດ່າພໍ່ ດ່າແມ່ເກົ້າແມ່ນ້າອາວຊາວເຊື້ອກໍດີ ດ່າຄູບາອາຈານກໍດີ ໂຄດວົງສາທີ່ເພິ່ງທີ່ອາໄສກໍດີ ໂທດຝູງນີ້ຈະຖືກວະຈີກໍາແລ. ຫົນໂລກວ່າເປັນສັງຄາແລເຂັນໄໝແລ. ມະໂນກໍາ 3 ນັ້ນ ໃຜໄດ້ປະໝາດພໍ່ແມ່ ຄູບາອາຈານ ນ້າອາວຊາວເຊື້ອກໍດີ ໄດ້ປະໝາດລູກທ່ານເມຍທ່ານນັ້ນ ກໍດີ ໄດ້ປະໝາດໂຄດຕະວົງສາທີ່ເພິ່ງທີ່ອາໄສກໍດີ ຝູງນີ້ຖືກສັງຄາທີເສດ ຫົນໂລກໃສ່ຂັບໄໝ 2 ຮ້ອຍ 2 ບາດ ຊອບຄອງສິກຂາບົດແລ.

ບັດນີ້ ຈັກກ່າວຮີດສະຫຍາ ທ້າວພະຍາມະຫາກະສັດແລ ເສນາອາມາດຣາຊະມຸນຕີຝູງນີ້ ກໍກຸນລະໄຈແລ ລູກເຂີຍກ່າວຮີດສະ

ຫຍາພໍ່ເມຍ ກໍກປາຕິເທດສະນີ ລູກເຂົ້າຫລານເຂີຍ ກ່າວຣິດສະຫຍາເຈົ້າໂຄດເຈົ້າວົງ ກໍກທຸກກົດແລ ເຈົ້າໂຄດເຈົ້າວົງ ຣິດສະຫຍາລູກເຂົ້າລູກເຂີຍ ກໍກສັງຄາ ພໍ່ເມຍ ກ່າວຣິດສະຫຍາລູກເຂົ້າຫລານເຂີຍ ກໍກປາຈິດຕີແລ ແມ່ກ່າວຣິດສະຫຍາລູກເຕົ້າເຫງົ້າເຂີຍ ກໍກຂັບປາຕິເທດສະນີແລ ນ້ອງເຂີຍກ່າວຣິດສະຫຍາພີ່ເມຍ ຜູ້ຊາຍໃສ່ຂັບ 2 ບາດ ນ້ອງເຂີຍກ່າວຣິດສະຫຍາພີ່ເມຍຜູ້ຍິງໃສ່ໂທດບາດໜຶ່ງ ໃຜກ່າວຣິດສະຫຍາຫົວຄູສັງຄະຣາດ ກໍກໂທດຫລູນເຫລັ້ມພັນ ນ້ຳມັນໜື່ນ ກ່າວໂທດສົມເດັດສັງຄະຣາຊາພະພີ່ນ້ອງ ໂທດຫລູນເຫລັ້ມຮ້ອຍ ກ່າວປະໝາດຈົວເນນ ໂທດຫລູນເຫລັ້ມບາດແລ ຫົວສົມເດັດພະພີ່ນ້ອງ ມີນທົນເສັ້ນກະດີ 7 ຫ້ອງ ເສົາກະດີທ່ານໜ້າຕ້າງ 5 ກໍາ ດອດ 7 ສອກ ພື້ນ 2 ສອກ ຈິ່ງສົມຄວນເປັນວັດຫົວເຈົ້າຊາສົມເດັດພະພີ່ນ້ອງແລ ພະພຸດທະເຈົ້າອະນຸຍາໂຕທາກໃຫ້ອະນຸຍາດແກ່ພິກຂຸທັງຫລາຍແລ. ປະຣາຊິກມີຄ່າ 4 ຮ້ອຍ ສັງຄາມີຄ່າ 2 ຮ້ອຍ 2 ບາດ ອະນິຍັດມີຄ່າຮ້ອຍ 4 ບາດ ອາບັດອະນິຍັດນັ້ນຮູ້ເກີດເປັນກຸນລະໄຈປາຣາຊິກ ກຸນລະໄຈສັງຄາກໍເປັນແລ. ປາຈິດຕິມີຄ່າຮ້ອຍໜຶ່ງ ປາຕິເທດສະນີມີຄ່າກ່ອງ 5 ບາດ ທຸກກົດມີຄ່າ 2 ບາດ ທຸບພາສິດມີຄ່າບາດໜຶ່ງ.

ຈັກຈາອຸບປະຈານ ແກ່ບຸກຄະລະຜູ້ເປັນໃຫຍ່ກວ່າທ່ານ ຄືວ່າເປັນພໍ່ບ້ານລໍາເມືອງ ໃຫ້ສິ່ງຊອມຮັກສາອຸບປະຈານນາ ອຸບປະຈານບ້ານ ອຸບປະຈານເຮືອນ ຢອງວ່າມີຂ້າລັກຄະໂມຍໂຊຍສົກ ຜູ້ຮ້າຍເຂົ້າມາລັກ ງົວຄວາຍ ຂ້າຄືນກໍດີ ເຂົາມາລັກໄມ້ຄົກ ກົກເຮືອ

ບໍ່ເກືອແລະຕົ້ນເພີ້ງ ໂທດຝູງນີ້ກີຸກຂັ້ນທຸກກິດແລ. ອັນໜຶ່ງງົວລາກ-ຫວາຍຄວາຍລາກຄ່າວ ບ່າວລາກສາວ ຂ້າໜີເຈົ້າບ່າວໜີນາຍກໍດີ ເຂົາໄດ້ເຂົ້າມາລັກເມື່ອນອນຫລອນເມື່ອຫລັບກໍດີ ອັນໜຶ່ງຄືວ່າຊ້າງຕາຍ ຂະໜາຍຫລ່ອນກໍດີ ເຂົາໄດ້ເຂົ້າມາລ່ວງລັດຕັດແດນໃຫ້ພໍ່ບ້ານຕວດຕາດູແລ ໃຫ້ຄຶດຫາຣີດ ຂີດຫາຄອງ ຕອງຫາໂທດ ໂທດຝູງນີ້ກີຸກຂັ້ນສັງຄາແລ. ອັນໜຶ່ງຄືວ່າງົວຄວາຍກິນອ້ອຍ ເດັກນ້ອຍຕີກັນຜິດ 3 ທີໃຫ້ດ່າ ຜິດ 3 ທ່າໃຫ້ພໍ່ແມ່ສັ່ງສອນ ປອງວ່ານ້ຳລອດຝາຍຄວາຍລອດຄອກ ລູກບໍ່ເອົາຄຳບອກຄຳສອນພໍ່ແມ່ ໃຫ້ເກົ້າແກ່ພິຈາລະນາ ໂທດຝູງນີ້ກີຸກກຸນລະໄຈແລ.

ອັນໜຶ່ງ ຄືວ່າຊັບໃນດິນສິນໃນນ້ຳ ອຸບປະຈານໄຮ່ 10 ວາ ອຸບປະຈານນາ 15 ວາ ອຸບປະຈານບ້ານ 30 ວາ ອຸບປະຈານວັດຕະຕາຄົດ ໃນເຂດຂົງຂັນທະສີມາ ສາລາເພິ່ນຄ້າຂາຍ ປາຍດ່ານຝ່າຍນີ້ ກະໜີສອນກວນສ້າງໃນອຸບປະຈານ ນາຍບ້ານທີ່ນັ້ນທັງມວນແລ ໂທດຝູງນີ້ກີຸກຂັ້ນສັງຄາທີເສດ ບຸກຄະລະຜູ້ມີປະຫຍາພິຈາລະນາຍັງຄຳຝູງນີ້ ໃຫ້ກີ່ໃຫ້ສັງບປາ ຢ່າເຫັນແກ່ຄ່າຈ້າງຮາງວັນ ຢ່າເຫັນແກ່ລູກແກ່ເມຍພໍ່ແລະແມ່ເທີ້ນ. ໃຫ້ພິຈາລະນາຕາມຄຳສອນ ແຫ່ງພະພຸດທະເຈົ້າເທດສະໜາໄວ້ນີ້ເທີ້ນ ຄັນຫາກໃຜບໍ່ຟັງຄຳສອນ ພະພຸດທະເຈົ້າທັງຫລາຍຝູງນີ້ ຈັກກີຸກປະຣາຊິກກ້ວນ 2ເອົາຕົວໄປເຜົາເສຍໃນນະຣົກພຸ້ນບໍ່ສິງໄສຊະແລ ຢ່າສົງກາເທີ້ນ ຜິດນີ້ຮອຍບາດ ຜິດປາກຮ້ອຍເບ້ຍ ຂອງເສຍໃຫ້ໃຊ້ທີ່ຂອງໄດ້ ໃຫ້ທຳຂວັນຕ່າງຫາກ ໂທດຕ່າງຫາກ ໂທດໃຫ້ເກົ້າແກ່ສູ່ຂວັນນັ້ນ ຂອງມີເທົ່າໃດໃຫ້ສູ່ຂວັນ

ເທົ່ານັ້ນເທີ້ນ. ບົດຟູງກ່າວແລ້ວ ແຕ່ພາຍຫລັງນັ້ນ ອອກມາແຕ່ພັດຊື
ມະນິກາຍພຸ້ນແລ.

ບັດນີ້ ຈັກກ່າວຊຸມພິຈາລະນາກ້ອຍຄຳ ບໍ່ຊອບເພິງມ້າງເສຍ
ມີ 6 ປະການ 1 ຕັດດ້ວຍອຳນາດອາດຍາແຫ່ງຕົນອັນ 1 ຕັດດ້ວຍ
ບຽດບຽນເອົາຂອງທ່ານ ອັນໜຶ່ງໄຕ່ຄວາມເມື່ອກາງຄືນ ອັນໜຶ່ງ
ຕົວຫາກໄຕ່ເຫັນແລທັບປະຕູເສຍແລ ຕັດອັນໄດ້ໄຕ່ຄຳ ບໍ່ຕາມໄສ
ພາບ ອັນ 1, ແມ່ຍິງຕັດຄວາມອັນ 1 ແລ ຄວາມທັງຫລາຍຟູງນີ້
ບໍ່ຊອບໃຫ້ມ້າງຈິ່ງຄວນຜັດຕັດໃຫມ່ເທີ້ນ ຈິ່ງຊອບແລ. ບັດນີ້ຈັກກ່າວ
ປະຣາຊິກກ່ອນແລ ຜີວ່າປະຣາຊິກແຫ່ງທ້າວພະຍາ ເສນາອາມາດ
ຣາຊະມຸນຕີເສດກີແລ ຫວຍຄ້າ 100 ນ້ອຍໃຫຍ່ທັງຫລາຍ ຈັກກະ
ຢາຍ ຄາຖາວ່າກາຍະມິດສະກັງ ພຸມມະຊີວີຕັງ ໂຈຣັດທະນັງ ເມ
ກຸນັງ ທັມມໍກິດຈັງ ອະຣິດຕະກັງ ໂຍທານິຣິຍັງ ຍຸດທະກາປາຣາຊິ
ກັງ ໂຍທະນະຄະຣະຄຸຣຸກິດຈັງ ນະຄະຣະຄັນຕະວາ, ປະຣາຊິກທັງ
9 ແລ. ກາຍະມິດສະກັງ ກ່າວຕ້ານຈາຣະຈາດອມທ່ານຟູງອື່ນ ຜິດ
ທ່ານອງໂທດຟູງນີ້ ກີກປະຣາຊິກກ້ອນ 1 ຊາຍ 4 ຕຳລຶງ ຍິງ 2
ຕຳລຶງພຸມມະຊີວີຕັງ ບຸກຄະລະຜູ້ໃດ ກະທຳໃຫ້ເສຍຊີວິດພະກະສັດ
ໂທດຟູງນີ້ກີກປະຣາຊິກກ້ອນ 2 ຊາຍ 6 ຕຳລຶງ ຍິງ 3 ຕຳລຶງ
ໂຈຣັດທະນັງ ບຸກຄະລະ ຜູ້ໃດໄດ້ລັກເອົາເຂົ້າຂອງທ່ານນັ້ນ ໂທດ
ຟູງນີ້ກີກກ້ອນ 3 ຊາຍ 8 ຕຳລຶງ ຍິງ 4 ຕຳລຶງ ເມກຸນັງທັມມັງ
ບຸກຄະລະຜູ້ໃດໄປເສບສົມເມຍທ່ານນັ້ນ ໂທດຟູງນີ້ກີກປະຣາຊິກກ້ອນ
4 ຊາຍ 10 ຕຳລຶງຍິງ 5 ຕຳລຶງ ກິຈຈັງ ອະຣິຕຕະກັງ ບຸກຄະ

ລະມະຫາເສນາໄປຊຸມນຸມ ຄວາມນີ້ບໍ່ເວົ້າ ເມື່ອພາຍລຸນຈິ່ງຮິດສະ

ຫຍາຕິຕອູນທ່ານ ໂທດຝູງນີ້ກືກປະຮາຊິກກ້ອນ 5 ຊາຍ 12 ຕຳລຶງ

ຍິງ 6 ຕຳລຶງ ໂຍທານິຣິຍັງ ບຸກຄະລະມະຫາເສນາພາຣິພົນມະໜົນ

ລະໂຍທາ ໄປລີ້ຢູ່ປ່າ ໂທດຝູງນີ້ກືກປະຮາຊິກກ້ອນ 6 ຊາຍ 14

ຕຳລຶງ ຍິງ 7 ຕຳລຶງ ຍຸດທະຫາປາຣາຊິກັງ ບຸກຄະລະຜູ້ໄປຣົບ

ເສິກຢູ່ແລ ພາບ່າວໜີຈາກເຈົ້າ ໂທດຝູງນີ້ກືກປະຮາຊິກ 7 ຊາຍ

16 ຕຳລຶງຍິງ 8 ຕຳລຶງ ໂຍທະນະຕະຣັງ ບຸກຄະລະມະຫາເສນາ

ພາບ່າວຄົດຈາກເມືອງໂຕໄປເຂົ້າເມືອງອື່ນ ໂທດຝູງນີ້ກືກປະຮາຊິກ

ກ້ອນ 8 ຊາຍ 18 ຕຳລຶງ ຍິງ 9 ຕຳລຶງ ຄຸຣຸກິຈຈັງນະຄະຣະ

ຄັນຕະວາ ບຸກຄະລະອັນເປັນມະຫາເສນາ ອັນຮູ້ຂ່ຍາອາການບ້ານ

ເມືອງຮ້າຍດີ ບໍ່ໄປຊຸມນຸມໂທດຝູງນີ້ກືກປະຮາຊິກກ້ອນ 9 ຊາຍຊັ່ງ

1 ຍິງ 10 ຕຳລຶງແລ. ຫົວຄູສັງຄະຣາດ ສູ່ເມຍເສນາອາມາດ

ໂທດພໍ່ຊາຍກືກປະຮາຊິກກ້ອນ 9 ຍິງກືກຕົວກ້ອນ 4 ຫົວຊາພະພີ່

ນ້ອງສູ່ເມຍຂຸນນາງ ໂທດພໍ່ຊາຍ ກືກປະຮາຊິກຕົວກ້ອນ 4 ຍິງຕົວ

ກ້ອນ 1 ແລ ຂຸນນາງສູ່ເມຍໄພ່ນ້ອຍ ໂທດພໍ່ຊາຍກືກປະຮາຊິກຕົວ

ກ້ອນ 8 ຍິງກືກຕົວກ້ອນ 1 ໄພ່ນ້ອຍສູ່ເມຍຂຸນນາງ ໂທດພໍ່ຊາຍ

ກືກປະຮາຊິກຕົວກ້ອນ 4 ຍິງກືກຕົວກ້ອນ 1 ໄພ່ນ້ອຍສູ່ເມຍພະຍາ

ເຈົ້າເມືອງຕີນາງນັກສະໜົມ ໂທດພໍ່ຊາຍກືກປະຮາຊິກກ້ອນ 9 ຍິງ

ກືກຕົວກ້ອນ 4 ຕີ ພໍ່ຊາຍ 500 ຕີ ແມ່ຍິງ 150 ເຂົ້າຄຸກ 3

ເດືອນຈິ່ງໃຫ້ອອກເປັນຂ້ອຍຫຍ້າຊ້າງມ້າ 3 ປີຈິ່ງໝົດແລ. ໄພ່

ນ້ອຍສູ່ເມຍກັນ ຜົວໜີໄປເອົາການຫລົ້ນຊູ້ທາງຫລັງ ໂທດຊາຍ

122 ບາດ ຍິງ 6 ຕຳລຶງແລ ຜົວໄປທຸຣະຄ້າຂາຍ ຊາຍຊູ້ເອົາ 8 ຕຳລຶງ ຍິງ 4 ຕຳລຶງ ຄັນວ່າຜົວຢູ່ບ້ານຫລົບຊູ້ ໃຫ້ເອົາໂທດຊາຍ 62 ບາດ ຍິງ 3 ຕຳລຶງແລ ລູກເຂີຍສູ່ແມ່ເມຍບໍ່ມີຜົວ ໂທດຊາຍ 3 ບາດ ຍິງຕຳລຶງ 1 ໃຫ້ເຖົ້າແກ່ກິນບາດ 1 ໃຫ້ເຈົ້າໂຄດບາດໜຶ່ງ ຄາຣະວະຫລັກຄຳ 3 ບາດ ຈຶ່ງໝົດໂທດແລ. ພໍ່ເຂີຍສູ່ນ້ອງເມຍບໍ່ມີຜົວ ໂທດຊາຍ 3 ບາດ ຍິງ 3 ບາດ ເຖົ້າແກ່ກິນ 2 ບາດ ສົມມາແມ່ 2 ບາດ ສົມມາພໍ່ບາດ 1 ເຈົ້າໂຄດຄວາຍຕົວ 1 ຈຶ່ງໝົດໂທດແລ. ພໍ່ເຂີຍສູ່ນ້ອງເມຍ ມີ ຜົວ ເອົາໂທດຊາຍກຶກປະຣາຊິກ 4 ຍິງກຶກສັງຄາ. ນ້ອງເຂີຍສູ່ພີ່ເມຍບໍ່ມີຜົວ ໂທດຊາຍຮ້ອຍ 1 ຍິງຮ້ອຍ 1 ປາຍບາດ ທັງຍິງທັງຊາຍຮ້ອຍປາຍບາດເຖົ້າແກ່ກິນບາດ 1 ສົມມາແມ່ 2 ບາດ ສົມມາພໍ່ 2 ບາດຈຶ່ງໝົດໂທດແລ. ນ້ອງເຂີຍສູ່ພີ່ເມຍມີຜົວ ໂທດຊາຍກຶກປະຣາຊິກ 2 ຍິງປະຣາຊິກກ້ອນ 1 ພໍ່ຫລົ້ບລູກສາວບໍ່ມີຜົວໂທດພໍ່ກຶກສັງຄາ ຍິງກຶກທຸກກິດໃຫ້ເຖົ້າແກ່ກິນ 5 ບາດ ຄາຣະວະຫລັກຄຳ 5 ບາດ ໃຫ້ແມ່ 3 ບາດ ໃຫ້ເຈົ້າໂຄດ 2 ບາດຈຶ່ງໝົດໂທດແລ. ພໍ່ສູ່ລູກສາວມີຜົວໂທດຊາຍປະຣາຊິກ 8 ຍິງ ປະຣາຊິກ 1 ແລ ພີ່ອ້າຍສູ່ນ້ອງສາວບໍ່ມີຜົວ ໂທດຊາຍກຶກປາຈິດຕິຍິງກຶກກຸນລະໄຈແລ ໃຫ້ເຖົ້າແກ່ກິນບາດ 1 ໃຫ້ເຈົ້າໂຄດບາດ 1 ຄາຣະວະຫລັກຄຳຕຳລຶງ 1 ເຜິ້ງພັນ 1 ຈຶ່ງໝົດໂທດແລ. ພີ່ອ້າຍສູ່ນ້ອງສາວມີຜົວ ໂທດຊາຍກຶກສັງຄາ ຍິງກຶກປາຈິດຕິເຖົ້າແກ່ກິນບາດ 1 ເຈົ້າໂຄດ 2 ບາດ ຄາຣະວະຫລັກຄຳ 5 ບາດ ຈຶ່ງໝົດໂທດແລ. ລູກຊາຍໄດ້ 15 ປີ ຢ່າໃຫ້ນອນ

24/VII
ຫ້າມຈຳໜ່າຍ

ນຳເອື້ອຍບໍ່ຄວນ ລູກຍິງໄດ້ 15 ປີ ບໍ່ໃຫ້ນອນດອມພໍ່ແລະອ້າຍບໍ່ຄວນ ແລ.

ບັດນີ້ ຈັກກ່າວຍິງ 12 ຈຳພວກກ່ອນແລ. ພຸດທະລັກຂິຕາ, ທຳມະລັກຂິຕາ ສັງຄະຣັກຂິຕາ ສາມເນຣຣັກຂິຕາ ປິຕຸຣັກຂິຕາ ພາຕະຣັກຂິຕາ ພະຄິນີຣັກຂິຕາ ໂຄດຕະຣັກຂິຕາ ສະຫະທຳພິກະຣັກຂິຕາດັ່ງນີ້ແລ ພຸດທະຣັກຂິຕານັ້ນ ຍິງຜູ້ 1 ເປັນຂ້ອຍພະພຸທະເຈົ້າແລ. ທັມມະຣັກຂິຕານັ້ນ ຍິງຜູ້ 1 ເປັນຂ້ອຍພະທຳແລ ສັງຄະຣັກຂິຕາ ຍິງຜູ້ 1 ເປັນຂ້ອຍພະສົງແລ ສາມເນຣະຣັກຂິຕາ ຍິງຜູ້ 1 ເປັນຂ້ອຍເຈົ້າສາມເນນ ມາຕາຣັກຂິຕາ ຍິງຜູ້ 1 ແມ່ຣັກສາ ປິຕຸຣັກຂິຕາ ພໍ່ຣັກສາ ພາຕະຣັກຂິຕາ ຜູ້ 1 ພີ່ຊາຍຣັກສາ ພະຄິນີຣັກຂິຕາ ຍິງຜູ້ 1 ພີ່ຍິງຣັກສາ ໂຄດຕະຣັກຂິຕາ ຍິງຜູ້ 1 ພໍ່ແມ່ຕາຍອ້າຍນ້ອງຕາຍໝົດ ໂຄດວົງຣັກສາແລ ພໍ່ແມ່ບໍ່ມີຢູ່ນຳບ້ານເມືອງສະຫາຍແລ ໃນຍິງ 9 ຄົນນັ້ນ ຢອງວ່າມີຊາຍມາສູ່ຮັກມັກເອົາມາເປັນຄອງເຮືອນ ມີໃຫ້ຄວນແຕ່ງຕາມຮີດເທີ້ນ ຍິງຜູ້ 1 ຢອງວ່າມີຊາຍຜູ້ໃດມາສູ່ຮັກມັກເປັນຄອງເຮືອນ ມີເຫລົ້າ 2 ໄຫໄກ່ 2 ຄົວ ເງິນຮ້ອຍເທົ່ານັ້ນແລ ຍິງສາວ 10 ຄົນນີ້ ຢອງວ່າມີຊາຍມາສູ່ເອົາເປັນເມຍຄອງເຮືອນບໍ່ແຕ່ງ ຢູ່ບໍ່ນານເທົ່າໃດ ເມຍມັນກະທຳມິດສາຈານບໍ່ຂື້ນພໍ່ຊາຍຊູ້ນັ້ນ ໃຫ້ໃສ່ໂທດ 2 ຮ້ອຍ 2 ບາດ ຍິງໃສ່ຮ້ອຍຢາຍບາດ ອ້າຍເຈົ້າຜົວໃສ່ໂທດ 4 ຮ້ອຍ 2 ບາດ ຊອບຄອງແລ ເຫດວ່າສັນທະວາສີນີ້ນັ້ນຂາດເສຍແລ້ວ ຈິ່ງໂທດເພື່ອອັນແລ. ບັດນີ້ ຈັກກ່າວເມຍ 12 ຈຳພວກກ່ອນແລ. ເມຍຈຳພວກ 1 ຜົວກ່າວເມຍ

ໂອມ ເມຍຈຳພວກ 2 ທ້າວພະຍາປັນໃຫ້ເປັນເມຍ ເມຍຈຳພວກ 3 ໄດ້ໄກ່ເອົາມາເປັນເມຍ ເມຍຈຳພວກ 4 ເຂົາສູ່ກັນມີລູກ ຕົວໄປປົວກຳເອົາມາເປັນເມຍ ເມຍຈຳພວກ 5 ຕົວໄປໂອມເອົາເພິ່ນບໍ່ໃຫ້ ຕົວໄປຊູເອົາເປັນເມຍ ເມຍຈຳພວກ 6 ແຕກເສິກ ໄປສູ່ຂອັນເອົາການປ່າເອົາເປັນເມຍ ເມຍຈຳພວກ 7 ສາວມາສູ່ໂຕໂຕຈຶ່ງໄປແຕ່ງເອົາມາເປັນເມຍ ເມຍຈຳພວກ 8 ນັ້ນ ໂຕໄປສູ່ເຂົາໄວ້ຈຶ່ງເອົາມາເປັນເມຍ ເມຍຈຳພວກ 9 ນັ້ນ ຕົວໄປຂຶ້ມເຫງເອົາລູກຫລານຕົນມາເປັນເມຍ ເມຍຈຳພວກ 10 ນັ້ນ ຜູ້ເຂົາເປັນພະຍາດບໍ່ມີເງິນຕັ້ງຖາຍ ໂຕຈຶ່ງປົວເອົາເປັນເມຍ ເມຍຈຳພວກ 11 ນັ້ນ ຂົນກິນຂົນພັນເປັນເມຍທ່ານ ເມຍຈຳພວກ 12 ນັ້ນ ເອົາລູກເຂົາມາເປັນເມຍແລ ອັນ 1 ຂຶ້ມເຫງເອົາເມຍເຂົາງບໍາມາໂຕຂ້າຜົວເຂົາເສຍເອົາເປັນເມຍໂຕແລ ໃນເມຍ 12 ຈຳພວກນີ້ ໄດ້ແຕ່ງແປງຕາມບູຮານຈາຣິດ ບູຮານທຳແລ້ວ ຢູ່ບໍ່ນານເທົ່າໃດ ເຂົາກະທຳມິດສາຈານພານຄອງເມືອງ ໃຫ້ໃສ່ໂທດດັ່ງກ່າວມານີ້ເທີ້ນ.

ເມຍຈຳພວກ 1 ໂທດ 122 ບາດ ເມຍຈຳພວກ 2 ໂທດ 12 ກ້ອນ. ເມຍຈຳພວກ 3 ໂທດ 122 ບາດ. ເມຍຈຳພວກ 4 ໂທດ 11 ກ້ອນ. ເມຍຈຳພວກ 5 ໂທດ 10 ຕຳລຶງ 2 ບາດ. ເມຍຈຳພວກ 6 ໂທດ 10 ຕຳລຶງກ້ອນ. ເມຍຈຳພວກ 7 ໂທດ 9 ຕຳລຶງ 2 ບາດ. ເມຍຈຳພວກ 8 ໂທດ 9 ຕຳລຶງກ້ອນ. ເມຍຈຳພວກ 9 ໂທດ 8 ຕຳລຶງ 2 ບາດແລ. ເມຍຈຳພວກ 10 ໂທດ 8 ຕຳລຶງກ້ອນ. ເມຍຈຳພວກ 11 ໂທດ 7 ຕຳລຶງ 2

บาด. เมยจำพวก 12 โทด 7 ตำລິງກ້ອນແລ. ໃນເມຍ 12 ຈຳພວກນີ້ ຄັນເຂົາທຳມິດສາຈານພານຄອງເມືອງ ໃຫ້ໃສ່ໂທດດັ່ງກ່າວມານີ້ເທີນຊອບແລ.

ບັດນີ້ຈັກກ່າວຈາຄອງເມຍປະຮ້າງກັນ ເຂົ້າຂອງສ້າງໄດ້ນຳກັນນັ້ນ ຄວນປັນບໍ່ຄວນປັນໃຫ້ຮູ້ເທີ້ນ. ເມຍຈຳພວກໜຶ່ງ ອັນຄືນເຊົ້າຄ່ຳ ຄອຍຂຶນຂວາຍອຸບປະຖາກຜົວຕົນ ເໝືອນດັ່ງເຈົ້າຈິດຕະສາມເນນອຸບປະຖາກພະມະຫາຕິສະເຖນນັ້ນ ຊື່ອຸດຕະມະເມຍແລ. ຜີວ່າຜົວຊັງເຮັດຮ້າຍປະໜີ ຂອງເຮືອນອັນສ້າງໄດ້ນຳກັນ ບໍ່ຄວນເອົາໜີຈາກເມຍຈັກສິ່ງແລ ທີ່ເວັ້ນໄວ້ບໍ່ແມ່ນຂອງເຮືອນ ຫລັງຈຶ່ງເອົາເທີ້ນ. ເມຍຈຳພວກ 2 ນັ້ນ ກໍສ້າງແປງທີ່ແຕ່ຜົວງຫຍຸບກົກເມຍຫຍຸບປາຍ ບົວລະບັດຄອງວັດ ລາງເທື່ອໄດ້ລາງເທື່ອບໍ່ໄດ້ ຄັນຊັງຮ້າຍໜີປະ ຂອງສ້າງນຳກັນໃຫ້ຜ່າ 3 ໂກກຸາກ ຜົວເອົາໂກກຸາກ 1 ເມຍເອົາ 2 ໂກກຸາກແລ ເມຍຈຳພວກ 3 ນັ້ນ ຢຳຜົວເໝືອນດັ່ງພີ່ຊາຍ ຂອງກິນອັນໃດແຊບແພງໄວ້ໃຫ້ຜົວ ບົວລະບັດຕາມຍົດປັນຍາຕົວດັ່ງນັ້ນ ຄັນຜົວຫາກຊັງປະ ຂອງອັນສ້າງນຳກັນໃຫ້ປັນ 4 ໂກກຸາກ ໄວ້ແກ່ເມຍ 3 ໂກກຸາກ ໃຫ້ຜົວໂກກຸາກ 1 ເມຍຈຳພວກ 4 ນັ້ນ ກອນແຕ່ຫລົ້ນຊູ້ສູ່ຊາຍ ອັນຄືນຕັ້ງແຕ່ກະທຳມາຍາສາໂທດ ຜົວເຫັນຮ້າຍໜີປະ ຂອງອັນສ້າງໄດ້ທຳກັນໃຫ້ຜົວເອົາໜີໃຫ້ໝົດສ້ຽງເທີ້ນ. ເມຍຈຳພວກ 5 ນັ້ນ ຂົ່ມຜົວເປັນດັ່ງຂ້ອຍ ຜົວຈົ່ມແຕ່ນ້ອຍມັນຍູ້ມັນຍິນ ກອນແຕ່ຜິດແຕ່ເລວກັບຊູ້ມີຊູ້ອັນ ຜົວເຫັນຮ້າຍໜີປະ ຂອງອັນສ້າງນຳກັນໃຫ້ຜ່າ 5 ໂກກຸາກ ໃຫ້ເມຍໂກ

ກາກ 1 ຜົວເອົາ 4 ໂກກາກແລ. ເມຍຈຳພວກ 6 ນັ້ນ ມັນກໍຜິ
ປອງຂ້າຜົວດ້ວຍງ້ອນສານດ້ວຍບັງລັບນັ້ນ ຜົວເຫັນຮ້າຍໜີປະ ຂອງ
ອັນສ້າງນຳກັນໃຫ້ຜົວເອົາໜີໝົດໃຫ້ສ້ຽງເທີ້ນ. ເມຍຈຳພວກ 7
ນັ້ນ ຕັ້ງແຕ່ຕົວະລ່າຍຜົວສະຫລັບປາກ ກະແຫລງແປງຄວາມ ທຳ
ການເຮືອນເຍື່ອງໃດມັນວ່າໄຂ້ວ່າໜາວ ມັນຫລັບມັນນອນ ຜົວເຫັນ
ຮ້າຍປະໜີ ຂອງອັນໄດ້ສ້າງນຳກັນໃຫ້ຜ່າ 4 ໂກກາກ ໃຫ້ແກ່ເມຍ
ໂກກາກ 1 ຜົວເອົາ 3 ໂກກາກເທີ້ນ. ອັນ 1 ຮ້າງດ້ວຍການ
ເສິກ ຂອງອັນສ້າງໄດ້ນຳກັນ ຊູ້ຄືນຊູ້ບໍ່ໄດ້ ຢ່າວ່າສັງເທີ້ນ. ອັນ 1
ຮ້າງດ້ວຍໄຂ້ປ່ວຍທັງເພິ່ນທັງໂຕຂອງອັນສ້າງນຳກັນ ໃຫ້ຜ່າ 3 ໂກ
ກາກ ໃຫ້ຜົວໂກກາກ 1 ເມຍເອົາ 2 ໂກກາກແລ. ອັນ 1 ຮ້າງ
ດ້ວຍພໍ່ແມ່ໂຄດວົງໄລ່ໜີ ຂອງອັນສ້າງໄດ້ນຳກັນໃຫ້ຜ່າ 6 ໂກກາກ
ໃຫ້ເມຍ 3 ໂກກາກ ຜົວເອົາໂກກາກ 1 ໃສ່ຣາຊະໂກດຣາຊະຄັງ
2 ໂກກາກແລ.

ບັດນີ້ ຈັກກ່າວຕັດຄອງຜົວຄອງເມຍ ຂາດບໍ່ຂາດກ່ອນແລ.
ໃຫ້ຮຳເພິງຕາມທຳ 2 ຕົວນີ້ເທີ້ນ. ຄືວ່າອິສາຕັນຫາແລ ອາໄລຍະ
ຕັນຫາເທີ້ນ. ເມື່ອວ່າ ອິສາຕັນຫານັ້ນ ຜູ້ຊາຍຜູ້ຍິງກັດຕິດອມກັນ ຄື
ວ່າຜູ້ຊາຍໄດ້ລູບຕີນລູບມືແມ່ຍິງໆໄດ້ລູບແຂນຜູ້ຊາຍ ທໍ່ວ່າໄປ່ໄດ້ໃຫ້
ຂອງຝາກ ໄປ່ເປັນປະຕິຍານ ທໍ່ວ່າບັງເກີດຕັນຫາເຊິ່ງເພິງໃຈກັນ
ຊື່ວ່າບຸກາຕາຄະຕັນຫາຄາຍອອກ ຍັງບໍ່ຄວນເປັນເມຍຄວນເປັນແຕ່ຊູ້
ແລ ປະລາກະຄະຕັນຫານັ້ນໃດ 2 ຜົວເມຍເອົາກັນ ມາຮ້າງຈາກ
ກັນ ຄວາມຂາຫາກຂາດກັນແລ້ວ ເມື່ອພາຍລຸນຢູ່ ຜູ້ຊາຍມີໃຈຄືນມາ

ຢູ່ກັບເມຍທີ່ໄປໄດ້ຖືກຕ້ອງກໍດີ ບໍ່ໄດ້ໃຫ້ປະຕິຍານເປັນດັ່ງເມື່ອກ່ອນກໍດີ ຊື່ວ່າອະປະລະຄະຕັນຫາແລ ບໍ່ຄວນຄືນສູ່ແລ້ວແລ ເທດສົມຄໍາພະພຸດທະເຈົ້າເທດສະໜາ ໃນທັມມະບົດວ່າດັ່ງນີ້ ອິລະກະຖາຕິ ອິສາເຣທຸສະທະອິສາຕັນຫາ ຕັນຫາປຸດຕັງ ປະເສນາສາຕຸນິງຍະຖາດັ່ງນີ້ ອິສາລະປະຣິຫາກັດຕາຕົນນັ້ນ ຫຼວນຍ່ອມຊັກໃຈຜູ້ຍິງ ຜູ້ເຂົ້າໄປຫາກັນທຸກເມື່ອແລ ອິສາເຣກັດສະມິງທຸສະປະໂຣ ທັງຫລາຍນີ້ ແມ່ນວ່າໜີໄປໄດ້ 10 ໂຍດກໍດີ ຄໍາກັດຕິຮັກເມຍເສຍນັ້ນ ຕັນທະມຸທຸສັຕຕາເປັນດັ່ງສັດຕິເດຍລະສານ ທັງຫລາຍ ຣາຄະຫາກຜູກໄວ້ກັບກັນແລ ປະເສສັດຕຸນີ້ ຫາກໄວ້ໂດຍມັກແທ່ງຕົນທັ້ນແລ ໄນຍະໜຶ່ງຜູ້ຊາຍໄດ້ເອົາຂອງຝາກໄປໃຫ້ຍິງງຣັບ ຍິງບໍ່ໃຫ້ປະຕິຍານເປັນເມຍບໍ່ໃຫ້ໂອກາດອັນໃດອັນໜຶ່ງ ຜູ້ຊາຍເພິງໃຈເປົ່າດາຍແລ ມາດຕາທີ່ມາກ່າວວ່າເມຍກູງດັ່ງນີ້ກໍດີ ອິສາຕັນຫາເປົ່າດາຍເສຍ ບໍ່ຂຶ້ນບໍ່ຄວນເປັນເມຍດາຍ ເປັນແຕ່ຄໍາເທິງແທນເປົ່າດາຍ ດ້ວຍອິສາຕັນຫານັ້ນເໝືອນດັ່ງສັດເດຍລະສານທັງຫລາຍເປົ່າດາຍແລ. ເທດສົມຄໍາພະເຈົ້າເທດສະໜາວ່າດັ່ງນີ້: ທັດສະລະນັນຕາ ທານິໂນຕັນຫາ ວິຕານິນາຣຸຈະຍະລະສາປະວັຕຕິ ທຸຣາທະມິສສາ ນັສມິງວະໂຣຕັນຫາຈິດຕິ ດັ່ງນີ້ແລ ຕັນຫາຈັດຕິດັ່ງນີ້ ກໍຈໍາເລີນໃນມະນຸສສານັງແທ່ງຄົນທັງຫລາຍ ປະມັຕຕາຈະກໍປະໝາດ ຫາສັດຈະບໍ່ໄດ້ຫາກໃຫ້ຕົນທາຍເສຍ ນາລຸຈະວິຍະ ເປັນປະດຸດຈະດັ່ງເຄືອເຂົາອັນກືບໄມ້ ອັນຜາກໃຫ້ໄມ້ຈິບຫາຍເສຍນັ້ນແລ ໂສປະລະວາຕິ ອັນຕົນຜູ້ປະກອບດ້ວຍອິສາຕັນຫານັ້ນ ຍ່ອມໃຫ້ກ້ອຍຄໍາອັນບໍ່ໝັ້ນບໍ່ທ່ຽງ ອິຈະວະນະໂນເປັນ

ດັ່ງອອກ ອີສັງ ອັນມັກໂລບໃບໝາກໄມ້ ທຸລາທຸລັງ ມັນຍ່ອມໂລບ ເອົານຳຕົວອື່ນ ແລ້ວເລົ່າໄປເສຍວະນັສມິງ ໃຫ້ທົ່ວໄປໃນປ່ານັ້ນແລ ໄນຍະ 1 ອາໄລມີ 2 ອັນ ຄືວ່າ ອາໄລຂາດ ອັນບໍ່ເປັນຜົວເມຍ ກັນແລ ໄນຍະ 1 ອາໄລນີ້ແຮ່ງຊ້ຳໝັ້ນ ຍັງເປັນຜົວເມຍກັນໝັ້ນ ທ່ຽງກໍຍັງມີແລ ເມື່ອວ່າຄວາມຜົວເມຍຂາຂາດຈາກກັນນັ້ນ ຍັງມີ ຊາຍກັດຕີຮັກກັນ ມາຢູ່ກັບກັນກໍດີ ໃຫ້ປະຕິຍານແກ່ກັນກໍດີແລ ບໍ່ນານ ເທົ່າໃດຜູ້ຊາຍເລົ່າປະເສຍ ໜີໄປຫາຜູ້ອື່ນກໍດີ ໄປຢູ່ນຳພໍ່ແມ່ມິດສະ ຫາຍ ນ້ອງນຸ່ງ ເອື້ອຍອ້າຍ ຜູ້ໃດຜູ້ໜຶ່ງກໍດີ ແລ້ວບໍ່ຍິນດີບໍ່ເສບດ້ວຍ ການະຄຸນ ບໍ່ຍິນດີນຳງົວຄວາຍສິ່ງຂອງເຮືອນຊານ ບໍ່ເຂົ້າມາກິນອາ ຫານເບື່ອງໃດເບື່ອງໜຶ່ງແລ້ວ ຂອງເພິ່ງໃຈຜູ້ຊາຍມັນເອົາໜີສ້ຽງ ແລ ມັນໃຫ້ເກົ້າແກ່ຮູ້ກໍດີ ບໍ່ໃຫ້ຮູ້ກໍດີ ຜູ້ຊາຍກະທຳດັ່ງນີ້ ຄຳຜົວຄຳ ເມຍຂາດຈາກກັນແລ້ວແລ ທີ່ຍັງປຸດສາໃຈທະນາດ້ວຍຄຳວ່າ ຜົວກູ ເມຍກູດັ່ງນີ້ກໍດີ ທໍ່ອາຄາດໄວ້ເປົ່າດາຍເລີຍ ເໝືອນດັ່ງໃຍແມງໄມ້ ອັນຂາດຈາກຕົວແລ້ວນັ້ນແລ ເທດສິນຄຳພະພຸດທະເຈົ້າເທດສະໜາ ວ່າດັ່ງນີ້ ເຍນະເລຕານະ ກັດຕິໂສຕັງສະຕັຕຕັງ ມະກັດໂກຈະຊະ ນັງ ເອຕັງປິເສຕະວາ ນາວະຊັງທີນະ ເປກຂາໂນນາເມສັພພັງປະ ຍະ ເຍຊະນາອັນວ່າຕົນທັງຫລາຍ ຝູງຣາຄຣັຕຕາ ກັຕຕິ ດ້ວຍກາ ມະສຸນາ ອະນຸປັຕຕິກໍຕົກໄປ ຕັງຍັງຕາມກະແສແຫ່ງຕົນອັນຮ້າຍ ເຕ ຊະນາອັນວ່າຄົນທັງຫລາຍຝູງນັ້ນ ເອຕັງປິເສຕະວາ ລະວະຊັງຕິກັງ ເປັນອັນມາຕໍຍັງຄອງຕັນຫາອັນສ້ຽງແລ້ວ ເວັ້ນເສຍບໍ່ຢາກຄືນມາຫາ ທີ່ເກົ່າຕົວແລ ສະຍັງກັຕຕັງ ຕົນທັງຫລາຍກໍບໍ່ທໍ່ຍັງເອົາອາຣົມວ່າ

ເມຍກູຄືວເຮືອນກູວ່າດັ່ງນັ້ນ ມະມະກັຕໂຕວາຊານັງ ເອຕັງປິເສຕະ ວານະວະຕິ ເຫມືອນດັ່ງແມງຢ້າງຊິ້ນ ບໍ່ຂ້ອງແລ້ວແລໜີໄປແປງຮັງ ອັນໃໝ່ ມັກຢ່າໃຫ້ໄຍຂາດຈາກຕົວແລ້ວພໍໄອ້ແຮ່ຕົວຈັກສະໝອ່ຍ ບໍ່ ພໍໃຫ້ຕົກຈາກຕົ້ນໄມ້ເຫມືອນດັ່ງເຈຍນັ້ນແລ ນັກປາດເຈົ້າທັງຫລາຍ ຢ່າເອົາຄວາມອາໄລມັນວ່າ ເມຍກູ ຄືວເຮືອນກູນັ້ນເທີ້ນ ປະການ ໜຶ່ງ ອາໄລ 2 ຂາຍິງຊາຍກັຕຕິຮັກມັກກັນຕໍ່ຊາຍ ໃຫ້ຂອງຝາກຍິງ ຮັບເອົາແລ້ວ ຍິງໃຫ້ປະຕິຍານເປັນ (ຕ່າປັຕຕັງ) ຜູ້ຊາຍຮັບຂອງ ທັງມວນວ່າເມຍກູ ຄືວເຮືອນກູງົວຄວາຍກູ ວ່າສັນນີ້ ຈຶ່ງໄດ້ຊື່ວ່າ ເປັນຜົວເປັນເມຍກັນ ເຫດສິນຄວາມພະເຈົ້າເທດສະໜາວ່າດັ່ງນີ້ ລະຕັງລະຕະລະທັງ ພັນທະນະທຸທິນາຍະສັທທາລຸຊຊາປັພພະຊັນຍະ ຄືວ່າຜູກດ້ວຍຊືກທອງແລ ຜູກດ້ວຍຫຍ້າປອງຫຍ້າມຸ້ງກະຕ່າຍ ຄືວ່າ ຜູກດ້ວຍປານດ້ວຍປໍກໍດີ ນະຕັງພັນທະນະ ມາຫຸທິນາ ນັກປາດເຈົ້າ ທັງຫລາຍກ່າວວ່າ ຊືກອັນນັ້ນເປັນອັນບໍ່ໝັ້ນ ມີດດວງໜາພ້າດວງ ຄືມຕັດເສຍກໍຍັງຂາດແລ ບໍ່ລ້ຳແຕ່ເສຍຫາສິ່ງດອືວເລີຍ ເຫດສິນຄຳ ພະເຈົ້າເທດສະໜາວ່າ ຍັງອາເປກຂາສາລັບຕາລັບຕິມະນິກຸເລຄະ ປຸຕຕາສຸທາເລຈະ ໃນເມື່ອລູກເມຍອັນໄດ້ກໍຕ້າງແກ້ວ ຕັງທານະທັງ ພັນທະນາຫຸທິນາ ນັກປາດເຈົ້າທັງຫລາຍກ່າວວ່າ ຈັກເປັນເຊືອກອັນ ໝັ້ນຍິ່ງກວ່າເຊືອກເຫລັກເຊືອກທອງ ເພື່ອເຫດດັ່ງນັ້ນ ຈຶ່ງຄືນເປັນ ຜົວເປັນເມຍກັນແລ ເພື່ອອາໄລຍ່ອມໄດ້ຮັບເອົາຂອງຝາກ ໜາກ ຄາວແກ່ກັນ ກໍຈຶ່ງໃຫ້ປະຕິຍານເປັນເມຍ ໄປຕາມປະຕິຍານນັ້ນແລ ໃຫ້ຫລິງບົດວ່າ ສາລະຕະສະລະຕາເລຍຸນີ ອິສາຊາຍຜົວເປັນປະ

ມານດ້ວຍອິເສດ ຊາຜົວເມຍອັນຄວນຊາດ ອັນບໍ່ຄວນຊາດຈາກກັນ ນັ້ນ ມີ 4 ປະການ ອັນໄດ້ກ່າວແລ້ວແຕ່ພາຍຫລັງນັ້ນແລ. ອິສາສັນ ສາອາໄລຍະຕິມມະນະບະຣະຍະນັງນັ້ນໃດ ຍິງອັນໜີຈາກຜົວບໍ່ໄດ້ ຕັດ ອິສານະໄລບໍ່ຊາດດ້ວຍເຫດ 3 ປະການ ອີນິສາປະຣາຍິ ສັພ ພາປະຣາຍິ ໂອຍິນິກັດຕະປັນນະຍີນັ້ນ 32 ອານິປານາຍີນັ້ນໃດ ຍິງ ອັນມີໃຈບໍ່ຮັກມັກໜີຈາກຜົວ ເປັນດັ່ງນາງປັບພາວະດີໜີຈາກພະຍາ ກຸສະຣາດວັນນັ້ນແລ ອິສາອາໄລພະຍາບໍ່ຊາດຈາກນາງ ຍັງເມຍພະ ຍາດັ່ງເກົ່ານັ້ນແລ. ສັພພາປະຣາຍີນັ້ນໃດ ຜູ້ທຳການຮັກສາຕົວໜີ ຈາກຜົວ ເປັນດັ່ງນາງມະໂນລາໜີຈາກ ທ້າວສີທົນປາງກ່ອນວັນນັ້ນ ຕັນຫາອາໄລທ້າວສີທົນບໍ່ຊາດຈາກນາງ ອັນໄດ້ຄືນມາເປັນເມຍດັ່ງ ເກົ່າແລ ເມື່ອວ່າໂອກະຕະປະຣາຍີນັ້ນໃດ ຜູ້ຍິງອັນຈັ່ງໄຮປາກກ້າ ຂົ່ມເຫງຜົວ ໃຫ້ກຳຣາບໃຫ້ເອົາໄປສັ່ງສອນດີແລ້ວ ຈຶ່ງໃຫ້ເອົາຄືນ ມາເປັນເມຍດັ່ງເກົ່າເທີ້ນ ນັກປາດເຈົ້າທັງຫລາຍໃຫ້ຮໍ່າເພິງດັ່ງນີ້ ຈຶ່ງໃຫ້ລະເສຍຈາກຕົວດາຍ ເປັນດັ່ງເມຍສາວິກາກຸມານ ໂພທິສັດ ເຈົ້າຍາມນັ້ນ ມັນຊັງພໍ່ຜົວແລ້ວ ມັນສໍ່ຕໍ່ຜົວໃຫ້ຂ້າພໍ່ເສຍ ມາວິກາກຸ ມານຈຶ່ງໃຫ້ເສນາເອົານາງໄປສັ່ງສອນເສຍດີແລ້ວ ຈຶ່ງເອົາມາເປັນ ເມຍດັ່ງເກົ່າແລ ເຫດວ່າພະພຸດທະເຈົ້າເທດສະໜາ ໃນດີກາສ້ອຍ ສາຍຄຳແລ.

ບັດນີ້ ຈັກກ່າວຄ່າຕົວຄົນທັງຫລາຍ ທັງຍິງຊາຍນ້ອຍໃຫຍ່ໃຫ້ ແຈ້ງແກ່ນັກປາດເຈົ້າທັງຫລາຍ ຝູງພິຈາລະນາ ຄົນທັງຫລາຍມວນ ເທີ້ນ ອາຍຸຊາຍສະກັນຕັ້ງ 8 ປີ ຮອດ 15 ປີ 11 ຕຳລຶງແລ.

ອາຍຸຕັ້ງແຕ່ 15 ເທົ່າຮອດ 20 ປີ 12 ຕໍາລຶງແລ. ອາຍຸຕັ້ງແຕ່ 20 ເທົ່າຮອດ 40 ທັດ 16 ຕໍາລຶງແລ. ອາຍຸ 40 ເທົ່າຮອດ 60 ປີ 11 ຕໍາລຶງແລ. ຄ່າຕົວຊາຍສະກັນທໍ່ນີ້ແລ. ຄ່າຕົວຊາຍຊະຣາ ແຕ່ອາຍຸ 60 ໄປເຖິງ 70ປີ 8 ຕໍາລຶງແລ. ອາຍຸ 70 ເທົ່າຮອດ 80 ປີ 4 ຕໍາລຶງ 2 ບາດແລ. ອາຍຸ 80 ເທົ່າຮອດ 100 ປີ ຄ່າຕໍາລຶງ 2 ບາດແລ. ຄ່າຕົວຊາຍຊະຣາມີທໍ່ນີ້ແລ.

ຈັກຈາຄ່າຕົວຍິງສະກັນ ອາຍຸ 7 ປີ ຮອດ 8 ປີ 7 ຕໍາລຶງແລ. ອາຍຸ 9 ປີ ຮອດ 10 ປີ 9 ຕໍາລຶງແລ. ອາຍຸ 10ປີ ຮອດ 15 ປີ 10 ຕໍາລຶງແລ. ອາຍຸ 15 ປີ ຮອດ 30 ປີ 12 ຕໍາລຶງແລ. ອາຍຸ 30 ປີ ຮອດ 50 ປີ 10 ຕໍາລຶງແລ. ອາຍຸ 50 ປີ ຮອດ 70 ປີ 80 ປີ ຄໍາ 8 ຕໍາລຶງແລ. ອາຍຸ 80 ປີ ຮອດ 100 ປີ ຄໍາມີ 6 ບາດແລ.

ບັດນີ້ ຈັກກ່າວຄ່າເກົ້າຄ່າຫູກ່ອນແລ ຄ່າເກົ້າມີ 5ບາດ ຄ່າລີ້ນມີ 10 ບາດ ຄ່າຫູ 5 ບາດຄໍາ ດັງ 10 ບາດ ຄ່າແຂນເບື້ອງ 5 ຕໍາລຶງ ຄ່າຕາເບື້ອງ 5 ຕໍາລຶງ ຄ່າຂາເບື້ອງ 5 ຕໍາລຶງແລ. ຄ່າລູກຄວາຍ ເກີດມາໄດ້ 3 ວັນຂ້າຕາຍມີຄ່າ 2 ບາດ ມ້າເກີດ 3 ວັນຂ້າຕາຍ ຄ່າມີ 6 ບາດແລ. ລູກຊ້າງເກີດມາ 3 ວັນ ຂ້າຕາຍຄ່າມີ 2 ຕໍາລຶງ. ລູກຄວາຍຕົວແມ່ມີຄ່າບາດ 1. ລູກມ້າຕົວແມ່ມີຄ່າ 3 ຕໍາລຶງ. ລູກຊ້າງຕົວແມ່ມີຄ່າ 6 ບາດ. ແມ່ຄວາຍມີຄ່າ 10 ບາດ ຄັນຕາຍມີຄ່າ 3 ຕໍາລຶງ. ພໍ່ຄວາຍມີຄ່າ 3 ຕໍາລຶງ ພໍ່ຄວາຍຕາຍມີຄ່າ 4 ຕໍາລຶງ. ແມ່ມ້າມີຄ່າ 4 ຕໍາລຶງ ຄັນຕາຍມີ

ຄ່າ 5 ຕໍາລຶງ. ພໍ່ມ້າມີຄ່າ 5 ຕໍາລຶງ ພໍ່ມ້າຕາຍມີຄ່າ 6 ຕໍາລຶງ. ແມ່ຊ້າງຄ່າມີຊັ່ງໜຶ່ງ ແມ່ຊ້າງຕາຍມີຄ່າ 5 ຕໍາລຶງ ພໍ່ຊ້າງມີຄ່າຊັ່ງ 5 ຕໍາລຶງ ພໍ່ຊ້າງຕາຍມີຄ່າ 30 ຕໍາລຶງແລ. ບັດນີ້ ຈັກກ່າວຈາໃຈນລັກຂ້າ ລັກຂາຍກໍດີ ຄ່າຕາໜາຍຊ້າງພາຍ ໜາຍ 10 ບາດ ຕັດງວງຄ່າມີ 10 ບາດ ງາກິ່ງ 5 ຕໍາລຶງ ຫູໃບ 5 ບາດ ຫາງຊ້າງ 3 ຕໍາລຶງ ຕັດຫາງຊ້າງມີຄ່າ 5 ຕໍາລຶງ ໜາຍ 10 ບາດ ຫູໃບ 5 ບາດ ງວງ 10 ບາດ ອັນນີ້ຊ້າງຄັງແລະຊ້າງລາດລໍາດັບລຶງເທີ້ນ. ຕັດເຂົາຄວາຍກິ່ງ 4 ບາດ ຕາໜ່ອຍບາດ ຫູໃບບາດ ຫາງ 10 ສະລຶງແລ ຄ່າຄວາຍທ່ານ ຄ່າ 5 ບາດແລ. ຕາມ້າໜ່ອຍ 6 ບາດ ຫູມ້າໃບ 6 ສະລຶງ ຫາງມ້າຟັກ 6 ບາດ ຂ້າມ້າເພິ່ນຫາງ 3 ຕໍາລຶງແລ. ຕັດກ້ານກ້ວຍແມນໃຫ້ທໍາຂວັນກ້ານບາດ ໃຜຂຸດຕົ້ນກ້ວຍແມນອອກກົ້ມ ໃຫ້ທໍາຂວັນ 5 ຕໍາລຶງ. ໃຜຂ້າໝາຂວັນລູກເພິ່ນຄ່າ 5 ຕໍາລຶງ ໃຜຂ້າໝາເຮືອນເພິ່ນຄ່າ 10 ບາດ ໃຜຂ້າໝາເນື້ອ ເຮືອນບໍ່ມີນ່າງບໍ່ມີປີນຄ່າ 5 ບາດ. ໃຜເຈາະຕາໝາຂວັນລູກເພິ່ນໜ່ອຍ 6 ບາດ ໃຜຕັດຫູໝາຂວັນລູກເພິ່ນຄ່າ 6 ສະລຶງ ໃຜເຮັດຂາໝາຂວັນລູກເພິ່ນຫັກຄ່າ 6 ບາດ ໃຜຕັດຫາງໝາຂວັນລູກເພິ່ນຄ່າ 3 ບາດ ໃຜຕັດຫູໝາເຮືອນເພິ່ນ 10 ສະລຶງ ໃຜເຈາະຕາໝາເຮືອນຄ່າມີໜ່ອຍ 5 ບາດ ໃຜຕັດຫາງໝາເຮືອນຄ່າ 3ບາດ ໃຜເຮັດຂາໝາເຮືອນເພິ່ນຫັກຄ່າ 6 ບາດແລ. ໃຜເຈາະຕາໝາເຮືອນເພິ່ນໜຶ່ງໜ່ອຍ 10 ສະລຶງແລ ໃຜຕັດຫູໝາເຮືອນຄ່າ 2 ສະລຶງ ໃຜເຮັດຂາໝາເນື້ອເພິ່ນຫັກຄ່າ 6

ບາດ ໃພຕັດຫາງໝາເບື້ອເພິ່ນຄ່າ 5 ສະລຶງ ໃພຢ່າກະທຳເຫີ້ນ ໂທດຟູງນີ້ ຢ່າກະທຳເຫີ້ນເປັນໂທດແລ. ໃພລັກໄກ່ຂອັນລູກເພິ່ນໄປ ຂ້າ ໃຫ້ທຳຂອັນ 4 ບາດ ລັກໄກ່ລົກເພິ່ນໄປຂ້າຄ່າ 10 ສະຫລຶງ ລັກເຄືອພູຄ່າ 5 ບາດ ລັກເຄື່ອງຮື້ວຂອງສອນຄ່າ 5 ບາດ ລັກຊຸດ ໃສ່ໂທດ 3 ບາດ ລັກລັນຄ່າ 10 ສະຫລຶງ ລັກສ້ອນຄ່າມີ 6 ບາດ ລັກໄຊຄ່າມີ 5 ບາດ ລັກຕຸ້ມຄ່າ 6 ສະຫລຶງ ລັກຄາດເພິ່ນຄ່າ 4 ຕຳລຶງ ລັກໄກຄ່າ 5 ຕຳລຶງ ລັກໄກບໍ່ແມ່ນຍາມມາຄ່າ 10 ບາດ ລັກຄາດບໍ່ແມ່ນຍາມມາຄ່າ 8 ບາດ ລັກເຜີ້ງຊາວເມືອງຮອງ 10 ສະຫລຶງ ລັກເຜີ້ງເພຍຮອງ 5 ບາດ ລັກກຸມມານເສນາຜູ້ໃຫຍ່ເອົາ ໂທດ 5 ຕຳລຶງ ຕີ 15 ບາດຈິ່ງໝົດໂທດແລ. ລັກເຮືອລາດຊາວ ເມືອງໂທດ 122 ບາດ ລັກເຮືອມະຫາເສນາຜູ້ໃຫຍ່ຕີ 10 ບາດ ລັກເຮືອລາດຫລວງກຶກປະຣາຊິກຕົນໃຫ້ຕີ 15 ບາດຈິ່ງໝົດໂທດແລ ລັກເຮືອທີ່ນັ່ງກຶກປະຣາຊິກແລ ໃຫ້ຕີ 25 ໃສ່ຄອກໄວ້ 3 ເດືອນ ຈິ່ງໃຫ້ອອກເປັນຂ້ອຍຫຍ້າຊ້າງມ້າ 3 ປີ ຈິ່ງໝົດໂທດແລ.

ລູກຂ້າພໍ່ກຶກປະຣາຊິກໃຫ້ຕີ 55 ແລ້ວຈິ່ງເອົາໃສ່ຄຸກໄວ້ 5 ເດືອນ ເອົາເປັນຂ້ອຍຫຍ້າຊ້າງມ້າເຫີ້ນ. ລູກຂ້າແມ່ກຶກປະຣາຊິກ 4 ໃຫ້ຕີ 55 ແລ້ວຈິ່ງເອົາເຂົ້າຄຸກໄວ້ 3 ເດືອນ ເອົາອອກເປັນ ຂ້ອຍຫຍ້າຊ້າງມ້າເທົ່າຊົ່ວຊີວິດເຫີ້ນ. ພໍ່ຂ້າລູກຊາຍ ໃສ່ໂທດຊັ້ງ 5 ຕຳລຶງ ພໍ່ຂ້າລູກຍິງໃສ່ໂທດ 5 ຕຳລຶງແລ. ນ້າອາວຕາລຸງຂ້າ ຫລານຊາຍໃສ່ໂທດ 15 ບາດແລ ຂ້າຫລານຍິງໃສ່ໂທດ 12 ບາດ ແລ.

ຈັກຈາ ພໍ່ຄົນສີ້ມ້າໃສ່ໂທດ 3 ຕຳລຶງ. ລູກສີ້ມ້າໃສ່ໂທດ 6 ບາດ. ຫລານສີ້ມ້າໃສ່ໂທດ 3 ບາດ. ພໍ່ຄົນສີ້ຄວາຍໃສ່ໂທດ 10 ບາດ. ລູກສີ້ຄວາຍໃສ່ໂທດ 5 ບາດ. ຫລານສີ້ຄວາຍໃສ່ໂທດ 10 ບາດ. ລູກສີ້ຄວາຍໃສ່ໂທດ 5 ບາດ. ຫລານສີ້ຄວາຍໃສ່ໂທດ 10 ສະຫລຶງ. ພໍ່ຄົນສີ້ໝາໃສ່ໂທດ 6 ບາດ. ລູກສີ້ໝາໃສ່ໂທດ 3 ບາດ. ຫລານສີ້ໝາໃສ່ໂທດ 6 ສະຫລຶງ. ໃຜເຮັດຂ້າຊ້າງເພິ່ນໃສ່ໂທດ 5 ຕຳລຶງ. ໃຜເຮັດມ້າເພິ່ນໃສ່ໂທດ 3ຕຳລຶງ. ໃຜເຮັດຂ້າຄວາຍເພິ່ນໃສ່ໂທດ 5 ບາດແລ.

ບັດນີ້ ຈັກກ່າວຄວນເຂົ້າສູ່ຫລັກຄຳແລ ບໍ່ຄວນເຂົ້າກ່ອນແລ. ດຸດຸສຸລະທຸກັງໂລເກຕະໂຄຈະ ປັນນະກະຊາຕິໂກ ວຸທຫານັງ ໂອວາໂທນະຄັນທາຕິ ຕະໂຕປັນຈະຕິທັມເມ ປະມາທະໂທ ດັ່ງນີ້ ດຸດຸລຸອັນວ່າ ບຸ່ນງົ້ວ ສັລລະທຸກັງ ເປັນອັນເບົາ ໂລເກໂລກນີ້ ປັນນະກະຊາຕິໂກ ອັນວ່າ ຜູ້ກອັກແກັກ ລະທຸກກັຕຕະລັງ ແຄວນເບົາກວ່າບຸ່ນນັ້ນແລ ໂອວາໂທ ອັນວ່າ ຄົນຜູ້ບໍ່ເອົາຄຳສອນແຫ່ງຜູ້ເກົ້າແກ່ນັ້ນລະທຸກະຕະລັງ ແຄວນເບົາກວ່າ ຕະໂຕປະນະກະຊາຕິໂກ ຄົນຜູ້ກອັກແກັກນັ້ນແລ. ປະມາໂທ ອັນວ່າຄົນປະໝາດ ຍາຕິທັມເມໃນແກ້ວທັງ 3 ນັ້ນ ສັລລະທຸກັງຕະໂຕເບົາກວ່າຄົນບໍ່ຟັງຄວາມສອນ ຜູ້ເກົ້າຜູ້ແກ່ນັ້ນແລ ຄົນທັງຫລາຍ 3 ຄົນນີ້ ບໍ່ຄວນເອົາເຂົ້າສູ່ຫລັກຄຳແລ. ຕະປະສິໂນ ທານະສີລາ ລິນາທັມມະປັທທະນາ ປຸສສະປາປຸຕຕະອັຕຕາ ເຕຊະນາໂມ ດັ່ງນີ້ ອັນວ່າ ບຸກຄະລະ ທັງຫລາຍ 8 ຄົນນີ້ ຄວນເອົາເຂົ້າສູ່ຫລັກຄຳແລ. ຕະປະສິໂນ ຄືວ່ານັກປາດເຈົ້າ

ຜູ້ມີສິນກໍດີ ທານະສີລາຄືນຜູ້ມັກໃຫ້ທານແລະຮັກສາສິນກໍດີ ກຸລີນາຜູ້ມີກະກຸນກໍດີ ວັທທິນາຄືນມີສັດຈະກໍດີ ທັມມະປັທທະນາ ຄືນຜູ້ຕັ້ງຢູ່ໃນຄອງທໍາກໍດີ ປຸສສະປາຄືນຜູ້ມີໃຈອັນຊື່ກໍດີ ປຸຕຕະວັຕຕາຄືນຜູ້ມີລູກຫລານຫລາຍກໍດີ ເຕຊະນາທັມໂມ ອັນວ່າຄືນຜູ້ມີຊື່ກໍດີ ຄືນທັງຫລາຍ 8 ຄືນນີ້ ຈິ່ງຄວນເປັນຂຸນແຕ່ງແປງແລ.

ບັດນີ້ ຈັກກ່າວຊີກຄາກ່ອນແລ ຊີກບາດໜຶ່ງຄາ 5 ບາດ ເຊືອກບາດໜຶ່ງຂື່ຕີນ 2 ສະຫລຶງ ຄ່າແສ້ 2 ບາດເງິນຕໍ່ບາດແສ້ບາດໜຶ່ງແລເຈົ້າເຮີຍ. ປັສສະນະປັຕຕັງ ໂລເກຕະໂຕ ເທວານຸຈັກຂະນາ ຕະໂຕວຸທທານັງ ໂອວາໂທຕະໂຕ ພຸທທານະສາສະນັງ ປະສານະວັຕຕັງ ອັນວ່າຮອຍຕີນຄືນ ຍັງຄະລຸກັງເປັນອັນໜັກແລ ໂລເກໃນໂລກນີ້ແລ ເທວານຸວັກຂະນາ ອັນວ່າຄວາມເທວະດາຫາກບອກກ່າວໃຫ້ຮູ້ນັ້ນ ຄຸຣຸນັງແຄວນໜັກຕະໂຕປາສານະສະໂຕ ກວ່າຫີນກ້ອນນັ້ນແລ ໂອວາໂທ ອັນວ່າຄໍາໂອວາດສັ່ງສອນ ວຸດທານັງແຫ່ງເຖົ້າແກ່ ພໍ່ແມ່ນັ້ນຄຸຣຸກະຕະຣັງແຄວນໜັກ ຕະໂຕເທວານຸຈັກຂະນາກວ່າຄໍາເທວະດານັ້ນແລ ພຸທທານະສາສະນັງ ອັນທໍາມະເທດສະໜາ ພຸທທັງຍັງພະພຸດທະເຈົ້າ ຄຸຣຸກະຕະຣັງແຄວນໜັກຕະໂຕວຸດທານັງ ກວ່າຄໍາເຖົ້າແກ່ນັ້ນ ໜັກມີ 4 ປະການນີ້ແລ. ພຸທທາສັງສາຣະຄັມພີຣັງ ສາລະຄັມພີຣັງ ຍານະຄັມພີຣັງ ເນຍຍະຄັມພີຣັງ ຕິຈະຕຸພິມໂພດັ່ງນີ້ ສັງສາຣາ ອັນວ່າວັຕຕະສັງຮານ ຄັມພີຣັງເປັນອັນເລິກໜຶ່ງແລ ກະລັງອັນວ່ານໍ້າສະໝຸດສາຄອນ ຄັມພີຣັງເປັນອັນເລິກໜຶ່ງແລ ຍານັງ ອັນວ່າຍານປະທຍາຄັມພີຣັງ ກໍເປັນອັນເລິກ

ໜຶ່ງແລ ເນຍຍັງ ອັນວ່າກ້ອຍຄຳທັມມະເທສະໜາແຫ່ງພະພຸດທະເຈົ້າ ຄັມພີຣັງກໍເປັນອັນເລີກໜຶ່ງແລ ຈະຕຸພິນີ້ 4 ປະການນີ້ແລ ກິຈໂຈມະສາ ປັຕຕິລາໂພ ກິຈຈັງມັສສານັງ ຊີວິຕັງ ກິຈຈັງສະທັມມະສາວັນນະກິຈໂຈ ພຸທທານັງ ອຸປະໂທ ມະນຸສສາ ອັນວ່າຄົນທັງຫລາຍ ຕິໂພນັກປາດໄດ້ຮ່ຳເພິງກິຈໂຈກໍເປັນອັນຍາກແລ ມະນຸສສາ ອັນວ່າຄົນທັງຫລາຍ ຊີວິຕັງ ອັນຂົນຂວາຍລ້ຽງຊີວິດ ກິຈຈັງເປັນອັນຍາກນັກແລ ອັນມີ 4 ປະການນີ້ແລ.

ບັດນີ້ ຈັກກ່າວໂລກະທັມທັງ 8 ໃຫ້ຮູ້ເທີ້ນ ບາລີວ່າດັ່ງນີ້. ທານັງສີລັງ ປະຣິຈາຄັງ ອາຊຊະວັງ ມັທທະວັງ ຕັປປັງ ອັກໂກທັງ ອະວິຫິງສານັງ ຂັນຕິ ດັ່ງນີ້ແລ ເມື່ອແປວ່າ ທານັງ ນັ້ນໃຫ້ມີປົກກະຕິ ອັນຮູ້ໃຫ້ທານຢ່າຂາດ ສີລັງ ນັ້ນໃຫ້ມີປົກກະຕິ ອັນຮັກສາສີນຢ່າຂາດ ປາຣິຈາຄັງ ນັ້ນໃຫ້ປົກກະຕິ ອັນຮູ້ແຈກຢາຍໃຫ້ທານກິນ ອັຊຈັງ ນັ້ນໃຫ້ມີປົກກະຕິ ອັນຊື່ຈື່ຕາມຄອງ ຢ່າຕິປອງຫາຍັງຄຳອັນໃຫຍ່ມາເທີ້ນ ມັທນະວັງ ນັ້ນໃຫ້ມີປົກກະຕິ ອັນອ່ອນຫອມປະຕິສັນຖານຕ້ານຈາຣະຈາ ພິຈາລະນາຫາຄຳອັນຊອບ ຍາປະກອບດ້ວຍໂທທະມານະກ້າແຂງ ຕັປປັງ ນັ້ນໃຫ້ຈຳເລີນເມດຕາພາວະນາຍາຂາດ ອະໂກທັງ ນັ້ນຍາມີໃຈເຂິງຄຽດຍາບັງບອດສອດຊັງໃຜ ອະຫັງສານັງ ນັ້ນຍາມີໃຈວິຕົກທ່ານ ຂັນຕິ ນັ້ນໃຫ້ມີໃຈຍາຄອດເທີ້ນ. ທີຣິໂອຕັປປັງ ນັ້ນໃຫ້ຮູ້ລັກອາຍແຕ່ບາບພິລຸ ໃຫ້ສະທ້ານຢ້ານແຕ່ໂພຍໄພ ຊະຕະວິໂຍ ນັ້ນໃຫ້ນອນຕື່ນເດິກລຸກເຊົ້າ ຄິດຫາແຕ່ຄຳສອນສ້າງແປງແຫ່ງຕົນເທີ້ນ. ອຸທທະລີ ນັ້ນເມື່ອຈັກປູກໃຫ້ພິຈາລະນາດູ

ອັນຮ້າຍອັນດີແລ ນາມມະກະຣິໂຍ ນັ້ນບຸກຄະລະຜູ້ໃດກໍດີ ຫາກມາສັບສໍ່ກ້ອຍຄຳອັນໜັກອັນເບົາ ອັນນ້ອຍອັນໃຫຍ່ກໍດີ ໃຫ້ໄວ້ໃນໃຈທັ້ນກ່ອນ ສົມພໍຟັງຈິ່ງຟັງ ບໍ່ສົມພໍຟັງຢ່າຟ້າວຟັງເທີ້ນ. ອັ້ນໜຶ່ງໃຫ້ຮັກສາລຳເມືອງ ອັນໜຶ່ງໃຫ້ຮັກສາແທ້ງເມືອງ ອັນໜຶ່ງໃຫ້ຮັກສາຫູເມືອງ ອັນໜຶ່ງໃຫ້ຮັກສາຕາເມືອງ ອັນໜຶ່ງໃຫ້ຮັກສາໃຈເມືອງ ອັນໜຶ່ງໃຫ້ຮັກສາຝາເມືອງ ອັນໜຶ່ງໃຫ້ຮັກສາປະຕູເມືອງ ອັນໜຶ່ງໃຫ້ຮັກສາລຳເມືອງ ອັນເປັນທ້າວພະຍາໃຫ້ທົດສະຣາດຄອງທຳ ຝົນຈິ່ງຕົກຣອາຍຣຳ ລ້ວນກ້ອນສະເໝີກັນ ທຸກແຫ່ງທຸກພາຍ ເຂົ້າຈິ່ງມາບາ ປາຈິ່ງມານ້ຳແລ ໃຫ້ຮັກສາແທ້ງເມືອງນັ້ນ ເປັນທ້າວພະຍາໃຫ້ທົດສະຣາດຄອງທຳ ຄືວ່າພາບ່າວໄພ່ໄປສ້າງສົມກິນທານອັນຊອບ ລົມຈິ່ງສະເໝີແລ ໃຫ້ຮັກສາຊຸ່ມເມືອງນັ້ນ ເປັນທ້າວພະຍາໃຊ້ບ່າວນຳຫອບບັນນະການ ໄປເມືອງອັນຢູ່ໄກກໍດີ ຢູ່ໃກ້ກໍດີ ທາງນ້ຳທາງບົກກໍດີ ບ້ານເມືອງຈິ່ງມີເຕຊະຣາສີແລ ໃຫ້ຮັກສາຕາເມືອງນັ້ນ ເປັນທ້າວພະຍາ ເກິງລະດູປີໃໝ່ ໃຫ້ບອກປ່າວເຕີນຄົນທັງຫລາຍໃຫ້ເຂົາລ້ຽງດູຫູບ້ານຕາເມືອງ ມະເຫສັກຫລັກຄຸນຈິ່ງຮັກສາດີແລ ໃຫ້ຮັກສາຕາເມືອງນັ້ນ ເປັນເຈົ້າພະຍາເກິງລະດູປີໃໝ່ ໃຫ້ເຂົາແຕ່ງເຄື່ອງບູຊາເມືອງທັງ 8 ດ້ານ ບ້ານເມືອງຈິ່ງຢູ່ຊຸ່ມກິນເຢັນແລ ໃຫ້ຮັກສາໃຈເມືອງນັ້ນ ເປັນທ້າວພະຍາໃຫ້ລ້ຽງລູກຍິງລູກຊາຍໄວ້ ອັນໜຶ່ງ ຢ່າເອົາລູກສາວໄພ່ຟ້າຂ້າເມືອງມາເປັນມັກສະໜົມ ໄວ້ໃຫ້ເຂົາເປັນສາວຢູ່ບ້ານເມືອງຈິ່ງມີສີມີແສງແລ ໃຫ້ຮັກສາຝາເມືອງນັ້ນ ເປັນທ້າວພະຍາ ໃຫ້ຕັ້ງແຕ່ງຊຸ່ມດ່ານໝັ້ນດ່ານໄວ້ຮັກ

ສາຟາແທມແອມກະສັດ ຂ້າເສິກສັດຕູ ຈິ່ງບໍ່ມາລ່ວງລັດຕັດແດນໄດ້ແລ ໃຫ້ຮັກສາເມກເມືອງນັ້ນ ເປັນທ້າວພະຍາໃຫ້ເສນາອາມາດໃຫ້ເຂົ້າຫາມາເຝົ້າຣະວັງຫັດກະບາດ ຢ່າໄດ້ຂາດສັກຍາມເທື່ອ ອັນໜຶ່ງໃຫ້ຮັກສາເຂດເມືອງນັ້ນ ເປັນທ້າວພະຍາໃຫ້ຢຳສາດສະໜາຣັດຕະນະໄຕແກ້ວທັງ 3 ຄືວ່າຢ່າໄດ້ປະໝາດຄອງສິນແລະທານແລ ໃຫ້ຮັກສາປະຕູເມືອງນັ້ນ ເປັນທ້າວພະຍາຢ່າກະທຳປານາຕິບາດແລ ໃຫ້ຮັກສາແກ່ນເມືອງນັ້ນ ເປັນທ້າວພະຍາໃຫ້ມີສິນາດ ນ້ຳມອກໜ້າໄມ້ ປືນໄພ ຫອກແຫລມ ງ້າວ ໄວ້ກັບເມືອງ ຂ້າເສິກສັດຕູຈິ່ງບໍ່ມາດູໝິ່ນດູແຄວນໄດ້ແລ.

ບັດນີ້ ຈັກຈາສິກຂາບົດ ທ້າວພະຍາທັງ 4 ກົດີ ທັງ 8 ກົດີແລ. ອັນໜຶ່ງ ຊື່ວ່າສ້ອຍສາຍຄຳແລເຈົ້າເຮີຍ ນັກປາດເຈົ້າທັງຫລາຍ ພິຈາລະນາໃຫ້ຊອບ ຄັນບໍ່ຊອບໄດ້ເຂົ້າສູ່ອະບາຍບໍ່ສົງໄສແທ້ແລ. ບັດນີ້ ຈັກຈາຣາຊາຊ້ອຍໂຊດ ຕ້ອງໂທດທຸກໜາ ປະຣາຊິກເກີງຕືນ ຂຸນພິນຕັດໃສ່ໂທດ ໃຫຍ່ເພິງພໍ ຂັນຄາຄືພັນທຸກຮ້ອຍ ຢ່າໄດ້ຕົກໃຈມາ ກຸກສັງຄາບໍ່ນ້ອຍ 8 ຮ້ອຍຂັນໃໝ ກຸນລະໄຈກ້ອນກຸ 4 ຮ້ອຍຂັນແປງດີ ນິດສັກຄືແຍງຢູ່ ຂັນຕູ່ເບົາບາງ 2 ຮ້ອຍຈາງໃຫ້ຄອບໄດ້ຍິນດີ ປາຈິຕຕິໂດຍດ່ວນ ກີ່ກ້ວນໂດຍພະລັນກຸກຂັນຕິຮ້ອຍໜຶ່ງ ປາຕິເທດຍິ່ງນຳມາ ຂັນອາຈາຜິດປາກ 5 ບາດທາກຄອນທຸກກົດຫອບຢ່າໄດ້ເອົາຈົມນ້ຳ ຂັນທຳຜິດ 10 ສະຫລຶງ ເລີຍດິງເອົາຊ້ຳ ທຸກກ້ຳມວນມາ ທຸບພາສິດຕາພ່ຳພ້ອມ 5 ສະຫລຶງນ້ອມນຳມາ ຂັນສິມມາຍໍ່ຍິ່ນ ອັນໜຶ່ງຫົວແສນ ກີຍັງແຄນຈັກໜ່ອຍ ປະຣາ

ຊິກທ້ອຍຕາມມາ ຂັ້ນຄາຄຳພັນສອງ ສັງຄາຣອງຮັບໄວ້ ຊອກໄຊ້ມາ
ເສຍ ຂັ້ນໄຫມເບັ້ຍບໍ່ມ ຫົກຮ້ອຍປໍ່ນແຄນມາ ຕາແບນຫລຽວໄປ ກຸນ
ລະໄຈບໍ່ໄດ້ຫລີກ ຂັ້ນແປງອີກຕາມເບີ ຂານເອີບໍ່ໄດ້ຄຽດ 3 ຮ້ອຍ
ປຽດມານິ ນິດສັກກີລີຂຽນຮ້ອຍ 5 ບາດຕາມເພງ ບໍ່ໄດ້ເກງຂັ້ນຕູ່
ພໍຢູ່ພໍກິນ ປາຈິດຕີຍິມຫນ່າຍ ຂັ້ນກ່າຍລ່າຍ ເຂົາ 7 ບາດ 2 ສະ
ຫລິງເທົ່າເກົ້າຕາຍ ປາຕິເທດຢາຍຢັງຕາມຂັ້ນຜິດປາກ ງາມແຫລ່ງ
ຫລາກ 3 ບາດສະຫລິງງາເຮີງຮົດ ທຸກກົດຂັ້ນທຳຜິດປາກ ຢ່າຕິດ
ເປັ່ນໂພຍ 7 ສະຫລິງເຟື້ອງໂອຍອິດອ່ອນ ບໍ່ໄດ້ຢ່ອນຕາມຄອງ ໃຫ້
ຕອງຕາມຮີດ ທຸບພາສິດຕາມມາ ເປັນເງິນຕາທຸກເບື້ອງ 3 ສະ
ຫລິງເຟື້ອງວ່າບໍ່ຫລາຍ ພໍຣາດເຊື້ອສະເຫມີກັນ ອັນຫນຶ່ງຫົວພັນຮ້ອຍ
ບໍ່ພ້ອຍບໍ່ກາຍ ປະຣາຊິກ ອັນທິກເຫມືອນວ່າ ຂັ້ນຄາຄຳກົດແກວດ 8
ຮ້ອຍຕາມເມືອງຢ່າໄລປະຣີດບູຮານ ສັງຄານານະຈອບ ຫລາຍຂອບ
ໄຫມເອົາຕາມເນົາໂດຍຮີບ 4 ຮ້ອຍກິບຕາມຄອງ ກຸນລະໄຈຍໍ່ຍິ່ນ
ຢັ້ງຢືນສຽງແຂງ ຂັ້ນແປງພິເພືອກ 2 ຮ້ອຍເລືອກເລີຍບາຍ ບັດສັກ
ກີຢາຍຢັ່ງຢູ່ ຂັ້ນຕູ່ຍັງບໍ່ບ່ຽງ ຮ້ອຍຫນຶ່ງທ່ຽງເນືອງນິດ ປາຈິດຕີຂັ້ນຕິ
ກ່ອຍປອງ ຕາມຄອງບັກປາດ 5 ບາດຕາມກະບວນ ກໍຍັງຄວນ
ເນືອງເນດ ປາຕິເທດຊີຊັ້ບ ຜິດປາກນັບມາ 10 ສະຫລິງ ເງິນຕາ
ທຸກຫມູ່ ທຸກກົດຢູ່ນຳກັນ ຂັ້ນທ່າຜິດທຸກເມື່ອ 5 ສະຫລິງເຊື່ອຄອງທຳ
ທຸບພາສິດນຳແນບ ຂັ້ນສົມມາແທບຫົວ ບໍ່ລອນກົວທຸກສິ່ງ 2 ສະຫລິງ
ເຟື້ອງຊົມບານ ອັນຫນຶ່ງຊຸນກວານນ້ອຍໃຫຍ່ ປະຣາຊິກໃສ່ຂັ້ນຄາຄຳ
ເອົາທີ່ນີ້ 6 ຮ້ອຍທັດ ກົກສັງຄາມາສອນຂັ້ນໄຫມ ບອກເຕີມເອົາ

ເງິນເຮົາບໍ່ໂພດ 3 ຮ້ອຍໂຫດເລີຍເຕັມ ກຸບລະໄຈເລັມກະລ່າງຂັ້ນ
ແປງອ້າງແຕ່ຄວາມ 5 ບາດຕາມແຕ່ງພູດ ບໍ່ໄດ້ຊູດດີຫລີ ນິດສັກຕິ
ເຕີມປ່າວ ຂັ້ນຕູ່ທ້າວກາກເຫດ 7 ບາດເສດ 2 ສະຫລຶງ ຊ້ຳຕື່ມ
ຫນ້າອີວາ ປາຈິດຕິຄາວກ່ອນ ບໍ່ໄດ້ປ່ອມຫອນງາມ ຂັ້ນຕິຕາມ 3
ບາດ ທຸກຂະຫນາດຍ່ອມ 2-3 ສະຫລຶງ ທອນອີກໃຫ້ປາຕິເຫດສະນິ
ເຫລືອແຫລ່ ຂັ້ນພິດແທ້ເພິ່ງກືວ 7 ສະຫລຶງເຟື້ອງມືວເມົາຍິ່ງ ທຸກ
ກິດຈິ່ງຕາມທີ ຂັ້ນພິດມີເພິ່ງກືວ 3 ສະຫລຶງເຟື້ອງປາພະລາດອ່າວ
ກືວພິດ ທຸບພາສິດຂໍໂລມເລົ່າ ທັບບາຍຊ່ອຍອາຍແດ່ນາ ຂັ້ນສືມມາ
ຫລາຍຂອບ ສະຫລຶງເຟື້ອງລູພບາຍ ຍັງປາຍລາດກ່ອງ ໃຫ້ຄ່ອງ
ຕາມຄຸນ ອັນຫນຶ່ງນັກບຸນຊຸນຄ້າ ລູກຫລານຊາວເມືອງ ປະຣາຊິກ
ຜ່າຍຜ່ອງ ກຶກຕ້ອງຫລາຍທ່າ ຂັ້ນຄາຄຳຫາກມີ 4 ຮ້ອຍດີເງິນດວງ
ກຶກສັງຄາຫວງຕື່ນ ຂັ້ນໄຫມຊື່ນຊົມເດ ສອງຮ້ອຍເນີມວນຫມູ່ ກຸບລະ
ໄຈຂັ້ນແປງ ຕາແຍງພໍຮ້ອຍ ນິດສັກຕິຍ່ອຍຊຸມຂັ້ນຕູ່ ທ້າວຄຸມຄວ່າ
5 ບາດ ມາແຕ່ງໃຕ້ປາຈິດຕິໄງ້ປ່ອງ ຂັ້ນຕິຜ່ອງພີຜ່າຍ 10 ສະ
ຫລຶງຢາຍຕາມເຫດ ປາຕິເຫດຄວາມສູງ ລຸງອ່າວດູຫລ່າ ຂັ້ນພິດ
ປາກທັນ 5 ສະຫລຶງຕ້ອງຕາຄ້ອມແມ່ນ ທຸກກິດແລ່ນເມືອນຳ ຂັ້ນທຳ
ພິດບໍ່ຊ້າ ສອງສະຫລຶງເຟື້ອງກ້າຂໍຊົມ ທຸບພາສິດດົມກີ່ກ້ອຍ ຂັ້ນສົມ
ມາອ່ອຍອັງເຊີນ ເງິນສະຫລຶງບາດລາດ ອັນຫນຶ່ງທີນະຊາດເຮົາ
ບອກປະຣາຊິກນອກເກິງນັ້ນ ຂັ້ນຄາຄຳ ມີແຕ່ສອງຮ້ອຍແກ່ເງິນລ້ຽງ
ສັງຄາຣຽງນຳຄືນ ຊຸນໃຫຍ່ຈົບຫລາຍເປີກ ຮ້ອຍຫນຶ່ງເລີກບານເອົາ
ກຸນລະໄຈ ເວົ້າແຂງຂັ້ນແປງເອົາ ພໍຮ້ອຍ 5 ບາດທ້ອຍແຂວນແອວ

ບິດສັກຄິແລ່ວ ແກ່ທຸກທົ້ນດິງເບື້ອງຂັ້ນຕູ່ເຣື້ອງໂດຍສືບ ສະຫລືງກີບ ຕາມມີ ປາຈິດຕີເບື້ອງນອບ ຂັ້ນຕີຄອບນໍາເກິງ ບໍ່ໄດ້ເທີງຕໍາແອ່ 5 ສະຫລືງແນ່ ນໍາເສຍ ປາຕິເທດເປັນປືນ ຂັ້ນພິດປາກກິນມາກກ່ອງ ສອງສະຫລືງເຟື້ອງ ປອງຕັ້ງແຕ່ງ ທຸກກິດແຍ່ງແປງຂັ້ນ ທໍາພິດບໍ່ຕິດ ທົ້ນຍ່າງຍ່າຍ ສະຫລືງປາຍພໍລາດ ທຸບພາສິດຊາດເຊື້ອຂັ້ນສືມມາ ເກີດຕາມຄອງສອງລາດກ່ອງ ວາງໃຫ້ນັກປາດໄດ້ສືມຄວນ ຂອງທັງ ມວນຝູງນີ້ ຢ່າໄດ້ຊີ້ມົກາຍ ໃຫ້ແຈກຢາຍ 3 ສ່ວນ ພູດໜຶ່ງດ່ວນ ເມືອກວາຍ ພະຣາຊາບາຍໄວ້ ພູດໜຶ່ງໄດ້ເຈົ້າຄວາມພູດໜຶ່ງຕາມ ເຈົ້າກ່ວ້ານ ຢ່າໄດ້ຕ້ານເກາະກ່ອວ ໃຫ້ຮີບທ່ອວປັນກັນ ທໍ່ໃນແຈກ ໂທດ ຕັ້ງແຕ່ປະຣາຊິກ 4 ສັງຄາ 13 ຕົວ ກຸນລະໄຈ 2 ຕົວ ບິດສັກຄີ 30 ປາຈິດຕີ 92 ທຸກກົດ 75 ທຸບພາສິດ 4 ຕົວ ແຈກ ເປັນໂທດທໍ່ນີ້ແລ.

ສຸວັງລະກາມະຫາອຸບປາລີເກຣະເຈົ້າ ຈັກຍົກອະພິທັມມາ 7 ຄໍາພີ ອອກເທດສະໜາແກ່ປານະສັດທັງຫລາຍແລ ໂສຕຸຊະນະທັງ ຫລາຍ ໂຍຄາວະຈະຣະເຈົ້າ ອັນຈັກເອົາຕົວຂ້າມນໍ້າອະມຸດຕະມະ ຫານະຄອນ ຈົ່ງຟັງຄໍາສອນແຫ່ງພະຕະກາຄະຕະ ອັນມະຫາອຸບປາລີ ເກຣະເຈົ້າກ່າວມາແຕ່ພາຍຫລັງນີ້ເທີ້ນ. ໜັງສືສ້ອຍສາຍຄໍາ ໂພ ສາທິຣາດເຈົ້າໝົດເທົ່ານີ້ກ່ອນແລເຈົ້າເຮີຍ.

ເຍທັມມາ ອັນວ່າອາບັດທັງຫລາຍຝູງໃດ ອາບັດທຸບພາສິດ ເຂົ້າມາ 4 ຕົວນີ້ ຈິ່ງເປັນອາບັດທຸກກົດຕົວໜຶ່ງແລ. ອາບັດທຸກກົດ ເຂົ້າມາ 75 ຕົວ ຈິ່ງເປັນອາບັດປາຕິເທດຕົວໜຶ່ງແລ. ອາບັດປາ

ຕິເທດເຂົ້າມາ 4 ຕົວ ຈຶ່ງເປັນອາບັດປາຈິດຕີຕົວໜຶ່ງແລ. ອາບັດ
ປາຈິດຕີເຂົ້າມາ 92 ຕົວ ຈຶ່ງເປັນອາບັດນິດສັກຄີຕົວໜຶ່ງແລ. ອາ
ບັດນິດສັກຄີເຂົ້າມາ 30 ຕົວ ຈຶ່ງເປັນອາບັດກຸນລະໄຈຕົວໜຶ່ງແລ.
ອາບັດກຸນລະໄຈເຂົ້າມາ 2 ຕົວຈຶ່ງເປັນອາບັດສັງຄາຕົວໜຶ່ງແລ.
ອາບັດສັງຄາເຂົ້າມາ 13 ຕົວ ຈຶ່ງເປັນອາບັດປະຣາຊິກຕົວໜຶ່ງແລ

ປະຣາຊິກ 404ບາດ ສັງຄາ 202 ບາດ ກຸນລະໄຈ 100
ປາຍບາດ ປາຈິຕຕີ 6 ບາດ ທຸກກົດຊິກເຫລືອໜຶ່ງ ທຸບພາສິດ
ເຟື້ອງໃນໜຶ່ງຊັກ ເຫລື່ອນັ້ນໃຫ້ເປັນຂັນເຜິ້ງຂັນທຽນ ເຂົ້າຕອກ
ດອກໄມ້ ສົມມາກັນກໍເປັນແລ. ທໍ່ວ່າ ໃຫ້ຫລິ່ງດູຍັງກາລະແລ ປະ
ເພດ ວັດຖຸອັນໜັກອັນເບົາແລ ອາທິກອນຄວາມເຂົາກ່ອນເທີ້ນ. ພິ
ວ່າ ຍັງຄວນຕັດແທ້ຈຶ່ງຕັດຕາມຄອງໃນພະເຈົ້າຕັ້ງໄວ້ນີ້ເທີ້ນ. ນັກ
ປາດແລະຊຸມພິຈາລະນາທັງຫລາຍ ຜູ້ງມີພະຫຍາເພິ່ງຮູ້ດັ່ງນີ້ເທີ້ນ.
ວັດຖຸອັນອອກໃນສະໝັນປາຕິໂມກຂະສັງວະຣະສິນພຸ້ນແລ. ສະບັບ
ໜຶ່ງນັ້ນ ປະຣາຊິກ 400 ນໍ້າ 6 ສັງຄາ 200 ນໍ້າ 6 ນິດສັກຄີ
100 ນໍ້າ 6 ປາຈິດຕີ 5 ບາດ ນໍ້າ 6 ປາຕິເທດ 10 ສະຫລຶງ
ນໍ້າ 6 ປາຕິເທດ 10 ສະຫລຶງ ນໍ້າ 6 ທຸກກົດເຟື້ອງໜຶ່ງ ທຸບພາ
ສິດລຳກ່ອງ ກຸລລະໄຈຣອງຄໍສັງຄາ 104 ບາດ ນໍ້າ 6 ແລ. ບຸກ
ຄະລະຜູ້ໃດມີໃຈແຂງຂະໜາດ ບໍ່ໂດຍອາດຍາ ພະຣາຊາກ່າວຟ້ອງ
ກິກຕ້ອງອາປັຕຕິຍາ ປະຣາຊິກຕົວຕົ້ນບໍ່ພົ້ນບໍ່ກາຍອັນໜຶ່ງ 6 ປີ ປາ
ຕິຕົນພະຍາເຈົ້າ ຢ່າປາກເວົ້າຕຽນທ່ານດີຫລີ ປະຣາຊິກມີຕົວ 2
ກິກເນື້ອ ອັນໜຶ່ງຢ່າອ່າວລັກໂລບເອົາຂອງ ພະຈອມທອງພະຍາ

ຫລວງທ່ານໄທ້ ປະຣາຊິກໄດ້ຕ້ອງກຶກຕິດຕາມ ກຶກຕົວ 3 ດີຫລີນາ. ອັນໜຶ່ງ ຢ່າກ່າວເອົ້າຕົວແປດນາງສະໜົມ ຢ່າເຊີຍຊົມເມຍພະຍາ ມອນມີ້ ປະຣາຊິກ 4 ກຶກຕ້ອງເກີງຕົນ ອັນໜຶ່ງໄດ້ພໍຕົນໄປລົບເສີກ ໃຫຍ່ ຢ່າປະໄປ່ພະຍາເຈົ້າແລ່ນຄືບ ແຜ່ນດິນກີນຕົນບໍ່ຊ້າ ປະຣາຊິກ 5 ກຶກຕ້ອງຕິດຕົນ ອັນໜຶ່ງໄດ້ຊຸມກັນຄວາມເມືອງແລ້ວ ພາກໜີ ຈາກທັ້ນໄປຮອດຊານ ຢ່າພາງານມ້າງສະໜອງພານແກ່ທ່ານ ຄຽດ ແທ້ພໍນ້ຳຕາຕົກ ປະຣາຊິກ 6 ເກີງຕົນທັດທ່ຽງ ອັນໜຶ່ງຢ່າບ່ຽງ ກ້ອຍຂຽນຂີດ ແປງຕາຂຽນໄປຫາຂ້າເສີກພາຍນອກ ບໍ່ບອກເຈົ້າພະ ຍາໃນເມືອງ ຍິນເຄືອງໃຈຄອຍທ້ວດ່າ ກຶກປະຣາຊິກ 7 ຕົວຕົນບໍ່ ຄາດ ອັນໜຶ່ງຢ່າຍຸຍາດພົນຈາກພະຍຸບຸນ ເມື່ອພາຍລຸນເອົາຕົນວຽນ ແວດ ປະຣາຊິກ 8 ເກີງເນື້ອບໍ່ນານ ອັນໜຶ່ງການເມືອງມີມາເກີງ ຮ້ອນເຮັ່ງ ໃຈເລ່ງງມາບອກຮອດເຮືອນ ຢ່າບິດເບືອນບໍ່ເມື່ອຫາ ເຈົ້າ ກຶກປະຣາຊິກ 9 ທັດທ່ຽງ ຈິ່ງນຳຣາຊາພົ້ນຂ້າມເສຍບໍ່ມີໂທດ ດູຊ້ອຍໂຊດຫາຍບາບກຳເວນແລ ເຈົ້າເຮີຍ. ອັນນີ້ປະຣາຊິກເສນາ ແລ. ປະຣາຊິກຍິງຊາຍ ຍິງ 2 ຕຳລຶງ ຊາຍ 4 ຕຳລຶງ ປະຣາ ຊິກກ້ອນ 2 ຍິງ 3 ຕຳລຶງ ຊາຍ 6 ຕຳລຶງ ປະຣາຊິກກ້ອນ 3 ຍິງ 4 ຕຳລຶງ ຊາຍ 8 ຕຳລຶງ ປະຣາຊິກກ້ອນ 4 ຍິງ 5 ຕຳລຶງ ຊາຍ 10 ຕຳລຶງ ປະຣາຊິກກ້ອນ 5 ຍິງ 6 ຕຳລຶງ ຊາຍ 12 ຕຳລຶງ ປະຣາຊິກກ້ອນ 6 ຍິງ 7 ຕຳລຶງ ຊາຍ 14 ຕຳລຶງ ປະ ຣາຊິກກ້ອນ 7 ຍິງ 8 ຕຳລຶງ ຊາຍ 16 ຕຳລຶງ ປະຣາຊິກກ້ອນ 8 ຍິງ 9 ຕຳລຶງຊາຍ 18 ຕຳລຶງ ປະຣາຊິກກ້ອນ 9 ຍິງ 10

ຕຳລຶງ ຊາຍຊົ່ງໜຶ່ງ.

ບັດນີ້ ຈັກກ່າວ ທ້າວພະຍາຊ້ອຍໂຊດ ໄດ້ຕ້ອງໂທດອັນໜັກ ປະຣາຊຶກເກີງຕືນ ຊຸບພິນຕັດໃສ່ໂທດໃຫ້ເພີງພໍ ຂັນຄາຄໍພັນໜັກຮ້ອຍ ຢ່າໄດ້ຕົກໃຈນາ ກັກສັງຄາບໍ່ນ້ອຍ 800 ເປັນຂັນໄໝ ກຸນລະໄຈ ກ້ອນກໍ່ 400 ຂັນແປງ ນິດສັກຄືແຍງຢູ່ ຂັນຕູ່ເບົາບາງ 200 ວາງ ໃຫ້ໄດ້ແລ້ວເລົ່າຍິນດີ ປາຈິດຕີໂດຍດ່ວນ ກ້ອນກໍ່ ກັກຂັນຕີ 100 ປາຕິເທດຍື່ນມາ ຂັນອາຈາຜິດປາກ 5 ບາດທາກຄວນ ທຸກກົດທວນ ວ່າຍາໄດ້ເອົາຈົມນ້ຳ ຂັນທຳ 10 ສະຫລຶງ ເລີຍດີງເອົາຊ້ຳທຸກກ້ຳ ມວນມາ ທຸບພາສິດຕາພ່ຳພ້ອມ 5 ສະຫລຶງນ້ອມນຳມາ ຂັນສິມມາຍໍ ຍື່ນ ອັນໜຶ່ງຫືວໝື່ນຫືວແສນ ຍັງແຄນຈັກສະໜ່ອຍ ປະຣາຊຶກທ່ອຍ ຕາມມາ ຂັນຄາຄໍພັນ 2 ສັງຄາຮອງຮັບໄວ້ ຊອກໄຊ້ມາເສຍ ຂັນ ໄໝເບັ້ຍບົ່ນ 60 ປີ່ນແກມຕາແນມຫລອວໄປ່ ກຸນລະໄຈຍາໄດ້ຫລີກ ຂັນແປງອີກກໍຕາມເຍີ ຊານໄດ້ຄອດ 300 ປອດຢາມີ ນິດສັກຄືລີ ຄາດ 105 ບາດ ຢ່າໄດ້ຂາດ ເກ່ງຂັນຕູ່ ພໍຢູ່ພໍກິນ ປາຈິດຕີຍັງ ໝາຍ ຂັນຕີກາຍລ່ວງເຂົ້າ 7 ບາດ 2 ສະຫລຶງເທົ່າເກີງຕາຍ ປາຕິເທດຢ່າຝາກຕາມ ຂັນຜິດປາກງາມແຫລ່ງຫລ້າ 3 ບາດ 3 ສະຫລຶງ ກ້າເຣືອງຣິດ ທຸກກົດຂັນທຳຜິດ ຢ່າໄດ້ຕິດເປັນພະຍາດ 10 ສະຫລຶງເຟື້ອງໂອຍອິດອ່ອນ ບໍ່ໄດ້ຢ່ອນຕາມຄອງ ໃຫ້ຕອງຕາມ ຣິດ ທຸບພາສິດຂັນສິມມາ ເກີງຕາທຸກເບື້ອງ 3 ສະຫລຶງເຟືອງວ່າບໍ່ ຫລາຍ ບໍ່ບາຍພໍລາດ ເຊື້ອຊາດສະເໝີກັນ. ອັນໜຶ່ງຫືວພັນຫືວ ຮ້ອຍ ບໍ່ພ້ອຍປະຣາຊຶກເໝືອນວ່າ ຂັນຄາຄໍກອັດແກ່ວງ 8 ຮ້ອຍ

ຕາມເປີງ ຢ່າເຫລີງຢ່າລະ ປະຣິດບູຮານ ສັງຄານານຈອບ ຫລາຍ ຂອບໄໝເອົາ ຕາມເນົາໂດຍຣີບ 4 ຮ້ອຍກີບຄາຄໍ ກຸນລະໄຈຍໍ້ ທົ່ມເທັ່ງສອງແຂງແປງເກີກ 2 ຮ້ອຍເລີກເລີຍບາຍ ມິດສັກຄີຢາຍ ຢັງ ຂັນຕູ່ຍັງບໍ່ບ່ອງ ຮ້ອຍໜຶ່ງທ່ອງເມືອງມິດປາຈິດຕີ ຂັນຕີຄ່ອນພິ ປອງ ຕາມຄອງນັກປາດ 5 ບາດຕາມກະບວນ ກໍຍັງຄວນເມືອງ ເນດ ປາຕິເທດຊີຊັບ ຂັນຜຸດປາກນັບມາ 10 ສະຫລຶງ ຕາທຸກໝູ່ ທຸກກົດຢູ່ດອມກັນ ຂັນທຳຜິດທຸກເມື່ອ 5 ສະຫລຶງ ເຊື່ອຄອງທຳ ທຸບ ພາສິດນຳແນບ ຂັນສິມມາແທບທົວ ຢ່າລວນກົວທຸກເບື້ອງ 2 ສະ ຫລຶ່ງເຟື້ອງຈົ່ງຊົມບານ ອັນໜຶ່ງຂຸນກວານນ້ອຍໃຫຍ່ ປະຣາຊິກໃສ່ ຂັນຄາຄໍ ເອົາທໍ່ນຳ 6 ຮ້ອຍທັດ ສັງຄາມັດສອກໃສ່ຂັນໄໝ ບອກ ເຕີມເອົາເງິນເຮົາຢ່າໃພດ 3 ຮ້ອຍໂກດເຕັມ ກຸນລະໄຈເລັ້ມກ່າງ ຂັນແປງອ້າງແຕ່ຄວາມ ຮ້ອຍ 5 ບາດຕາມແບ່ງພູດ ບໍ່ໄດ້ຂູດດີຫລີ ມິດສັກຄີເຕີມປ່າວໄດ້ 7 ບາດ 2 ສະຫລຶງ ປາຈິດຕີຟາດກ່ອນ ບໍ່ ໄດ້ຢ່ອນທອນງາມ ຂັນຕີຕາມ 3 ບາດ ທຸກຂະໜາດຍ້ອນ 2-3 ສະຫລຶງທອນຈົ່ງແລ້ວ ເຈົ້າແກ້ວດວງດີ ປາຕິເທດມີເຫລືອແລ່ ຂັນ ຜິດປາກແທ້ເພິ່ງກົວ 10 ສະຫລຶງມົວເມົາຍິ່ງຄາມ ທຸກກົດຕາມຕິດ ຂັນທຳຜິດບໍ່ຢ່າວ ກ່າວ 3 ສະຫລຶງເຟື້ອງປາຍລາດ ກົວຜິດ ທຸບພາ ສິດຂໍໂຍມ ເລົ່າໂລມຫຍັບຍ້າຍຊ່ອຍອາຍແດ່ນາ ຂັນສິມມາຫລາຍຊຸບ ສະຫລຶງເຟື້ອງລຸບປາຍລາດກ່ອງ ໃຫ້ຕອງຕາມຄຸນ. ອັນໜຶ່ງນັກບຸນ ຊຸນຄ້າ ລູກຫລ້າຊາວເມືອງ ປະຣາຊິກເຮືອງພາຍຜ່ອງ ກີກຕ້ອງ ຫລາຍຂັນຄາຄໍຫາກມີຄ່າ 4 ຮ້ອຍດີເງິນດວງ ກີກສັງຄາທວງຕື່ມ

ຂັນໄໝຊື່ນຊົມເດ 2 ຮ້ອຍເບມອນຫມູ່ ກຸນລະໄຈຂັນແປງຕາມແຍງ
ພໍຮ້ອຍ ນິດສັກຄີຊຸມ ຂັນຕູຄຸມ 5 ບາດມາແຕ່ໄດ໋ ປາຈິດຕິໄງ້ປ່ອງ
ຂັນຕີຜ່ອງຜີພາຍ 10 ສະຫລຶງຢາຍຕາມເຫດ ປາຕິເທດຄວາມຝູງ
ລຸງອ່າວດູຫລາກ ຂັນຜິດປາກທັງປວງ 5 ສະຫລຶງຕວງຄອບແມ່ນ
ທຸກກົດແລ່ນເມື່ອນຳ ຂັນທຳຜິດບໍ່ຊ້າ 2 ສະຫລຶງເຟື້ອງກ້າຂໍຊົມ ທຸບ
ພາສິດດິນກ່ອຍ ຂັນສິມມາອ່ອຍເຊີງເງິງ ເງິນ 10 ສະຫລຶງປາຍ
ລາດ. ອັນຫນຶ່ງ ຄືນຫິນະຊາດເຮົາບັງ ປະຣາຊິກນອກເກິງມັນ ຂັນ
ຄາຄໍມີແດ່ 2 ຮ້ອຍແກ່ເງິນລອງ ສັງຄາຣອງຫາຄົບຂັນໄໝ ຈົບ
ຫລາຍເປີກຮ້ອຍຫນຶ່ງເລີກບາດເອົາ ກຸລລະໄຈເຮົາເຈົ້າຂັນແປງ
ເຈົ້າບໍ່ປ່ອຍ 5 ບາດຫ້ອຍແຂວນແອວ ນິດສັກຄີແຊວເສບແອ່ງ ເປັນ
ຂັນຕູ່ແຮງໂດຍຮີບ 10 ສະຫລຶງກີບຕາມ ປາຈິດຕິເນື່ອງນອບ ຂັນຕີ
ຕອບນຳເກິງ ບໍ່ໄດ້ເຫິງຕຳແອ່ 5 ສະຫລຶງແມ່ນມາເສຍຕາມເຫດ
ປາຕິເທດເປັຍປິ່ນຟ້າວ ຂັນຜິດປາກລ້າວບໍ່ດີ 2 ສະຫລຶງເຟື້ອງກຸມ
ຕັ້ງແຕ່ງ ທຸກກົດແຫ່ງຂັນທຳຜິດ ທຸດຈະຣິດຢ່າງຍ່າຍ ສະຫລຶງປາຍພໍ
ລາດ ທຸບພາສິດຊາດເຊື້ອ ຂັນສິມມາເກື້ອຕ່າງ 2 ລາດກ່ອງວາງ
ໃຫ້ນັກປາດໄທ້ສົມຄວນ ຂອງທັງມວນຝູງນີ້ ຢ່າໄດ້ຊີ້ມີກາຍ ໃຫ້ແບ່ງ
ບາຍ 3 ສ່ວນ ພູດຫນຶ່ງດ່ວນເມືອກອາຍພະຣາຊາບາຍໄວ້ ພູດຫນຶ່ງ
ໄດ້ເຈົ້າຄວາມ ພູດຫນຶ່ງຕາມເຈົ້າກອ້ານ ຢ່າໄດ້ຕ້ານເກາະກ່ອວ
ໃຫ້ຮີບທ່ອວປັນກັນເທາະເນີ. ອັນນີ້ໂຄງແຈກໂທດແລເຈົ້າເຣີຍ.

ຜີວ່າ ພິກຂຸຕ້ອງອາບັດປະຣາຊິກ ທັງ 4 ຕົວໆໃດຕົວຫນຶ່ງ
ຂາດຈາກພິກຂຸແລ ຫີນໂລກໄພ່ຊາວເມືອງກີກຂັນຄາຄໍ 4 ຮ້ອຍ ພິກ

ຊຸຕ້ອງອາບັດສັງຄາທິເສດ 13 ຕົວໆໃດຕົວໜຶ່ງກໍດີ ບໍ່ສຳແດງອາບັດກັ້ງບັງໄວ້ສິ້ນຣາຕີເທົ່າໃດ ເພິງຢູ່ປະຣິຈາດສະກຳສິ້ນຣາຕີເທົ່ານັ້ນແລ ເພິງຢູ່ມານັດ 6 ຄືນ ຈິ່ງອັບພານແລ ໃຫ້ຂົນນ້ຳ 100 ຫາບ ຂົນຊາຍ 100 ໃສ່ສີມ ໃສ່ວັດ ໃສ່ເຂດຈິ່ງພົ້ນໂທດແລ. ທີນໂລກໄພ່ຊາວເມືອງກໍກຂັນຕີ 100. ພິກຂຸຕ້ອງອາບັດນິດສັກຄີປາຈິດຕີ ໃຫ້ເທດສະໜາອາບັດເສຍ ແລ້ວໃຫ້ຂົນນ້ຳ 50 ທາບ ຊາຍ 50 ທາບ ຈິ່ງພົ້ນໂທດແລ. ທີນໂລກໄພ່ຊາວເມືອງກໍກຂັນແປງ 5 ບາດແລ. ພິກຂຸຕ້ອງອາບັດປາຕິເທດສະນີ ໃຫ້ເທດສະໜາອາບັດເສຍແລ ໃຫ້ຂົນນ້ຳ 25 ທາບ ຊາຍ 25 ທາບຈິ່ງພົ້ນໂທດແລ. ທີນໂລກຊາວເມືອງກໍກຂັນຜິດປາກ 2 ບາດເຟື້ອງແລ. ພິກຂຸຕ້ອງເສກຂິຍະວັດອາບັດ ທຸກກົດໃຫ້ເທດສະໜາອາບັດເສຍແລ ໃຫ້ຂົນນ້ຳ 12 ທາບ ຊາຍ 12 ທາບ ຈິ່ງພົ້ນໂທດແລ. ທີນໂລກຊາວເມືອງກໍກຂັນສີມມາບາດບັກແລ. ພິກຂຸຕ້ອງອາບັດທຸບພາສິດ ໃຫ້ເທດສະໜາອາບັດເສຍແລ້ວ ໃຫ້ຂົນນ້ຳ 5 ທາບ ຊາຍ 5 ທາບຈິ່ງພົ້ນໂທດແລ. ທີນໂລກຊາວເມືອງກໍກຂັນສີມມາ 2 ບັກຊິກແລ ມີແຕ່ເຂົ້າຕອກດອກໄມ້ເຜິ້ງທຽນສີມມາຄາຣາວະ ກໍເປັນ ທໍ່ວ່າໃຫ້ຫລິງດູອາທິກອນ ກ້ອຍຄຳແຫ່ງຂາທັງສອງອັນຜິດກັນ ພາກັນເຂົ້າມາສູ່ຊຸມພິນິດໄສ ໃຫ້ພິຈາລະນາຕາມກ້ອຍຄຳ ແຫ່ງຂາທັງສອງກ່າວນັ້ນແຈ້ງແຈບແລ້ວ ຈິ່ງໃຫ້ໃສ່ຕາມຂັນໂທດ ຕາມໜັກຕາມເບົານັ້ນເທີ້ນ. ຂັນໂທດຜູ້ຍິງຊາວເມືອງກໍຜ່າກ່ອງເອົາ ຂັນໂທດຜູ້ຊາຍຊາວເມືອງນັ້ນແລ. ຜີວ່າຜູ້ຍິງມີຜົວ ໃຫ້ຜ່າກ່ອງເອົາຂັນໂທດຜົວນັ້ນຊູ່

ອັນເທີ້ນ. ຂັນຖາຄໍແລະຂັນໂທດທັງຫລາຍນັ້ນ ຂຶ້ນຕາມປະຄາຍຶດປະ ດາສັກ ໂທດບໍ່ມີເຈົ້າປາລີຍົກໂທດໃສ່ ໃຫ້ເປັນຂັນສົມມາ ເຈົ້າປາລີ ກໍຈັກໄດ້ອິບາກ ຢູ່ໃນນະຮົກພັນປີ ຜີວ່າຄວາມມັນພໍເກີງຂັນສົມມາ ເຈົ້າປາລີຍົກຂຶ້ນໃຫ້ເປັນຂັນຜິດປາກ ເຈົ້າປາລີກໍຈັກອິບາກຢູ່ໃນນະ ຮົກ 3 ພັນປີ. ຜີວ່າຄວາມມັນພໍເກີງຜິດປາກ ເຈົ້າປາລີຍົກຂຶ້ນໃຫ້ ເປັນຂັນແປງ ເຈົ້າປາລີກໍຈັກອິບາກ ຢູ່ໃນນະຮົກໄດ້ໝື່ນປີ. ຜີວ່າ ຄວາມມັນພໍເກີງຂັນແປງ ເຈົ້າປາລີຍົກຂຶ້ນໃຫ້ເປັນຂັນຕີ ເຈົ້າປາລີກໍ ຈັກໄດ້ອິບາກ ຢູ່ໃນນະຮົກໄດ້ແສນປີ. ຜີວ່າຄວາມມັນພໍເກີງຂັນຕີ ເຈົ້າປາລີຍົກໃຫ້ເປັນຂັນໄໝ ເຈົ້າປາລີກໍຈັກໄດ້ອິບາກຢູ່ໃນນະຮົກ ໄດ້ 4 ແສນປີ. ຜີວ່າຄວາມມັນພໍເກີງຂັນໄໝ ເຈົ້າປາລີຍົກຂຶ້ນໃຫ້ ເປັນຂັນຖາຄໍ ເຈົ້າປາລີກໍຈັກໄດ້ອິບາກໃນນະຮົກ 8 ແສນປີ. ຜີວ່າ ຄວາມພໍພຽງໃດໃຫ້ວ່າພໍພຽງນັ້ນເທີ້ນ. ປະການໜຶ່ງ ບຸກຄະລະຜູ້ ໃດຍັງເປັນໄພຍາກັບຂາຄວາມດ້ອຍໃຈ ກໍໃຫ້ມີອິບາກຢູ່ໃນນະຮົກ 3 ຊາດ ແລ້ວຈັກໄດ້ສະເຫວີຍທຸກຢູ່ດອມນາຍກຸມພັນ ເປັນພັນປາຍ 3 ຊາດ ນາຍກຸມພັນຈິ່ງໃຫ້ຫນີ້ທັນແລ. ອັນນີ້ ໄດ້ຊື່ວ່າໄພຍາກັບຂາ ຄວາມໃນໃຈນັ້ນແລ. ຜີວ່າໄດ້ໄພຍາອອກປາກກັບຄວາມ ກໍຈັກໄດ້ ທົງອິບາກຢູ່ໃນນະຮົກ 6 ຊາດ ກໍຈັກໄດ້ອອກມາສະເຫວີຍທຸກດອມ ນາຍກຸມພັນ ເປັນພັນປາຍ 6 ຊາດ ແລ້ວນາຍກຸມພັນຈິ່ງໃຫ້ຫນີ້ທັນ ແລ. ອັນນີ້ໄດ້ຊື່ວ່າ ໄພຍາອອກກັບຂາຄວາມແລ. ກ່າວທັມມະຈັກ ອານາຈັກ ກໍແລ້ວເທົ່ານີ້ກ່ອນແລເຈົ້າເຮີຍ.

– ຣາຊະກະກຸມກົນເມືອງແສນຂຸນໝື່ນ ຂັນຖາຄໍ 1800

- ຣາຊະກະກຸນຫົວເສິກ ຂັນຄາຄຳ 1600
- ເຈົ້າຫົວແສນທ້າວເພຍຫມື່ນ ຂັນຄາຄຳ 1200
- ເຈົ້າຫົວພັນຊຸນພັນ ຂັນຄາຄຳ 800
- ຊຸນກວານທ້າວເພຍໃນທຳນຽມ ຂັນຄາຄຳ 600
- ຊາວເມືອງແລະອາຄັນດຶກ ຂັນຄາຄຳ 400
- ຄົນທຸກໄຮ້ແລະຂ້າທ່ານ ຂັນຄາຄຳ 200
- ບໍ່ໃຊ່ກະກຸນກິນເມືອງຊຸນຫມື່ນ ຂັນຄາຄຳ 600

ບັດນີ້ ຈັກຈາຂັນຄາຄຳທ້າວເພັຍແສນຫມື່ນຂ້າໄພ່ນ້ອຍທ່ານແລອ່າຄັນດຶກ ອັນມີໃນກຳພິສຸວັນນະຮັງສີມີດັ່ງນີ້ແລ.

- ມີເມືອງທັງ 4·ຂັນຄາຄຳ 200
- ແສນແທນຫມື່ນໄຊນ້ອຍ
- ພັນແສນສັນຫມື່ນກັບພອງຊອງ
- ແສນຂັນແຂກ

- 3 ຄົນນີ້ເທົ່າກັບຂັນຄາຄຳຄົນລະ 1000

- ຫມື່ນກັບພອງເມືອງຊອງ
- ຫມື່ນກັບພອງເມືອງກັດ
- ຫມື່ນກັບພອງເມືອງຄັ້ງ
- ຫມື່ນກັບພອງເມືອງໂມ

- 4 ຊຸນນີ້ຂັນຄາຄຳ 600

- ຈ່າເມືອງທັງ 4 ຂັນຄາຄຳ 500
- ຫມື່ນພອງກັບເມືອງແສນ ຂັນຄາຄຳ 600
- ຊຸນກາງທໍແສນພອກ ຂັນຄາຄຳ 500
- ຫມື່ນຊ້າງຫລວງ ຂັນຄາຄຳ 800

- ໝື່ນມຸງຄຸນ ຂັນຄາຄໍາ 800
- ໝື່ນກັບນາຍຫລວງ ຂັນຄາຄໍາ 800
- ໝື່ນຊ້າງທຽມນາຍຫລວງ ຂັນຄາຄໍາ 600
- ໝື່ນເດັກຊາຍໝື່ນສານ ຂັນຄາຄໍາ 600
- ທຽມຂວາທຽມຊ້າຍ ຂັນຄາຄໍາ 600
- ນາງເມືອງທໍກອງຊໍ່ທໍໄຊ ຂັນຄາຄໍາ 500
- ເພັຍຂັນທໍຮັບກວານນໍ້າກິນ ຂັນຄາຄໍາ 500

- ພູມແຫລາກວານດາບທຽມເມືອງແທນ ເມືອງນາງເມືອງ ທໍ ໝື່ນເພຍ ໝື່ນພວກໝ້ຽງ ຄຸມໜ້ານາຍພາດຄ້ອງ ໝື່ນເສບ ກວານກອງຊະບັດໄຊ ກວານທວານນາ ທັງມວນນີ້ ຂັນຄາຄໍາ 500

- ພູມກອກພູມນາວ, ໝື່ນຂ້ອງ ໝື່ນເສືອ, ໝື່ນຮັບໝື່ນຣານ, ໝື່ນນໍ້າໝື່ນຂັນ, ໝາກດາຍໄຊກອນນ້ອຍ, ໝື່ນຮັບໝື່ນດານ ໝື່ນແພນເຫລົ່ານີ້ ຂັນຄາຄໍາ 600

- ພູມໄຊກອງໜ້າທໍງ້າວໜ້າຫລັງ ຂັນຄາຄໍາ 500
- ທໍງົ້ວພູມສວດຊຽງແທນ ຂັນຄາຄໍາ 500
- ພັນທຽມຊາຍ ຂັນຄາຄໍາ 600
- ກັນນາດໃນກັນນາດນ້ອຍ ຂັນຄາຄໍາ 500
- ຈ່າຊົ້ນຈໍາຫລັກທໍແສງ ຂັນຄາຄໍາ 500
- ທໍໄຕຈ່າເຜົ້ງ ຂັນຄາຄໍາ 500
- ພູມທຽມ ຂັນຄາຄໍາ 500
- ຈ່າພູມທຽມ ຂັນຄາຄໍາ 500

- ໝື່ນຍາມໝື່ນຊອງຖຸງໝື່ນຈາໝື່ນຕົວ ຂັນຄາຄໍ 600
- ຊ່າງທາງຊ່າງເປີງຊ່າງເຫລືອກ

ສາທອນ ຂັນຄາຄໍ 500
- ໝື່ນເກິງໝື່ນເສງໝື່ນຣາດ

ໝື່ນໂມໝອກ ຂັນຄາຄໍ 600
- ໝື່ນເມືອງຈອນໝື່ນເມືອງມອນ ຂັນຄາຄໍ 600
- ໝື່ນຊົນໝື່ນນ້ອຍ ຂັນຄ່ຄໍ 800
- ໝື່ນກາຍໝື່ນບໍ່ໝື່ນອອມໝື່ນຈາ

ໝື່ນເມືອງອາວທາ ຂັນຄາຄໍ 600
- ໝື່ນບ້ານບອກຂອກນາ ຂັນຄາຄໍ 500
- ພະນອງພັນນອງກວານບ້ານນອກ

ຊຸນແຄວັນຊຸນຈາທານນ້ອຍ

ຊຸນຄ້າຊາວຊາຍ ຂັນຄາຄໍ 400
- ໄພ່ແລະຂ້ອຍອັນໂຕຊາດ ຂັນຄາຄໍ 300
- ຝູງອາຄັນດົກ ຂັນຄາຄໍ 400

ຂັນຄາຄໍມີໃນກໍາພີຣາຊະສາດຫລວງ ມີດັ່ງນີ້ແລເພິ່ງຮູ້ເທີ້ນ.
- ຣາຊະກະກຸນຂັນຄາຄໍ 600 ຂັນໄໝ 800 ຂັນຕີ 400
- ຫົວໝື່ນຫົວແສນຂັນຄາຄໍ 200 ຂັນໄໝ 600 ຂັນຕີ 300
- ຫົວພັນຫົວຮ້ອຍຂັນຄາຄໍ 800 ຂັນໄໝ 400 ຂັນຕີ 200

- ຂຸນກວານນ້ອຍໃຫຍ່ ຂັນຄາຄໍ 100 ຂັນຕີ 500
- ຂຸນຄ້າຊາວເມືອງ ຂັນຄາຄໍ 200 ຂັນແປງ 200 ຂັນແປງ 5 ບາດ ຂັນໄໝ 200 ຂັນຕີ 100
- ໄພ່ອາຄັນດຶກໄພ່ຫີນະຊາດຂັນຄາຄໍ 200 ຂັນແປງ 150 ຂັນແປງ 2 ບາດເຟື້ອງຂັນໄໝ 100 ຂັນຕີ 5 ບາດ ຂັນແປງ 7 ບາດເຟື້ອງ ເປັນຂຸນໃຫ້ພິຈາລະນາຕົງກໍ່ດູເຫິ້ນ.

ຂັນຜິດປາກ 100

ຂັນຜິດປາກ 7 ບາດເຟື້ອງ

ຂັນຜິດປາກ 50

ຂັນຜິດປາກ 3 ບາດບັກ

| | |
|---|---|
| ຂັນຜິດປາກ 2 ບາດເຟື້ອງ | ຂັນສິມມາ 2 ບາດເຟື້ອງ |
| ຂັນຜິດປາກ ບາດບັກ | ຂັນສິມມາ 2 ບາດບັກຊິກ |
| ຂັນສິມມາ 3 ບາດບັກ | ຂັນສິມມາ ບາດບັກ |
| ຂັນສິມມາ 2 ບາດເຟື້ອງ | ຂັນສິມມາ 2 ບັກຊິກ |

ໃຫ້ພິຈາລະນາດູເຫິ້ນມີຫລາຍການແລ ການໜຶ່ງແກ່ ການໜຶ່ງອ່ອນດາຍ ການໜຶ່ງຂັນສິມມາ 2 ບາດເຟື້ອງ ການໜຶ່ງ 2 ບັກຊິກ ການໜຶ່ງບາດບັກ ການໜຶ່ງ 3 ບັກສ້ອວ ການໜຶ່ງ 2 ບັກຊິກ ການໜຶ່ງບັກສ້ອວແລ.

ທີ່ນີ້ ຈັກວ່າຍັງບຸກຄະລະຜູ້ເປັນໃຫຍ່ ຄວນຮໍາເພິງພິຈາລະນາດູຍັງບຸກຄະລະ ຜູ້ມີໂທດ ຈິ່ງຄວນໃສ່ສິນໄໝ ຜູ້ບໍ່ມີໂທດບໍ່ຄວນໃສ່ສິນໄໝ ບໍ່ຊອບທໍາແລ ມີໃນພະທໍາພິທໍາມະບິດ ອັນພະພຸດທະ

ເຈົ້າທາກເທດສະໜາບັນຍັດໄວ້ວ່າ:

ອະທິດໂກ ປະຣະໂຕໂທສັງ ອະນຸງກຸລານິສສັພພະໂສ

ອິສສະໂຣປະນະໂຍທັນທັງ ສາມັງອັປປະຕິເອກຂິຍາຕິ ດັ່ງນີ້ ປະນະດ້ວຍແທ້ ໂຍບຸຄຄະໂລ ອັນວ່າບຸກຄະລະຜູ້ໃດ ອິສສໂຣອັນອັນເປັນເຈົ້າເປັນໃຫຍ່ ອະທິດໂກອັນບໍ່ເຫັນໂທສັງຍັງໂທດ ອະນຸກຸນລານິ ອັນນ້ອຍອັນໃຫຍ່ ປະຣະໂຕແຫ່ງທ່ານ ສັພພະໂສ ດ້ວຍປະການທັງມວນ ໂສປຸຄຄະໂລອັນບຸກຄະລະຜູ້ນັ້ນ ອັປປະຕິເອກຂິຍະ ບໍ່ພິຈາລະນາໃຫ້ແຈ້ງສາດ້ວຍຕົນ ນະເຫຕິ ກໍບໍ່ຄວນໃສ່ທັນທັງຍັງສິນໄໝປະຣັສສະແຫ່ງທ່ານຜູ້ອື່ນແລ.

ຜີວ່າບຸກຄະລະຜູ້ໃດ ມາເລົ່າຄຳຂ້າງດຽວບໍ່ຄວນຟັງ ໄດ້ຍິນຄຳສອງເບື້ອງກ່ອນຈິ່ງຄວນຟັງ ເປັນດັ່ງພະຍາພົມມະທັດເມື່ອກ່ອນຟັງຄຳເບື້ອງດຽວລວດຈັກຕີເສດກີເສຍຍາມນັ້ນໂພທິສັດເຈົ້າເປັນອາມາດ ກໍຫ້າມພະຍາດ້ວຍຄາຖາວ່າ: ອະວິທັນຕາ ທະໂຕຕິພາສິສຸງເຊຕວາ ຊິຕາຕິ ພາສັນຕີ ປຸພພະທະຂາຍິໂນ ຣາຊະເອກະທັຕຕັງນະສະປະເທ ດັ່ງນີ້ ມະຫາຣາຊະຂ້າໄຫວ້ມະຫາຣາຊເຈົ້າ ອະວິທັນຕາອັນຂ້າຕີຍັງທ່ານ ພາສິສຸງ ເຂົ້າກໍມາກ່າວທະໂຕອີຕິວ່າ ຂ້າຍັງຕົນຊະນະອັນວ່າຄົນທັງຫລາຍໃນໂລກນີ້ ເຊຕວາແພ້ທ່ານແລ້ວພາສັນຕິກໍມາກ່າວ ຊິໂຕອິຕິວ່າ ທ່ານແພ້ຕົນແລ ມະຫາຣາຊະຂ້າໄຫວມະຫາຣາຊເຈົ້າ ອັນວ່າທ້າວພະຍາມະຫາກະສັດ ນະສະທະເທກໍບໍ່ເພິງເຊື່ອຍັງກ້ອຍຄຳ ປຸພພະທະຂາຍິໂນ ແຫ່ງຜູ້ຂ້າມາກ່າວກ່ອນ ເອກະທັຕຕັງດ້ວຍແທ້ແລ ໂພທິສັດເຈົ້າວ່າ ດູລາມະຫາຣາດ ຄົນທັງຫລາຍ

ນີ້ ເຂົາຕີເພິ່ນເຂົາລວດມາກ່າວອ່າ ເພິ່ນມາຂ້າຕີເຂົາອ່າດັ່ງນັ້ນ
ເປັນອັນມາກ ຜູ້ນັ້ນຫາກຂ້າຕີເພິ່ນແລ້ວ ປັນດິຕະຊາຕານັ້ງ ລ້ຳຄົບ
ທັງຫລາຍອັນເປັນນັກປາດມີພະຫຍາໂກ ອັນອ່າບຸກຄະລະຜູ້ໃດ ສຸ
ເນຍຍະກໍຟັງ ວະຈະນັງຍັງຄຳ ອິຕຣັສສ ແຫ່ງຜູ້ມາກ່າວນັ້ນຈາ ປັນ
ດິໂຕອັນອ່ານັກປາດສຸຕວາໄດ້ຍິນແລ້ວ ຍັງຄຳອຸພິນນັງແຫ່ງບຸກຄະລະ
ສອງກ້ຳ ກະເຣກໍເພິງກະທຳ ຍະຖາທັມມັງ ຕາມທຳປະເວນີເມື່ອ
ກ່ອນ ຕະຖາດ້ວຍປະມານດັ່ງນັ້ນ ອະທິບາຍດັ່ງນີ້: ພະຍາໄດ້ຍິນຄຳ
ສອງກ້ຳສອງຝ່າຍກ່ອນ ຈິ່ງຄວນຕັດຕາມໂບຮານະຈາຣິດ ຈິ່ງຄວນ
ແລ. ຄຳບໍ່ໄດ້ຂຽນ ຢ່າຟ້າວກະທຳຈັກຜິດເສຍແລ ອັນນີ້ອອກໃນສຸຣິ
ສາຣັດຖີກະຊາດົກຈະຕຸກກະນິບາດພຸ້ນແລ.

ບັດນີ້ ຈັກກ່າວລັກຂະນະແຫ່ງຜູ້ຈັກສວນທັ້ນແລ ເຂົາມາສູ່ສີ່
ເມືອງທັງສອງຂ້າງພ້ອມກັນ ເພິງໃຫ້ສີ່ເມືອງຖາມເອົາຄຳປາກຂາ
ທັງສອງໄວ້ໃຫ້ຫມັ້ນ ຢ່າໃຫ້ພິກຄວາມໄດ້ ເມື່ອພາຍລຸນຊາຕິບຸກຄະ
ລະຜູ້ຈັກຖຽງກັນນີ້ ທໍ່ນິຍົມຖ້ອຍອັນຂາທັງສອງ ກ່າວເປັນປະຖົມສິ່ງ
ດຽວແລ ເຫດສັກຂີມີສັນນີ້ ປຸພເພມະວາທັງຍະຖາ ມະຫາສຸກະຕັງ
ທຸກກະຕັງກັມມັງວາຈັງ ສັກຂິກະຣິຕວານະ ຕັສສະທັນທັງ ຕະວິສສະ
ເຣດັ່ງນີ້ ອະທິບາຍມັກອ່າສີ່ເມືອງເຄືອງເອົາຖ້ອຍຄຳແຫ່ງບຸກຄະລະ
ທັງສອງ ອັນເປັນປະຖົມນັ້ນເປັນອັນຫມັ້ນອັນທ່ຽງ ກ່າວຄືອ່າຖ້ອຍຄຳ
ອັນມັນກ່າວມັນບຽນມານັ້ນເປັນຄວາມດີ ກໍຫາກເປັນສັກຂີແກ່ຄວາມ
ມັນ ຖ້ອຍຄຳອັນມັນກ່າວມານັ້ນບໍ່ດີ ກໍຫາກເປັນສັກຂີແກ່ຄວາມມັນ ວິ
ນິເສຍຍະ ກໍເພິງໃສ່ສິນໄຫມເຕີມຄຳແຫ່ງມັນອັນບໍ່ດີນັ້ນເທີ້ນ ແມ່ນ

ມັນປັ້ນຄຳດີມາເມື່ອພາຍລຸນ ກໍຢ່າໃຫ້ສີ່ເມືອງໄດ້ຟັງຄຳແຫ່ງມັນເທີ້ນ
ຢ່າໃຫ້ແພ້ແກ່ບຸກຄະລະ ຜູ້ກ່າວຄວາມດີແຕ່ເຄົ້ານັ້ນເທີ້ນ ເປັນສຸຄະຕິ
ແລ. ຄຳສັນນີ້ ກໍຫາກສົມດັ່ງພະຍາອາຫາສະມຸກຂະຊາດົກ ອັນພະ
ເຈົ້າເທດສະໜາໄຂ ໃນຕິກກະນິບາດພຸ້ນເທີ້ນ. ອັນໜຶ່ງເປັນສີ່
ເມືອງ ໃຫ້ຫລິງດູກ້ອຍຄຳອັນເປັນ ມຸລລະປັຕຕັມພະ ກ່າວຄືວ່າກີ
ເອົາເຂົ້າຂອງແຫ່ງກັນແລ ມີລາຍລັກອັກຂະຣະ ຂີດຂຽນເປັນປະ
ໜານໄວ້ແລ ມີສັກຂີໝັ້ນແກ່ນ ເພິ່ງໃຫ້ສີ່ເມືອງຕັດເຕີມອັນມີສັກຂີນັ້ນ
ເທີ້ນ. ຢ່າຊ່ອຍຄວາມຜູ້ຫາສັກຂີບໍ່ໄດ້ໃຫ້ກ້ອຍຄວາມທ່ານຫາກເສຍບໍ່
ດີ ບໍ່ກີກອົງຄະແຫ່ງສີ່ເມືອງແຫ່ງສັກຂີສັນນີ້: ປະມານັງລິກຂິຕັງພຸຕິ
ສັກຂີນັນສເສທະກິຕຕິຕັງ ເຕສະມະຍະຕະຣາພະເວ ທິພພະຍາຍັນຈະ
ມຸຈຈະເຕດັ່ງນີ້ ອະທິບາຍໃນຄາຖາອັນນີ້ວ່າ ກ້ອຍຄວາມບຸກຄະລະ
ຜູ້ມາກ່າວລາຍລັກອັກຂະຣະທັມມະຣາກສາກສີໝັ້ນແກ່ນ ໃຫ້ສີ່ເມືອງ
ຕັດແຕ່ງຕາມ ຢ່າໃຫ້ເສຍອັດຖຸທ່ານ ຜິວ່າສີ່ເມືອງບໍ່ກີເອົາຍັງກ້ອຍ
ຄຳອັນອາຈານເຈົ້າກ່າວໄວ້ດັ່ງນີ້ ກີກອະຄະຕິຕາຍໄປຕົກນະຣົກ ສະ
ເຫວີຍກຳມະວິບາກມາກນັກ ກ້ອຍຄຳຝູງນັ້ນ ຜິບໍ່ມີລາຍລັກອັກຂະຣະ
ທັມມະຣາກສາກສີ ດັ່ງນັ້ນໃຫ້ສະບົດ ຄືວ່າໃຫ້ຫລັ່ງນ້ຳແລ້ວຕັດຕາມ
ສັດຈະເທດສັກຂີມີສັນນີ້ວ່າ ນັດກີທິຕກັງສຸຕັງເຈວະສະປະຊັງຣາຊະ
ປັນດິໂຕສະປະກັງອະກະໂຣໂຍຈະຕັສສະທັນໂທ ພະວິສສະເຣດັ່ງນີ້
ອະທິບາຍໃນຄາຖາອັນນີ້ວ່າ ຄວາມຕໍ່ໃດຫາທັມມະຣາກສາກສີບໍ່ໄດ້
ຫາຜູ້ເຫັນຜູ້ໄດ້ຍິນບໍ່ໄດ້ ສີ່ເມືອງເພິ່ງໃຫ້ສະບົດ ຄືວ່າຫລັ່ງນ້ຳແລ້ວ
ແລຕັດເຕີມສັດຈະອັນສະບົດນັ້ນເທີ້ນ ຜິວ່າມັນຫລັ່ງນ້ຳບໍ່ໄດ້ຊື່ວ່າມັນ

ລ່າຍທາສັດຈະບໍ່ໄດ້ໃຫ້ຕັດເສຍ ຄືວ່າໃຫ້ໃສ່ສິບໄຫມ ແກ່ມັນເທີ້ນ. ເຫດທຳສັດຈະອະທິການນີ້ ຫນັກນັກເຫດພະພຸດທະເຈົ້າເທດສະໜາ ໄວ້ໃນທະວາທັດສະນິບາດວ່າ: ຍັງມີກະສັດຕົນຫນຶ່ງ ສະເຫວີຍຣາ ຊະສົມບັດໃນເມືອງພາຣານະສີ ຍັງມີລູກຊາຍຜູ້ຫນຶ່ງຊື່ວ່າ ໂສນະກຸ ມານມີຮູບໂສມງາມຍິ່ງນັກ ເລົ່າຍັງມີລູກສາວກະສັດຕົນຫນຶ່ງຊື່ວ່າ ອຸ ທຸມພະຣາມີຮູບໂສມງາມ ມີຣັດສະຫມີຣຸ່ງເຮືອງທົ່ວຫ້ອງເຮືອນຫນຶ່ງຢູ່ ເປັນປົກກະຕິທຸກວັນຄືນ ແມ່ນກາງຄືນກໍຣຸ່ງເຮືອງຢູ່ເປັນປົກກະຕິ ດຸດ ຈະດັ່ງໄຕ້ປະທີບຢູ່ນັ້ນດີຫລີແລ ພະຍາພາຣານະສີ ກໍໄປໂອມເອົາມາ ເປັນລູກສະໄພ້ແຫ່ງຕົນ ບໍ່ນານເທົ່າໃດໂສນະກຸມານລວດເກີດເປັນ ພະຍາດທູດເຣື້ອນທົ່ວທັງຄີງ ລວດບັງເກີດຄຳສັງເວກມັກໄຄ່ໄປບວດ ເປັນຣັດສີຢູ່ ຈິ່ງຂໍໂອກາດເຊິ່ງພະຍາຕົນເປັນພໍ່ ເຖິງສອງທີສາມທີ ພະຍາຈິ່ງອະນຸຍາດ ຈິ່ງອອກຫນີຈາກບ້ານເມືອງ ໄປບວດເປັນຣັດສີ ຢູ່ໃນປ່າຫິມະພານ ເມື່ອເຈົ້າໂສນະກຸມານ ອັນຈັກອອກໄປບວດນັ້ນ ຈັກໄປເປັນຜູ້ຫນຶ່ງຄົນດຽວ ດັ່ງນັ້ນນາງອຸທຸມພະຣາ ຂໍໄປບວດດອມ ເຈົ້າໂສນະກຸມານ ທັງສອງຫ້າມເສຍເຫດເປັນພະຍາດໃນຕົນຝາງ ຣ້າຍມາກນັກ ບໍ່ເປັນທີ່ຮັກແກ່ນາງ ອັນຫນຶ່ງ ໂສນະກຸມານເລັງເຫັນ ໄພຍໄພ ອັນມີໃນປ່າຫິມະພານມາກນັກ ຈິ່ງບໍ່ມັກໄຄ່ໃຫ້ນາງໄປດອມ ນາງກໍບໍ່ຟັງລວດຂໍໄປດອມເຈົ້າໂສນະກຸມານ ຜູ້ຜົວຫ້າມຫລາຍເລົ່າ ຫລາຍທີ່ນາງກໍບໍ່ຟັງ ຈິ່ງໃຫ້ນາງໄປດອມຫັ້ນແລ ເມື່ອນັ້ນພະຍາອິນ ທາທິຣາດ ກໍປະສາດໃຫ້ວິສຸກັມມະເທວະບຸດ ລົງມານິຣະມິດອາສົມ ບົດສາລາ ໄວ້ໃຫ້ເປັນທີ່ສ້າງສົມພຣົມມະຈາຣີ ແຫ່ງກະສັດທັງສອງຫັ້ນ

ແລ ເມື່ອນັ້ນ ພະກະສັດທັງສອງກໍຢູ່ສ້າງສະມະນະທຳຈຳສິນ ໃນພູມະສະຖານທີ່ນັ້ນສັງເຈຍຣະການນານນັກ ນາງອຸທຸມພະຣາມີປົກກະຕິອັນກະທຳຄອງວັດ ບົວຣະບັດອັນນ້ອຍອັນໃຫຍ່ ແກ່ພະຣັດສີເຈົ້າບໍ່ຂາດສາຍແລ ປົກກະຕິອັນຕະເດີນຄວ່າຫາລູກໄມ້ຫົວມັນ ມາອຸປະຖາກພະກະສັດຣັດສີເຈົ້າຊູ່ວັນແລ ດ້ວຍແທ້ຍັງມີໃນວັນໜຶ່ງ ນາງອຸທຸມພະຣາຕະເດີນໄປຄວ່າຫາລູກໄມ້ຫົວມັນ ທີ່ໄກນັກ ຈຶ່ງໄປຮອດສະໃນກຂະຣະນີທີ່ໜຶ່ງ ອັນອາກອຸນເດຍຣະດາດເຕັມໄປດ້ວຍເຂົ້າໜີ້ມທັງຫລາຍເປັນອັນມາກ ນາງກໍລົງອາບນ້ຳໃນສະຊຳຣະເນື້ອຕົນເສຍທີ່ນັ້ນແລ້ວ ນາງກໍຊຸດເອົາເຂົ້າໜີ້ມ ມາຕຳກັບບອກທິນຂັດສີກາຍະເນື້ອຕົນທັ່ງມວນແລ້ວ ເມື່ອນັ້ນຍັງມີມານະວະຍັກໜຸ່ມຜູ້ໜຶ່ງ ກໍມາກຸບລູບຫຍຸມເອົາຍັງແຂນແຫ່ງນາງອຸທຸມພະຣາດ້ວຍພາວະ ອັນຈັກກຸມເສບເມຖຸນະທຳກັບດ້ວຍນາງ ຈັກເອົານາງເປັນເມຍ ວ່າດັ່ງນັ້ນນາງຈຶ່ງກ່າວວ່າ ດູລາມານະວະຍັກ ຜູ້ເປັນເຈົ້າເປັນຜົວແຫ່ງກູກໍຍັງມີດີຫລີດາຍ ກໍຍາອັນກູຈັກໃຫ້ທ່ານເສບສົມແລ ເປັນເມຍແຫ່ງທ່ານນີ້ບໍ່ສົມບໍ່ຄວນແທ້ແລ ວ່າດັ່ງນັ້ນມານະວະຍັກຜູ້ນັ້ນກ່າວວ່າ ແມ່ນວ່າມີຜົວດັ່ງນັ້ນກໍດີ ກູກໍບໍ່ຟັງແລ ວ່າດັ່ງນັ້ນ ມານະວະຍັກກ່າວກ້ອຍຄຳອັນຫຍາບຊ້າກ້າແຂງດັ່ງນັ້ນ ເມື່ອນັ້ນ ອຸທຸມພະຣາເທວີ ຈຶ່ງກ່າວແກ່ເທວະດາອາຣັກ ມະເຫສັກທັງຫລາຍ ດ້ວຍສະພາວະອັນຕົນປະກອບດ້ວຍສັດຈະສະພາບ ແລະມີຈິດໃຈອັນຊື່ຕໍ່ຜົວແຫ່ງຕົນແລ ບໍ່ມັກໃຄ່ມາມະວະຍັກເສບສົມກັບດ້ວຍຕົນດັ່ງນັ້ນ ເມື່ອນັ້ນ ທີນບັນດຸກຳພະສີລາບາດ ອັນເປັນທີ່ນພະອາດສະຫນາແຫ່ງອິນທາທິຣາດ ກໍກະດ້າງຈາກ

ປົກກະຕິ ດ້ວຍກຳລັງປະທຍາປັນຍາ ແຫ່ງນາງອຸທຸມພະຣາອັນຮອງ ຮັບ ເທວະດາອິນທາທິຣາດກໍເອົາແກ້ວອະຊິຣະເພັດ ກັບທັງຄ້ອນຈັບ ເຫລັກ ກໍສະເດັດລົງມາສັນທາບນາບຍັງມານະວະຍັກແລ ຈັບເອົາ ມານະວະຍັກໄປປ່ອຍເສຍທີ່ໄກ ເພື່ອກົວໄພອັນຈັກເກີດມີເມື່ອພາຍ ລຸນ ນາງຈິ່ງຂໍເຊີ້ງພະຍາອິນວ່າ ຂ້າໄທ້ວອິນທາທິຣາດ ຊາຕິຍັກຕົວ ຮ້າຍທຍາບຊ້າທາຣຸນ ມັນເລົ່າຍັງບຸ່ນກະທຳຮ້າຍທີ່ໜຶ່ງ ເມື່ອພາຍ ລຸນບໍ່ສົງກາ ຂໍແກ່ອິນທາທິຣາດເຈົ້າທະລົງພະຣາຊະກະຣຸນາ ໂຜດ ຍັກສາໂທດໄປແດນໄກແກ່ຂ້າແດ່ເທີ້ນ ເມື່ອນັ້ນພະຍາອິນທາທິຣາດ ຈິ່ງຜູກເອົາຍັກຕົວນັ້ນ ໃສ່ຕູ້ຕອນຊອນເຫລັກໄປປະເສຍ ໃນທ່ວາງພູ 3 ອັນ ເປັນອັນໄກແຕ່ອາສົມທີໄກແລ້ວ ກໍສະເດັດເມືອສູ່ເມືອງຟ້າ ດາວະດຶງສາ ອັນເປັນສະຖານທີ່ສຳຣານແຫ່ງຕົນວັນນັ້ນແລ ເມື່ອນັ້ນ ນາງອຸທຸມພະຣາຈິ່ງໃຫ້ເອົານ້ຳາໃນສະໂບກຂະຣະນີ ມາສູ່ອາສົມບົດ ສາລາ ພົ້ນເວລາກາລະອັນຕົນແຮ່ງໄປປົກກະຕິເປັນອັນຍິ່ງນັກ ເທດ ຍັກຕົວຮ້າຍທາກກະທຳຣາວີ ເກິງຣາຕີຈິ່ງຮອດ ເມື່ອນັ້ນເຈົ້າໂສນະ ຣັດສີ ເຫັນເທດອັນນາງໄປແລະນານມາຄ່ຳຈິ່ງຮອດອາສົມບັດສາລາ ຈິ່ງກ່າວຈາລະຈາສັນທາບຍັງນາງວ່າ ດູລານາງປົກກະຕິ ອັນນາງ ໄປທຸກວັນເມື່ອກ່ອນບໍ່ທ່ອນເປັນດັ່ງນີ້ ວັນນີ້ຮອຍວ່ານາງໄປປະສົບພົບ ເມຖຸນະທຳກັບຣັດສີ ແລະທີບພະຍາທອນແລະພານປ່າ ອັນແຮງຄວ່າ ຕະເດີນດົງ ບໍ່ສົງໄສແທ້ແລ ເມື່ອນັ້ນນາງຈັກສຳແດງອັນຜິເພດຍັກ ຈັກເສບສົມ ໂດຍນິຍົມຈິ່ງກ່າວແຕ່ພາຍຫລັງ ໃຫ້ແຈ້ງແກ່ເຈົ້າໂສນະ ຣັດສີ ເມື່ອນັ້ນ ເຈົ້າໂສນະຣັດສີ ກໍບໍ່ຟັງຄຳແຫ່ງນາງສັງສັກອັນແລ

ເມື່ອນັ້ນ ນາງຈິ່ງຂໍສັດຈະອະທິຖານ ຕາມກ້ອຍຄຳອັນມີໂດຍດັ່ງນິຍົມ ອັນໄດ້ກ່າວແກ່ເຈົ້າໂສນະຣັດສີນັ້ນ ຊູ່ປະການທັ້ນແລ ເມື່ອນັ້ນ ເຈົ້າໂສນະຣັດສີ ຈິ່ງໃຫ້ປະຕິຍານຂານຮັບເອົາຄຳວ່າດັ່ງນີ້ ນາງຈັກກະທຳອະທິຖານສິ່ງໃດ ກໍຈົ່ງກະທຳເທີ້ນ ເມື່ອນັ້ນນາງຈິ່ງເອົາອາໂປກະສິນ ອັນນາງຫາກເອົາມາແຕ່ສະອັນບໍຣະສຸດແລະໃສງາມມາກນັກ ມາຕັ້ງໄວ້ຊ້ອງໜ້າເຈົ້າໂສນະກຸມານ ແລ້ວນາງຈິ່ງກະທຳອະທິຖານດ້ວຍຄຳວ່າດັ່ງນີ້ ຜິວ່າຜູ້ຂ້າຫາກຍັງຕົວະຍັງໂລບຈາກເຈົ້າກູ ດ້ວຍເສບເມຖຸນະທຳຈາກເຈົ້າກູ ຄືວ່າຍັງໄດ້ໃຫ້ຣັດສີ ແລະທິບພະຍາທອນແລ ຄົນຜູ້ໃດຜູ້ໜຶ່ງແລ ຍັກຜູ້ມັນຫຍຸບບາຍເອົາຜູ້ຂ້າໄວ້ນັ້ນກໍດີ ຍັງໄດ້ໃຫ້ເຂົາທັງຫລາຍຝູງນັ້ນເສບສົມ ຜູ້ຂ້າດັ່ງເຈົ້າກູວ່ານັ້ນ ຈົ່ງໃຫ້ຄອງວິບາດຈິບຫາຍໃຫ້ເກີງແກ່ຜູ້ຂ້າ ໃນຊາດຕິນີ້ຊາດຕິໜ້າ ໃຫ້ຜູ້ຂ້າໄດ້ສະເຫວີຍກຳມະວິບາກ ອັນນ້ອຍອັນໃຫຍ່ໃນຊາຕິທັງມວນ ມີນະຣົກເປັນຕົ້ນ ແມ່ນວ່າປັດຈຸບັນນະຊາດນີ້ກໍດີ ກໍຢ່າໄດ້ອຸດທິແກ່ຂ້າເທົ່າອັນເທີ້ນ ຜິວ່າຜູ້ຂ້າຫາກບໍ່ໄດ້ເສບເມຖຸນະທຳ ກັບດ້ວຍຊາຍຜູ້ອື່ນ ເປັນກຳອັນຜິດ ທຸດຈະຣິດອັນບໍ່ຊອບດັ່ງນັ້ນ ສັດຈະທຳແຫ່ງຜູ້ຂ້າລູກນີ້ ຈົ່ງມາຊຳຣະຍັງທູດຊາດບາດຫລວງ ໃນເນື້ອຄີງແຫ່ງເຈົ້າກູເສຍໃຫ້ໝົດສ້ຽງບັດນີ້ ຄືວ່າ ໃນກາຍະເນື້ອຕົນແຫ່ງເຈົ້າກູທັງມວນດ້ວຍນ້ຳອັນນີ້ເທົ່າອັນເທີ້ນ ນາງກ່າວຄຳສັດຈະອະທິຖານສັນນີ້ແລ້ວກໍຈິ່ງຍໍເອົາຍັງນ້ຳອັນນັ້ນ ຫົດກາຍະເນື້ອຕົນເຈົ້າໂສນະກຸມານຣັດສີອັນນັ້ນທັ້ນແລ ຍາມນັ້ນທູດເຣືອນເຈົ້າຣັດສີກໍກັບກາຍຫາຍເສຍໃນຂະນະບັດດຽວນັ້ນທັ້ນແລ ທີ່ນັ້ນຄຳສົງກາກໍຫາຍເສຍສ້ຽງ ແກ່ເຈົ້າຣັດສີ

ຕົນເປັນຜົວນັ້ນແລ ບໍ່ນານເທົ່າໃດກະສັດທັງສອງ ກໍເອົາກັນຄືນເມືອ
ສູ່ບ້ານເມືອງ ດ້ວຍສີສະຫວັດສະດີ ກໍດ້ວຍອະນຸພາບສັດຈະທຳດວງ
ປະເສີດນັ້ນແລ ພະຍາຕົນເປັນພໍ່ແລະແມ່ ກໍອາຣາດທະນາສະເຫວີຍ
ຣາຊະສົມບັດ ດ້ວຍທົດສະຣາຊະທຳ 10 ປະການເປັນສັນນັ້ນກໍມີແລ
ຊາຕິສັດຈະທຳດວງປະເສີດນີ້ ກໍຫຼືນຍ່ອມໃຫ້ເກີງວຸດທິທຳ 4 ປະ
ການ ຄື: ອາຍຸ ວັນນະ ສຸຂະ ພະລະແລ ປະຕິພານະ ອັນກ້ອນ 5
ອະທິປະຕິສຳປັດໄຕຍະອັນກ້ອນ 6 ແລ ສຳປັຕໄຕຍະອັນກ້ອນ 7 ກໍ
ຈິ່ງສະເດັດເຂົ້າມາຮັກສາ ຍັງຂັນທະສັນຕານແຫ່ງເຈົ້າໂສນະກຸມານ
ກໍມີແລ ເຈົ້າໂສນະກຸມານປາງນັ້ນ ບັດນີ້ແມ່ນພະຍາປະເສນທິໂກສົນ
ແລ ນາງອຸທຸມພະຣາວັນນັ້ນ ບັດນີ້ແມ່ນນາງມັນລິກາເທວີແລ ເຫດ
ດັ່ງນັ້ນ ສັບພັນຍູເຈົ້າຈິ່ງເທດສະໜາວ່າ ສັຈຈັງທີປະຣະມັງໂລເກ
ສັຈຈັງໂລເປ ປັຈຈານະຕາ ສັຈຈັມທະວິຊຊະມະນັນທີ ສັພພະຫາດັ່ງ
ນີ້ແລ ປະຣະມັງສຸຂັງ ເປັນສຸກຍິ່ງກວ່າສຸກທັງມວນ ໂລເກໃນໂລກຄື
ວ່າເມືອງຟ້າແລະເມືອງຄົນທັງມວນແລ.

ບັດນີ້ຈັກຈາອານາຈັກ ແລະທັມມະຈັກສາດແລ ຣາຊັດທີສາດ
11 ຣາຊະສາດແລ ສຸພາສິດແລ ພົນ 3 ສາຍແລ ສ້ອຍສາຍຄຳມາ
ແປງເປັນທົມຄະດີໂລກ ຄະດີທຳປອບກັນແລ ທີຣາ ອັນວ່ານັກປາດ
ວິນິດສະໄຍ ອັນວ່າອາຈານ ຜູ້ເພິງພິຈາລະນາຕັດໃຫ້ຂາດ ເອຕກະ
ວະຈະເນໃນຄຳອັນສັພພັນຍູເຈົ້າ ປັນຍັຕຕັ້ງຫາກຕັ້ງໄວ້ນັກປາດເພິງ
ຮູ້ ດັ່ງວິສັດຊະນາທອມນອກນີ້ເທີ້ນ. ສັງຄານິດສັກຄື 3 ຕົວຈິ່ງເປັນ
ປະຣາຊິກແລ ຈາເປັນຂັນມີ 4 ຮ້ອຍບາດແລ ທຸກກົດເຂົ້າອາບັດ 3

ຕົວ ຈິ່ງເປັນສັງຄາຂັນມີ 2 ຮ້ອຍບາດແລ ອາບັດເຂົ້າທຸບພາສິດ 4 ຕົວ ຈິ່ງເປັນປາຈິດຕີຂັນມີຮ້ອຍໜຶ່ງແລ ທຸກກົດຮ້ອຍ 4 ບາດແລ ປາຕິເທດສະນີ 5 ບາດແລ ທຸບພາສິດ 3 ບັກ ໜັກ 2 ລຳກ່ອງ ກຸລລະໄຈຮ້ອຍແລ ຜີວ່າຣາຊະກະກຸນລູກທ້າວພະຍາ ຂັນຄາຄຳພັນ 6 ຮ້ອຍຂັນແປງ 4 ຮ້ອຍແລ ເມືອງແສນ ເມືອງຈັນຂັນຄາຄຳ 8 ໝື່ນ ເງິນ ເມືອງຊ້າຍ ເມືອງຂວາ ຂັນຄາຄຳ 6 ໝື່ນແລ ຊອງໄຕ້ ຊອງເໜືອ ຂັນຄາຄຳ 5 ໝື່ນເງິນແລ ບໍ່ຢາກເສຍເມືອງໄທ້ໄວ້ ຊອບແລ. ທົວແສນໃນນາຂັນຄາຄຳ 1000 ຂັນໄໝ 500 ຂັນຕີ 2 ຮ້ອຍ 5 ບາດ ຂັນສີມມາເບັ້ຍເຟື້ອງແລ ທົວໝື່ນຂັນຄາຄຳ 8 ຮ້ອຍ ຂັນໄໝ 4 ຮ້ອຍ ຂັນແປງ 2 ຮ້ອຍແລ ທົວພັນ ຂຸນນິໄສນາຍຊ້າງ ນາຍມ້າ ຂັນຄາຄຳ 6 ຮ້ອຍ ຂັນແປງ 4 ບາດ. ທົວສິບຂັນຄາຄຳ 4 ຮ້ອຍ ຂັນໄໝ 2 ຮ້ອຍ ຂັນແປງຮ້ອຍໜຶ່ງແລ. ເພຍທົວ 5 ໃນ ນາ ຂັນຄາຄຳຮ້ອຍທົກ ຂັນໄໝ 8 ຮ້ອຍ ຂັນຕີ 5 ຮ້ອຍຊອບແລ. ເພັຍທົວ 4 ໃນນາຂັນຄາຄຳຮ້ອຍສາມ ຂັນໄໝ 6 ຮ້ອຍ 5 ບາດ ຂັນຕີ 3 ເບັ້ຍ ຂັນສີມມາຮ້ອຍ 6 ບາດ. ໝ່ອມບ່າວນອກນາ ຂັນ ຄາຄຳ 6 ຮ້ອຍ ຂັນໄໝ 3 ຮ້ອຍ 5 ບາດ ຂັນຕີຮ້ອຍ 7 ບາດ ຂັນສີມມາ 6 ບາດແລ. ທົວ 5 ນອກນາແລ ທົວ 4 ນອກນາທໍ່ຂັນ ແປງໃນນາແລ. ແສນນອກນາ ທໍ່ຂັນໝ່ອມບ່າວໃນນາແລ. ໝ່ອມ ບ່າວນອກນາ ຂັນຄາຄຳ 6 ຮ້ອຍ ຂັນໄໝ 2 ຮ້ອຍ 5 ບາດ ຂັນຕີ ຮ້ອຍເຟື້ອງ ຂັນສີມມາ 6 ບາດ. ຂັນທວຍຄ້າເສດກີ ທໍ່ຂັນແສນໃນ ນາແລ. ກະກຸນນ້ອຍກະດຸມພິດ ທໍ່ຂັນໝອມບ່າວໃນນາແລ. ຂັນອາ

ຈານທີ່ຂັນແສນໃນນາ ຂັນຄາຄໍາ 1000 ຂັນໄຫມ 500 ຂັນຕິ 2 ຮ້ອຍ 5 ບາດ ຂັນທິດທີ່ຫມ່ອມບ່າວໃນນາແລ. ຂັນຊອງທີ່ຫມ່ອມບ່າວນອກນາແລ. ຂັນເຊື້ອຊາດຣາຊະວົງສາ ຂັນຄາຄໍາ 3000 ຂັນໄຫມ 5 ຮ້ອຍ ຂັນຕິ 7 ບາດຂັນສິມມາ 3 ຮ້ອຍ 7 ບາດເຟື້ອງ. ຄົນທຸກເປັນພໍ່ນັ້ນແມ່ນີ້ ຂັນຄາຄໍາ 4 ຮ້ອຍ ຂັນໄຫມ 2 ຮ້ອຍຂັນແປງ 3 ເບັ້ຍ. ຄົນທີ່ນະຊາດ ແລະ ຄົນສິນເພິ່ງ ຂັນຄາຄໍາ 2 ຮ້ອຍ ຂັນໄຫມຮ້ອຍ 11 ຂັນແປງ 6 ສະຫລຶງຊອບແລ. ທີ່ນວິໄນພະເຈົ້າມີດັ່ງນີ້ ສັງຄາ 13 ຕົວເຫດປາລີວ່າດັ່ງນີ້ ເຕຣະສະສັງຄາທິເສສາທັມມາດັ່ງນີ້ ແຈກເປັນຂັນຄົນ 13 ຂັນແລ 2 ຮ້ອຍເງິນແລ ອາບັດປະຣາຊິກມີ 4 ຕົວ ເຫດວ່າ ຈັຕຕາໂຣ ປະຣາຊິກກາທັມມານີ້ແຈກເປັນຂັນຄົນ 4 ຂັນແລ ຂັນແລ 4 ຮ້ອຍເງິນແລ. ອະນິຍົດມີ 2 ຕົວ ເຫດວ່າປາລີວ່າທະເວອະນິຍະຕາທັມມາດັ່ງນີ້ແລ ແຈກເປັນຂັນຄົນເປັນ 2 ຂັນແລ ຂັນ 5 ບາດເງິນແລ. ອາບັດທຸບພາສິດມີ 3 ຕົວ ຜີແຈກເປັນຂັນຄົນເປັນ 3 ຂັນແລ 3 ບັກຊິກແລ. ອາບັດທຸກກົດມີ 2 ຕົວ ຜີແຈກເປັນຂັນຄົນ 2 ຂັນແລ 5 ບາດ ໄນຍະໜຶ່ງປາຈິດຕີມີ 8 ບາດ ນິດສັກຄີ 6 ບາດເຟື້ອງແລ ຜີແຈກເປັນຂັນຄົນແລຂັນແລ 2 ບາດເງິນແລ. ອາບັດປາຈິດຕີມີ 92 ຕົວ ປາລີວ່າດັ່ງນີ້ ທະເວນະວຸຕິ ປາຈິຕຕິຍາ ທັມມາດັ່ງນີ້ ແຈກເປັນຂັນຄົນແລ 92 ຂັນມີ 8 ບາດແລ.

ຂັນຄາຄໍາເພຍ 8 ຮ້ອຍ ຂັນໄຫມ 4 ຮ້ອຍ 8 ບາດ ຂັນແປງ 6 ບາດ ໃຫ້ຫລິງດູຍົດເພຍເທິ້ນ. ຜີວ່າທົວແສນ ຂັນຄາຄໍາ 6

ຮ້ອຍ ຂັນໄໝ 3 ຮ້ອຍ 5 ບາດ ຂັນແປງບາດໜຶ່ງ ຜີວ່າຫົວໝື່ນໝ່ອມບ່າວ ຫົວທ້າວຂັນຄາຄໍ 4 ຮ້ອຍ ຂັນໄໝ 2 ຮ້ອຍ ຂັນຕີ 6 ເບັ້ຍ ຂັນແປງ 4 ບາດ. ຂັນຄາຄໍຄົນນ້ອຍມີ 8 ຕໍາລຶງ. ຜີວ່າຜູ້ຍິງ 4 ຕໍາລຶງ ຂັນຄາຄໍທ້າວເພຍ 16 ຕໍາລຶງ ຂັນຄາຄໍນາງເພຍ 8 ຕໍາລຶງ ຜີວ່າຂັນຄາຄໍຜູ້ຍິງ 2 ຮ້ອຍ ຂັນໄໝເບັ້ຍໜຶ່ງ ຂັນຕີ 4 ບາດ ຂັນແປງ 6 ສະຫລຶງແລ.

ບັດນີ້ ຈັກຈາທ້ອງມິດສາຈານໃຫ້ແຈ້ງກ່ອນແລ ຜີວ່າ ຣາຊະກະກຸນທ້າວພະຍາມິດສາຈານກັບເມຍທ່ານ ໃສ່ຂັນຄາຄໍ 1600 ແລ ແຕ່ຈັບມືກືນົມ ໃສ່ຂັນໄໝ 8 ຮ້ອຍ ແຕ່ກ່າວເລົ່າໂລມ ໜັງສືໜັງສ້ອນ ໃສ່ຂັນແປງ 4 ຮ້ອຍ. ຂຸນນາງສູ່ເມຍໄພ່ໂທດຊາຍກຶກປະຣາຊິກ 8 ຊາຍ 35 ຕໍາລຶງ ຍິງກຶກປະຣາຊິກຕົວຕົ້ນ 2 ຕໍາລຶງ ໄພ່ສູ່ເມຍຂຸນນາງ ຊາຍກຶກປະຣາຊິກ 4 ໂທດຕໍາລຶງ 2 ບາດ ຍິງກຶກປະຣາຊິກຕົ້ນໂທດ 2 ຕໍາລຶງ. ໄພ່ສູ່ນັກສະໜົມກົມມະວັງ ຊາຍກຶກປະຣາຊິກ 9 ໂທດ 4 ຕໍາລຶງ ຍິງກຶກປະຣາຊິກ 4 ຕີຊາຍ 500 ຕີຍິງ 250 ເອົາເຂົ້າຄຸກຄົນ 3 ເດືອນ ເອົາອອກມາເປັນຂ້ອຍຫຍ້າຊ້າງມ້າ ຄົນ 3 ປີ ຈິ່ງໝົດໂທດແລ. ໄພ່ສູ່ເມຍກັນ ຜົວໄປທໍາການ ເມຍຫລິ້ນຊູ້ທາງຫລັງ ໃສ່ໂທດ 12 ຕໍາລຶງ 2 ບາດ ຜົວໄປທຸຣະຄ້າຂາຍ ເມຍຫລິ້ນຊູ້ທາງຫລັງ ໃສ່ໂທດ 8 ຕໍາລຶງ ຄັນວ່າຜົວຢູ່ບ້ານເມຍຫລິ້ນຊູ້ໃສ່ໂທດ 6 ຕໍາລຶງ ຫົວຄູສັງຄະຣາດສູ່ເມຍເສນາອາມາດ ໂທດຊາຍກຶກປະຣາຊິກ ໂທດ 40 ຕໍາລຶງ ຍິງກຶກປະຣາຊິກ 5 ແລ 20 ຕໍາລຶງ ຫົວຊາພະພີ່ນ້ອງສູ່ເມຍຂຸນນາງ ພໍ່ຊາຍ

ເປັນປະຣາຊິກ 20 ຕຳລຶງ ຍິງກຶກປະຣາຊິກຕົ້ນ 10 ຕຳລຶງ. ຜູ້ໃດໄປນອນດອມເມຍທ່ານໆໄດ້ກັບບ່ອນຂ້າຕາຍບໍ່ເປັນໂທດ ແຕ່ບາບແລ.

ລູກເຂີຍສູ່ແມ່ເມຍບໍ່ມີຜົວ ໃສ່ໂທດພໍ່ຊາຍ 2 ບາດ ຍິງ 3 ບາດ ໃຫ້ເກົ້າແກ່ກິນບາດຫນຶ່ງ ເຈົ້າໂຄດບາດຫນຶ່ງ ຄາຣະວະຫລັກຄຳ 3 ບາດຫມົດໂທດແລ. ລູກເຂີຍສູ່ແມ່ເມຍມີຜົວ ໃສ່ໂທດພໍ່ຊາຍ 3 ບາດ ຍິງຕຳລຶງຫນຶ່ງ ໃຫ້ເກົ້າແກ່ກິນ 2 ບາດ ຄາຣະວະຫລັກຄຳ 2 ບາດສົມມາເຈົ້າໂຄດເບື້ອງຜົວ 2 ບາດຫມົດໂທດແລ. ພີ່ເຂີຍສູ່ນ້ອງເມຍບໍ່ມີຜົວໃຫ້ເກົ້າແກ່ເອົາໂທດ 6 ບາດ ເກົ້າແກ່ກິນ 2 ບາດ ສົມມາພໍ່ 2 ບາດ ເຈົ້າໂຄດເຜົ້ງພັນຫນຶ່ງຫມົດໂທດແລ. ພີ່ເຂີຍສູ່ນ້ອງເມຍມີຜົວໂທດຊາຍກຶປະຣາຊິກ 4 ຍິງກຶກປະຣາຊິກຕົວສະຫວັດ ນ້ອງເຂີຍຫລົ້ນພີ່ເມຍ ບໍ່ມີຜົວໃຫ້ເກົ້າແກ່ເອົາໂທດມີເງິນຄືນຮ້ອຍ ໃຫ້ເກົ້າແກ່ກິນບາດຫນຶ່ງ ສົມມາພໍ່ບາດຫນຶ່ງຫມົດໂທດແລ. ນ້ອງເຂີຍສູ່ພີ່ເມຍມີຜົວ ໂທດຊາຍກຶກປະຣາຊິກ 2 ຍິງກຶກປະຣາຊິກຕົ້ນແລ. ພໍ່ສູ່ລູກສາວບໍ່ມີຜົວ ໂທດຊາຍເປັນສັງຄາຍິງກຶກຂັບທຸກກິດ ໃຫ້ເກົ້າແກ່ກິນ 5 ບາດ ຄາຣະວະຫລັກຄຳ 2 ບາດ ໃຫ້ແມ່ 3 ບາດ ໂຄດ 2 ບາດ ຫມົດໂທດແລ. ພໍ່ສູ່ລູກມີຜົວຊາຍກຶກປະຣາຊິກຕົ້ນຍິງກຶກປະຣາຊິກຕົວສະຫວັດແລ.

ພໍ່ຄືນສີ້ມ້າໃສ່ໂທດ 3 ຕຳລຶງ. ລູກສີ້ມ້າໃສ່ໂທດ 6 ບາດ ພໍ່ຄືນສີ້ຄວາຍໃສ່ໂທດ 10 ບາດ. ລູກສີ້ຄວາຍໃສ່ໂທດ 5 ບາດ ຫລານສີ້ຄວາຍໂທດ 10 ສະຫລຶງ. ພໍ່ຄືນສີ້ຫມາໃສ່ໂທດ 6 ບາດ

ລູກສີ້ໝາໃສ່ໂທດ 3 ບາດ. ຫລານສີ້ໝາໃສ່ໂທດ 6 ສະຫລຶງ ແລ. ເຈົ້າທັງຫລາຍເປັນໂສພາພາຣະການເພິງພິຈາລະນາດູເທີ້ນ. ຜູ້ໃດກຸມສີ້ເມຍທ່ານ ຜິວ່າຜູ້ຍິງມີກຳລັງແຮງກວ່າຕົນເຮັດບໍ່ໄດ້ໃຫ້ໃສ່ ຂັບໄໝ 2 ຮ້ອຍເບ້ຍເທີ້ນ. ສ້ອຍສາຍຄຳວ່າມີດັ່ງນີ້ແລ.

ບັດນີ້ ຈັກຈາທ້ອງໝາຍສາວ ເປັນເມຍອັນຄວນໄດ້ ແລະບໍ່ຄວນໄດ້ກ່ອນແລ. ມີບຸກຄະລະຜູ້ໜຶ່ງໄປໝາຍສາວລູກຍິງ. ທ່ານໃຫ້ເຈົ້າຂຸນຜູ້ເປັນດີເອົາທໍ່ໝາກ ໄປໝາຍສາວເດືອນໜຶ່ງພໍໃຫ້ສົມມາທໍ່ໝາກ ບໍ່ເອົາແທ້ດັ່ງນັ້ນ ໃຫ້ແມ່ສາວຫາຜົວໃຫ້ລູກສາວເອົາເສຍເທີ້ນ. ຢ່າໄໝຜູ້ໝາຍວ່າສັງເທີ້ນ ອັນໜຶ່ງ ຜູ້ຊາຍຢາຍທໍ່ໝາກສາວທ່ານຕ້ານຕໍ່ພໍ່ແມ່ສາວແທ້ ທໍ່ລູກສາວບໍ່ມັກ ຫລີກໜີໄປເຮືອນທີ່ມັນມັກເພິງໃຈນັ້ນ ໃຫ້ໄໝຕາມຄອງເມືອງ ມີເງິນຮ້ອຍໜຶ່ງແລ ກໍ່ວ່າສາວຜູ້ທ່ານໄປໝາຍນັ້ນ ຫາກໂລ່ງໃຈແລະຮັບທໍ່ໝາກແລ້ວ ອັນດີຈັກມາເອົາວ່າດັ່ງນັ້ນ ເມື່ອພາຍລຸນມັນບໍ່ມັກໜີໄປສັກສູ່ທີ່ມັກ ກໍໃຫ້ໄໝ 2 ຮ້ອຍເບ້ຍ ຄ່າໝາກໃຫ້ຄືນແລ. ຜິວ່າເຈົ້າເຮືອນທີ່ມັນໄປນັ້ນ ຮູ້ວ່າທ່ານໝາຍດັ່ງນັ້ນ ໃຫ້ໄໝ 6 ບາດແລ. ຜິຫາກຮູ້ວ່າທ່ານໝາຍແລ້ວ ຫາກດົນເອົາໃຫ້ໄໝ 2 ຮ້ອຍແລ. ຜິວ່າບໍ່ມັກ ພໍ່ແມ່ຫາກກຸມເອົາໃຫ້ບໍ່ໄດ້ ສາວໜີໄປເອົາຕ່າງເຮືອນເສຍຢ່າວ່າສັງທໍ່ວ່າໃຫ້ຄືນເສຍເທີ້ນຊອບແລ. ຄັນໝາຍສາວເປັນເມຍຢ່າໃຫ້ກາຍ 3 ປີເທີ້ນ. ຜິສາວເຂົາມາມອບເງິນໄວ້ ມີຊາຍຄົນອື່ນມາລັກສູ່ເປັນກັນ ໃຫ້ຕັດໂທດໃສ່ຜູ້ຊາຍ 8 ຕຳລຶງ ຍິງ 5 ຕຳລຶງແລ. ຜູ້ໜຶ່ງໄກ່ຂ້ອຍມາເປັນເມຍແລ ມາມີລູກຍິງຊາຍ

ດອມກັນ ພໍ່ເຈົ້າເຮືອນຕາຍເສຍ ທີ່ໃຫ້ເອົາຂາແມ່ລູກອອກເປັນໄທ ແລ. ເຂົ້າຂອງທັງຫລາຍ ຜິວ່າໂອກາດກໍໃຫ້ເທົ່າໃດ ຈຶ່ງໄດ້ຕາມ ຄໍາຜູ້ຕາຍສັ່ງນັ້ນແລ. ຜິວ່າດັ່ງນັ້ນ ຕາມແມ່ເຈົ້າເຮືອນເພິງໃຫ້ໄດ້ ເທົ່າໃດກໍດີ ແມ່ນບໍ່ໃຫ້ກໍບໍ່ໄດ້ແລ. ເຫດແມ່ໄດ້ເປັນໄທ ກໍເພື່ອລູກ ເທົ່ານັ້ນດາຍ ຜິວ່າບໍ່ມີລູກ ແມ່ກໍຍັງເປັນຂ້ອຍດັ່ງເກົ່າແລ ເຫດວ່າ ຜົວເມຍສ້າງດອມກັນ ກໍຈຶ່ງໄດ້ໄຖ່ເອົາມັນຜູ້ແມ່ມາເປັນເມຍບໍ່ຄວນ ໃຫ້ເພື່ອອັນແລ. ອັນໜຶ່ງຜູ້ໜຶ່ງມີເມຍ 2 ຄົນໄດ້ກ່າວຕ້ານໂອມ ເອົາທັງ 2 ຜິວ່າເມຍຫລວງກໍມີລູກ ເມຍນ້ອຍກໍມີລູກ ພໍ່ຕາຍເສຍ ຍັງທີ່ລູກຂາທັງສອງ ຂອງພໍ່ແມ່ຂາຍັງເທົ່າໃດໃຫ້ປັນເປັນ 3 ສ່ວນໆ ໜຶ່ງໃຫ້ແກ່ລູກເມຍນ້ອຍ ສອງສ່ວນໃຫ້ແກ່ລູກແມ່ຫລວງແລ ດ້ວຍແທ້ ພໍ່ຮັກຜູ້ໃດກໍໃຫ້ຕາມຜູ້ຕາຍສັ່ງນັ້ນແລ.

ບັດນີ້ ຈັກຈາເມຍ 12 ຈໍາພວກກ່ອນແລ. ຈໍາພວກໜຶ່ງຊື່ ວ່າກິຕຕິກາ ກູ້ເອົາວັດຖຸເຂົ້າຂອງເພິ່ນແລ້ວ ຫາສິ່ງໃຫ້ບໍ່ໄດ້ລວດໄຖ່ ມາເປັນເມຍ ມັນຫາກທໍາມິດສາຈານກັບດັ່ງນັ້ນ ໃຫ້ຜົວເອົາເປັນ ຂ້ອຍດັ່ງເກົ່າແລ ຊາຍໃສ່ຂັນໄຫມຄໍາກໍຊອບແລ. ທອມດັ່ງເຈົ້າຣັດສີ ລ້ຽງ ໝາຈິກຈອກຕົວໜຶ່ງ ໝາຕົວນັ້ນກໍບົວຣະບັດເຈົ້າຣັດສີດີນັກ ຣັດສີເຫັນຄຸນມັນຈຶ່ງເປົ່າໃຫ້ເປັນຄົນ ແລ້ວມັນກໍຕະເດີນໄປເຫັນລູກ ສາວພະຍາເມືອງໜຶ່ງ ມັນຈັກເອົາເປັນເມຍດັ່ງນັ້ນ ມັນກໍກົວພະຍາ ຈະຖາມຫາໂຄດວົງມັນໆ ຈຶ່ງຄະນຶງໃນໃຈມັນວ່າ ເຈົ້າຣັດສີເປັນພໍ່ ມັນໆກໍກົວເຈົ້າຣັດສີວ່າມັນເປັນໝາ ຈຶ່ງຄຶນເມືອວ່າຈັກຂ້າເຈົ້າຣັດສີ ເສຍແລ້ວຈຶ່ງຊິເອົາເປັນເມຍແລ ວ່າດັ່ງນັ້ນເຈົ້າຣັດສີກະສ່ອງເຫັນ

ດ້ວຍຕາທິບແຫ່ງຕົນແລ ເຈົ້າຣັດສີກໍເລົ່າໃຫ້ເປັນຫມາ ດັ່ງເກົ່າຫັ້ນແລ. ເຫດວ່າຫາຄຸນບໍ່ໄດ້ແລ. ມັນຜູ້ນັ້ນກໍເປັນຂ້ອຍ ດັ່ງເກົ່າຊອບແລ ເມຍ 12 ຈໍາພວກນັ້ນຊື່ວ່າ ສັນທະວາສີນີແລ ຍັງມີຊາຍຜູ້ຫນຶ່ງໄປຊູເອົາຍິງນັ້ນ ມັນກໍທໍາມິດສາຈານກັບດັ່ງນັ້ນ ໃຫ້ໃສ່ຂັນໄຫມ 5 ບາດແລ. ຜິວ່າຊາຍຫນີຈາກຍິງນັ້ນມັນກະທໍາມິແລ. ຫມົດທໍ່ນີ້ແລເຈົ້າເຮີຍ.

(ສ້ອຍສາຍຄໍາ ສະຫມັນປາຕິໂມກ ມີ 37 ໃບປາຍຫນ້າປາຍແກວກ່ອງ. ຫນັງສືຂະຫນັບນໍ້າໂມງສ້າງເອົາໄວ້ ທອມໃນທອມນອກແລເຈົ້າເຮີຍ. ສັງກຣາດຣາຊາໄດ້ 1233 ຕົວ ປີມະແມ ຕີນີສົກເດືອນ 10 ແຮມ 5 ຄໍ່າ ວັນ 2 ມື້ເປີກສັນຂະຫນັບນັ້ນ ທັມມະວົງສາ ບັນຍາລິກຂິຕະ ຂຽນຫນັງສື ສ້ອຍສາຍຄໍາແລ ສະຫມັນປາຕິໂມກຂະໄວ້ເປັນອັນຫມັ້ນຄົງວຸດທິ ມີໄຊຊະນະແພ້ມານ 5 ປະການແລເຈົ້າເຮີຍ).

